

# ການໄຕ່ຕອງກ່ຽວກັບ ຊີວິດແຫ່ງຈິດວິນຍານ



ສະຖາບັນຣູຮີ





ເຫຼັ້ມ 1

# ການໄຕ່ຕອງກ່ຽວກັບ
# ຊີວິດແຫ່ງຈິດວິນຍານ

ສະຖາບັນຣູຣິ

**ບັນດາປຶ້ມທີ່ຢູ່ໃນຊຸດ:**

ທາງລຸ່ມນີ້ແມ່ນລາຍຊື່ປຶ້ມໃນຊຸດທີ່ມີຢູ່ໃນປະຈຸບັນ ຊຶ່ງໄດ້ຮັບການອອກແບບໂດຍສະຖາບັນຣູຮີ. ປຶ້ມເຫຼົ່ານີ້ແມ່ນມີຄວາມຕັ້ງໃຈວ່າຈະຖືກນຳໃຊ້ເປັນຫຼັກສູດຫຼັກ ໃນຄວາມພະຍາຍາມທີ່ເປັນລະບົບເພື່ອຍົກສູງຄວາມອາດສາມາດຂອງຊາວໜຸ່ມ ແລະ ຜູ້ໃຫຍ່ທີ່ຮັບໃຊ້ຊຸມຊົນຂອງຕົນ. ທາງສະຖາບັນຣູຮີກຳລັງພັດທະນາຊຸດຫຼັກສູດແຕກອອກຈາກປຶ້ມຫົວທີສາມ ໃນຊຸດປຶ້ມສຳລັບການຝຶກອົບຮົມຄູສອນຊັ້ນຮຽນເດັກບາຮາຍ, ແລະຊຸດປຶ້ມອີກຊຸດໜຶ່ງຈາກປຶ້ມຫົວທີ 5 ເພື່ອເພີ່ມຈຳນວນຜູ້ຊຸກຍູ້ກຸ່ມເຍົາວະຊົນ. ສິ່ງເຫຼົ່ານີ້ໄດ້ຮັບການບົ່ງຊີ້ຄືກັນຢູ່ໃນລາຍການຂ້າງລຸ່ມນີ້. ຂໍໃຫ້ຈົດຈຳໄວ້ວ່າລາຍການຂ້າງລຸ່ມອາດຈະຜ່ານການປ່ຽນແປງ ອີງຕາມປະສົບການດ້ານຄວາມກ້າວໜ້າຈາກພາກສະໜາມ, ແລະ ຫົວຂໍ້ສິ່ງໃໝ່ໆຈະໄດ້ຮັບການເພີ່ມພູນໃນຈຳນວນທີ່ເພີ່ມຂຶ້ນຂອງອົງປະກອບຕ່າງໆໃນຫຼັກສູດ ຊຶ່ງຢູ່ພາຍໃຕ້ການພັດທະນາທີ່ດຳເນີນໄປຮອດຂັ້ນຕອນທີ່ຫຼັກສູດດັ່ງກ່າວສາມາດສ້າງໃຫ້ມີໄວ້ຢ່າງກວ້າງຂວາງ.

| | |
|---|---|
| ປຶ້ມຫົວທີ 1: | ການໄຕ່ຕອງກ່ຽວກັບຊີວິດແຫ່ງຈິດວິນຍານ |
| ປຶ້ມຫົວທີ 2: | ການລຸກຂຶ້ນມາຮັບໃຊ້ |
| ປຶ້ມຫົວທີ 3: | ການສອນຊັ້ນຮຽນເດັກນ້ອຍ, ລະດັບທີ 1 |
| | ການສອນຊັ້ນຮຽນເດັກນ້ອຍ, ລະດັບທີ 2 (ຫຼັກສູດທີເຊື່ອມໂຍງ) |
| | ການສອນຊັ້ນຮຽນເດັກນ້ອຍ, ລະດັບທີ 3 (ຫຼັກສູດທີເຊື່ອມໂຍງ) |
| | ການສອນຊັ້ນຮຽນເດັກນ້ອຍ, ລະດັບທີ 4 (ຫຼັກສູດທີເຊື່ອມໂຍງ) |
| ປຶ້ມຫົວທີ 4: | ການປະກົດຂອງພຣະສາສະດາຄູ່ |
| ປຶ້ມຫົວທີ 5: | ການປົດປ່ອຍພະລັງຂອງເຍົາວະຊົນ |
| | ການລິເລີ່ມແຮງບັນດານໃຈ: ຫຼັກສູດທີ່ເຊື່ອມໂຍງຂັ້ນທຳອິດຂອງປຶ້ມຫົວທີ 5 |
| | ການຂະຫຍາຍວົງກວ້າງ: ຫຼັກສູດທີ່ເຊື່ອມໂຍງຂັ້ນທີສອງຂອງປຶ້ມຫົວທີ 5 |
| ປຶ້ມຫົວທີ 6: | ການເຜີຍແຜ່ສາສະໜາ |
| ປຶ້ມຫົວທີ 7: | ການຍ່າງກ້າວໄປດ້ວຍກັນໃນເສັ້ນທາງແຫ່ງການຮັບໃຊ້ |
| ປຶ້ມຫົວທີ 8: | ພຣະປະຕິນຍາຂອງພຣະບາຮາອຸລລາຫ໌ |
| ປຶ້ມຫົວທີ 9: | ການຮັບຮູ້ມຸມມອງທາງປະຫວັດສາດ |
| ປຶ້ມຫົວທີ 10: | ການສ້າງຊຸມຊົນທີ່ມີຊີວິດຊີວາ |
| ປຶ້ມຫົວທີ 11: | ປັດໃຈທາງດ້ານວັດຖຸ |
| ປຶ້ມຫົວທີ 12: | (ກຳລັງຈະມາເຖິງ) |
| ປຶ້ມຫົວທີ 13: | ການມີສ່ວນຮ່ວມກັບພຶດຕິກຳທາງສັງຄົມ |
| ປຶ້ມຫົວທີ 14: | (ກຳລັງຈະມາເຖິງ) |

Copyright © 2019, 2021 by the Ruhi Foundation, Colombia
All rights reserved. Edition 4.1.3.PE published in August 2021
Printed in Laos

Originally published in Spanish as *Reflexiones sobre la vida del espíritu*
Copyright © 1987, 1995, 2008, 2020 by the Ruhi Foundation, Colombia
ISBN 978-958-59880-3-3

Permission for a limited printing of this book in Lao has been granted to the Spiritual Assembly of the Bahá'ís of Lao PDR by the Ruhi Institute.

Ruhi Institute
Cali, Colombia;
Email: instituto@ruhi.org
Website: www.ruhi.org

Spiritual Assembly of the Bahais of Lao PDR
Nonsavanh Village, Saysettha District,
Vientiane Capital, Lao PDR;
Tel: +856 21 216996
Email: nsa@bahailao.org
Website: www.bahailao.org

# ສາລະບານ


ຂໍ້ຄິດບາງປະການສຳລັບຜູ້ອຳນວຍຄວາມສະດວກ .......................................... v

ການທຳຄວາມເຂົ້າໃຈກ່ຽວກັບພຣະທັມມະລິຂິດບາຮາຍ...................................... 1

ບົດອະທິດຖານ.......................................................................... 17

ຊີວິດ ແລະ ຄວາມຕາຍ ..................................................................... 35

# ຂໍ້ຄິດບາງປະການສຳລັບຜູ້ອຳນວຍຄວາມສະດວກ

ຈຳນວນທ້ອງຖິ່ນທີ່ມີຜູ້ສຶກສາກ່ຽວກັບ *ການໄຕ່ຕອງຊີວິດຂອງຈິດວິນຍານ*, ຊຶ່ງເປັນຫຼັກສູດເຫຼັ້ມທຳອິດໃນຫຼັກສູດທີ່ຈັດຂຶ້ນໂດຍສະຖາບັນຣູຮີນັ້ນ, ໄດ້ຮັບການສຶກສາຢູ່ທົ່ວໂລກເພີ່ມຂຶ້ນເລື້ອຍໆມາເປັນເວລາຫຼາຍປີແລ້ວ. ໃນກໍລະນີສ່ວນໃຫຍ່ແລ້ວ, ເນື້ອຫາຂອງຫຼັກສູດຈະຖືກອ່ານ ແລະ ອະພິປາຍກັນໂດຍກຸ່ມເພື່ອນ, ທີ່ອາດລວມຕົວກັນເປັນກຸ່ມການສຶກສາທີ່ພົບກັນເປັນປະຈຳ, ອາດເປັນຜູ້ທີ່ມາລວມຕົວກັນໃນການລົມນະລົງເພື່ອຈັດການສຶກສາຢ່າງເຂັ້ມຂົ້ນ, ຫຼືອາດລວມຕົວກັນໃນຄ້າຍໃນຊ່ວງຍຸດພາກຮຽນ. ບໍ່ວ່າຈະເປັນໃນໂອກາດໃດ, ສະມາຊິກໜຶ່ງຄົນໃນກຸ່ມຈະທຳໜ້າທີ່ເປັນຜູ້ອຳນວຍຄວາມສະດວກໃນການຮຽນຮູ້ (ຕິວເຕີ). ຄວາມສຳພັນລະຫວ່າງຜູ້ອຳນວຍຄວາມສະດວກໃນການຮຽນຮູ້ ກັບຜູ້ເຂົ້າຮ່ວມການສຶກສາຄົນອື່ນໆ ບໍ່ແມ່ນຄວາມສຳພັນແບບຄູກັບນັກຮຽນ; ທຸກຄົນມີສ່ວນຮ່ວມຢ່າງມີສະຕິ ໃນຂະບວນການທີ່ທຸກຄົນສະ ແຫວງຫາທີ່ຈະຮຽນຮູ້. ແຕ່ຕິວເຕີກໍບໍ່ໄດ້ເປັນຜູ້ອຳນວຍຄວາມສະດວກທີ່ຢຶດຕິດ ແລະ ບໍ່ເພີກເສີຍໃນການຕອບບົດສົນທະນາ. ຈາກການທີ່ໄດ້ສຶກສາຈົນຈົບຫຼັກສູດຕ່າງໆໃນລຳດັບຫຼັກຂອງສະຖາບັນມາໃນຈຳນວນທີ່ຫຼາຍພຽງພໍ ແລະ ໄດ້ປະຕິບັດພາລະກິດການຮັບໃຊ້ຕາມທີ່ຫຼັກສູດເຫຼົ່ານັ້ນສົ່ງເສີມໃຫ້ເຮັດມາຫຼາຍພໍສົມຄວນແລ້ວ ຜູ້ທີ່ເປັນຜູ້ອຳນວຍຄວາມສະດວກກໍຈະສາມາດຊ່ວຍເຫຼືອສະມາຊິກທຸກຄົນໃນກຸ່ມໃຫ້ບັນລຸວັດຖຸປະສົງຂອງເອກະສານຫຼັກສູດທີ່ກຳລັງສຶກສາຢູ່. ຜູ້ທີ່ເຮັດໜ້າທີ່ເປັນຜູ້ອຳນວຍຄວາມສະດວກຂອງເຫຼັ້ມ 1 ອາດພົບວ່າເປັນສິ່ງທີ່ມີປະໂຫຍດ ທີ່ຈະທົບທວນແນວຄິດທີ່ນຳສະເໜີຢູ່ໃນບົດນຳນີ້ເປັນບາງຄັ້ງບາງຄາວ.

ຜູ້ເຂົ້າຮ່ວມສຶກສາທົ່ວໂລກເຂົ້າມາສຶກສາຫຼັກສູດການຝຶກອົບຮົມເຫຼັ້ມທຳອິດ ຈາກພູມຫຼັງທີ່ຫຼາກຫຼາຍ. ບາງຄົນເປັນສະມາຊິກຂອງຊຸມຊົນບາຮາຍແລ້ວ ແລະ ຫວັງຈະເພີ່ມຂີດຄວາມສາມາດໃນການຮັບໃຊ້ສາສະໜາທີ່ພວກເຂົາຍອມຮັບ. ຄົນອື່ນໆພິຈາລະນາວ່າຫຼັກສູດເປັນຈຸດເລີ່ມຕົ້ນຂອງການຄົ້ນຫາກ່ຽວກັບບາຮາຍໃນຖານະທີ່ເປັນສາສະໜາ. ໃນຂະນະທີ່ຍັງມີຄົນອື່ນໆຖືກດຶງດູດໃຫ້ມີຄວາມສົນໃຈຕໍ່ອຸດົມການຕ່າງໆຂອງບາຮາຍ ແລະ ປາດຖະໜາທີ່ຈະທຳຄວາມຄຸ້ນເຄີຍກັບເປົ້າໝາຍ ແລະ ຄວາມພະຍາຍາມຕ່າງໆຂອງຊຸມຊົນ. ແລະ ກໍມີຄົນໄວໜຸ່ມຈຳນວນຫຼາຍຂຶ້ນເລື້ອຍໆ ໂດຍສະເພາະຜູ້ທີ່ຕ້ອງການພັດທະນາຂີດຄວາມສາມາດໃນການຮັບໃຊ້ສັງຄົມ, ຊຶ່ງຫຼາຍຄັ້ງເປັນຜູ້ທີ່ເຄີຍຮ່ວມກິດຈະກຳໃນໂຄງການໃດໜຶ່ງທີ່ສະໜັບສະໜູນໂດຍຊຸມຊົນບາຮາຍ, ແລ້ວເຂົ້າມາສຶກສາຫຼັກສູດເຫຼັ້ມໜຶ່ງນີ້ເປັນບາດກ້າວທຳອິດ.

ຈາກຈຸດເລີ່ມຕົ້ນ, ຄວນເປັນສິ່ງທີ່ຊັດເຈນສຳລັບຜູ້ເຂົ້າຮ່ວມການສຶກສາວ່າຫຼັກສູດຂອງສະຖາບັນຣູຮີວາງແນວທາງໄວ້ໃນເສັ້ນທາງຂອງການຮັບໃຊ້ມະນຸດຊາດ, ຊຶ່ງເປັນເສັ້ນທາງທີ່ເຮົາແຕ່ລະຄົນຈະເດີນໄປຕາມຈັງຫວະຂອງເຮົາເອງ, ໂດຍໃຫ້ຄວາມຊ່ວຍເຫຼືອແກ່ຜູ້ອື່ນ ແລະ ໄດ້ຮັບການຊ່ວຍເຫຼືອຈາກຜູ້ອື່ນ. ການເດີນໄປຕາມເສັ້ນທາງນີ້ບົ່ງບອກເຖິງການສະແຫວງຫາ ທີ່ຈະບັນລຸສູ່ຈຸດປະສົງທາງດ້ານສີລະທັມສອງປະການ: ເພື່ອເອົາໃຈໃສ່ຕໍ່ການຈະເລີນເຕີບໂຕທາງຈິດວິນຍານ ແລະ ສະຕິປັນຍາຂອງຕົນ

ເອງ ແລະ ເພື່ອສະໜັບສະໜູນການປ່ຽນແປງຂອງສັງຄົມ. ຄວາມຈະເລີນກ້າວໜ້າເທິງຫົນທາງນີ້ ແມ່ນກ່ຽວຂ້ອງກັບການພັດທະນາຄວາມອາດສາມາດຈຳນວນໜຶ່ງທີ່ຕ້ອງມີຄວາມເຂົ້າໃຈ ແລະ ຄວາມຮູ້, ຄຸນລັກສະນະທາງທັມ ແລະ ທັດສະນະຄະຕິອັນໜ້າສັນລະເສີນ, ລວມເຖິງຄວາມສາມາດ ແລະ ທັກສະຈຳນວນຫຼາຍ. ແຫຼ່ງຄວາມຮູ້ທີ່ຫຼັກສູດຂອງສະຖາບັນນຳມາໃຊ້ນັ້ນ, ດ້ານໜຶ່ງມາຈາກຄຳສອນຂອງສາສະໜາບາຮາຍ, ແລະ ອີກດ້ານໜຶ່ງມາຈາກປະສົບການທີ່ສະສົມເພີ່ມພູນຂຶ້ນຂອງຊຸມຊົນບາຮາຍທົ່ວໂລກໃນການເສີມສ້າງອາລິຍະທັມທາງວັດຖຸ ແລະ ທາງຈິດວິນຍານ. ແຮງບັນດານໃຈທີ່ສະຖາບັນຣູຮີໄດ້ຮັບນັ້ນມາຈາກວິໄສທັດຂອງພຣະບາຮາອຸລລາຫ໌ກ່ຽວກັບຕົວບຸກຄົນທີ່ເຮົາສາມາດເປັນໄດ້ ແລະ ກ່ຽວກັບອາລິຍະທັມທີ່ເຮົາສາມາດສ້າງຂຶ້ນມາໄດ້. ເປັນສິ່ງທີ່ສັນນິຖານວ່າຜູ້ເຂົ້າຮ່ວມສຶກສາທັງໝົດ ຊຶ່ງເປັນອິດສະຫຼະຈາກພູມຫຼັງ, ຈະເປີດໃຈເອົາຮັບວິໄສທັດນີ້ ຊຶ່ງເປັນສິ່ງທີ່ຊັດເຈນຢູ່ໃນທຸກພາກຂອງຫຼັກສູດທຸກເຫຼັ້ມ.

ໃນໂລກທີ່ລັດທິ ແລະ ອຸດົມການທັງຫຼາຍເຕັມໃຈທີ່ຈະໃຊ້ວິທີການໃດໆກໍຕາມທີ່ເປັນໄປໄດ້ເພື່ອຈະໄດ້ຜູ້ເຂົ້າມາເປັນພັກພວກ, ບາງຄົນທີ່ບໍ່ຄຸ້ນເຄີຍກັບສາສະໜາບາຮາຍ ອາດມີຄຳຖາມຢ່າງຈິງໃຈກ່ຽວກັບຄວາມຕັ້ງໃຈຂອງສະຖາບັນຣູຮີ, ຄຳຖາມທີ່ສະດຸດຕາທີ່ສຸດ ເຊັ່ນ: "ຂ້ອຍກຳລັງຖືກຂໍໃຫ້ປ່ຽນສາສະໜາຫຼືບໍ່?" ຫຼື : "ຂ້ອຍກຳລັງຖືກຂໍໃຫ້ເຂົ້າຮ່ວມສາສະໜາຫຼືບໍ່?" ຄຳຖາມດັ່ງກ່າວເປີດໂອກາດໃຫ້ຜູ້ອຳນວຍຄວາມສະດວກອະທິບາຍຈຸດປະສົງຕາມລຳດັບ ຂອງຫຼັກສູດຕາມທີ່ອະທິບາຍໄວ້ຂ້າງຕົ້ນ. ຜູ້ອຳນວຍຄວາມສະດວກອາດຕ້ອງການທີ່ຈະກ່າວເສີມວ່າ ໃນຂະນະທີ່ເປັນເລື່ອງທຳມະດາທີ່ບາຮາຍຈະມີຄວາມກະຕືລືລົ້ນ ທີ່ຈະເຫັນເພື່ອນຂອງພວກເຂົາເຂົ້າມາຮ່ວມກັບຊຸມຊົນ, ຄຳສອນຂອງພວກເຂົາ, ຫ້າມບໍ່ໃຫ້ພວກເຂົາໄປໂນ້ມນ້າວໃຫ້ຜູ້ອື່ນປ່ຽນສາສະໜາ. ການເດີນໄປເທິງຫົນທາງແຫ່ງການຮັບໃຊ້ທີ່ເປີດທາງຂຶ້ນ ໂດຍຫຼັກສູດການຝຶກອົບຮົມທັງຫຼາຍຮຽກຮ້ອງໃຫ້ມີການທຳຄວາມເຂົ້າໃຈ ໃນລະດັບທີ່ເລິກເຊິ່ງຍິ່ງຂຶ້ນກ່ຽວກັບຄຳສອນຂອງ ພຣະບາຮາອຸລລາຫ໌, ຊຶ່ງເນື້ອຫາຂອງຫຼັກສູດພະຍາຍາມທີ່ຈະອະທິບາຍຢ່າງເປັນລະບົບ ໂດຍບໍ່ມີຄວາມຄຸມເຄືອໃດໆ; ການຍອມຮັບ ແລະ ຄວາມສັດທາເປັນເລື່ອງທີ່ແຕ່ລະບຸກຄົນຈະໄຕ່ຕອງຢ່າງອິດສະຫຼະ ແລະ ໂດຍປາສະຈາກແຮງກົດດັນ.

ດັ່ງນັ້ນ, ຈຶ່ງບໍ່ເປັນທີ່ໜ້າແປກໃຈເລີຍທີ່ຫຼັກສູດເຫຼັ້ມທຳອິດ ຈະເລີ່ມຕົ້ນດ້ວຍປະເດັນຄຳຖາມກ່ຽວກັບການທຳຄວາມເຂົ້າໃຈ ຊຶ່ງເປັນຫົວໃຈສຳຄັນຂອງຫຼັກສູດທັງໝົດໃນລຳດັບຫຼັກສູດ. ການອ່ານຂໍ້ຄວາມຈາກພຣະທັມມະລິຂິດສັກສິດນັ້ນ, ບໍ່ຄືກັບການອ່ານໜັງສືຫຼາຍພັນໜ້າ ທີ່ບຸກຄົນໃດຄົນໜຶ່ງເຄີຍພົບເຫັນມາໃນ ຊີວິດຂອງຕົນ ແລະ ພາກ "ການທຳຄວາມເຂົ້າໃຈກ່ຽວກັບພຣະທັມມະລິຂິດບາຮາຍ", ພະຍາຍາມທີ່ຈະປູກຝັງນິດໄສໃນການອ່ານຂໍ້ຄວາມຈາກພຣະທັມມະສັກສິດທຸກວັນ ແລະ ທຳສະມາທິໄຕ່ຕອງຄວາມໝາຍຂອງຂໍ້ຄວາມເຫຼົ່ານັ້ນ ຊຶ່ງເປັນນິດໄສທີ່ຈະຊ່ວຍຜູ້ເຂົ້າຮ່ວມສຶກສາໄດ້ຢ່າງຫຼວງຫຼາຍໃນເວລາທີ່ພວກເຂົາເລີ່ມດຳເນີນການໄປໃນຫົນທາງແຫ່ງການຮັບໃຊ້. ເພື່ອທີ່ຈະຊ່ວຍນຳທາງໃຫ້ແກ່ຜູ້ເຂົ້າຮ່ວມສຶກສາໃນການສຶກສາຂໍ້ຄວາມຈາກພຣະທັມມະລິຂິດນີ້, ຜູ້ອຳນວຍຄວາມສະດວກຕ້ອງໃຊ້ຄວາມຄິດໃຫ້ຫຼາຍກ່ຽວກັບເລື່ອງຂອງການທຳຄວາມເຂົ້າໃຈ.

ທັມມະລິຂິດບາຮາຍມີສັດຈະທັມທາງຈິດວິນຍານທີ່ເລິກເຊິ່ງ ແລະ ເຖິງແມ່ນວ່າພວກເຮົາຈະພະຍາຍາມພັດທະນາໃຫ້ມີຄວາມເຂົ້າໃຈຄວາມໝາຍທີ່ບໍ່ມີທີ່ສິ້ນສຸດ ຂອງພຣະທັມມະລິຂິດເຫຼົ່ານີ້ໃຫ້ຫຼາຍຂຶ້ນ, ພວກເຮົາກໍຮູ້ດີວ່າພວກເຮົາບໍ່ສາມາດໄປເຖິງຈຸດສິ້ນສຸດທີ່ຊັດເຈນຂອງຄວາມໝາຍເຫຼົ່ານັ້ນໄດ້. ໂດຍທົ່ວໄປພວກເຮົາເຂົ້າໃຈໃນຂັ້ນພື້ນຖານ ຂອງຄວາມໝາຍທີ່ເຫັນໄດ້ຈະແຈ້ງໃນທັນທີ ຂອງຂໍ້ຄວາມຈາກທັມມະລິຂິດເມື່ອອ່ານເປັນຄັ້ງທໍາອິດ, ແລະ ຕອນທີ 1 ຂອງພາກນີ້ ກໍແມ່ນຈຸດນີ້ຊຶ່ງເປັນຈຸດເລີ່ມຕົ້ນ. ດັ່ງນັ້ນ, ຫຼັງອ່ານຂໍ້ຄວາມ “ຄວາມຈະເລີນຂອງໂລກຈະບັນລຸຜົນໄດ້ ໂດຍອາໄສການກະທໍາທີ່ບໍລິສຸດ ແລະ ດີງາມ, ຄວາມປະພຶດທີ່ຈົບງາມ ແລະ ໜ້າສັນລະເສີນ,” ຜູ້ເຂົ້າຮ່ວມສຶກສາຈະຖືກຖາມວ່າ “ຄວາມຈະເລີນຂອງໂລກຈະບັນລຸຜົນໄດ້ຢ່າງໃດ?” ເມື່ອເບິ່ງຜ່ານຄໍາຖາມ ແລະ ແບບຝຶກຫັດ ໃນລັກສະນະນີ້ອາດເບິ່ງຄືວ່າງ່າຍເກີນໄປ. ແຕ່ຈາກປະສົບການທີ່ມີມາເປັນເວລາຫຼາຍປີ, ເບິ່ງຄືວ່າຈະເປັນເຫດຜົນສໍາລັບການຕັດສິນໃຈຂອງສະຖາບັນທີ່ຈະເລີ່ມຕົ້ນດ້ວຍວິທີນີ້. ເຮົາທຸກຄົນຕ້ອງໄດ້ຮັບການເຕືອນວ່າ ໃນການຮີບຄົ້ນຫາຄວາມໝາຍທີ່ແທ້ຈິງທີ່ຢູ່ໃນຂໍ້ຄວາມທີ່ຄັດມານັ້ນ, ໃນໃຈບໍ່ຄວນມອງຂ້າມຄວາມໝາຍທີ່ເຫັນໄດ້ຢ່າງຊັດເຈນຂອງຂໍ້ຄວາມຈາກພຣະທັມມະລິຂິດນັ້ນ. ການເອົາໃຈໃສ່ຕໍ່ຄວາມເຂົ້າໃຈໃນລະດັບທໍາອິດນີ້ ຍັງພິສູດວ່າເປັນສິ່ງສໍາຄັນທີ່ຈໍາເປັນຢ່າງຍິ່ງຕໍ່ການປຶກສາຫາລືຂອງກຸ່ມ; ການເອົາໃຈໃສ່ນີ້ສ້າງຄວາມເຂັ້ມແຂງໃຫ້ແກ່ຄວາມສາມັກຄີກັນຂອງຄວາມຄິດ ຊຶ່ງເປັນສິ່ງທີ່ສາມາດບັນລຸໄດ້ຢ່າງງ່າຍດາຍ, ເມື່ອຄວາມຄິດເຫັນສ່ວນຕົວຂອງແຕ່ລະຄົນໄດ້ຖືກປ່ອຍໃຫ້ໄດ້ຮັບການສ່ອງສະຫວ່າງໂດຍພູມປັນຍາອັນສັກສິດ.

ເປັນສິ່ງທີ່ສໍາຄັນທີ່ຈະຕັ້ງຂໍ້ສັງເກດໃນທີ່ນີ້ວ່າ ການທໍາຄວາມເຂົ້າໃຈຄວາມໝາຍທີ່ເປັນໄດ້ໃນທັນທີຂອງຂໍ້ຄວາມສ່ວນໃຫຍ່ນັ້ນ ຈະບໍ່ໄດ້ຮັບປະໂຫຍດຈາກການອະພິປາຍກັນຍາວຢຽດ ກ່ຽວກັບຄໍາໆດຽວໂດຍບໍ່ໄດ້ພິຈາລະນາ ບໍລິບົດທີ່ກ່ຽວຂ້ອງນັ້ນ. ໃນບາງຄັ້ງອາດມີຄວາມຈໍາເປັນສໍາລັບກຸ່ມທີ່ຈະຄົ້ນຫາຄວາມ ໝາຍຂອງຄໍານັ້ນໃນວັດຈະນານຸກົມ. ຢ່າງໃດກໍຕາມ, ສິ່ງທີ່ອາດເປັນປະໂຫຍດຫຼາຍຂຶ້ນກໍ່ຄືການທີ່ຜູ້ເຂົ້າຮ່ວມສຶກສາຈະຮຽນຮູ້ວິທີການທີ່ຈະສະຫຼຸບຄວາມໝາຍຂອງຄໍານັ້ນຈາກບໍລິບົດຂອງປະໂຫຍກ ແລະ ຫຍໍ້ ໜ້າທັງໝົດ.

ໃນການທີ່ຄວາມເຂົ້າໃຈຈະຂະຫຍາຍອອກໄປ ນອກເໜືອຂອບເຂດຂອງຄວາມໝາຍທີ່ເຫັນໄດ້ໃນທັນທີນັ້ນ, ຕົວຢ່າງທີ່ສະແດງໃຫ້ເຫັນເຖິງການສະແດງອອກຢ່າງເປັນຮູບປະທໍາ ຂອງແນວຄວາມຄິດນັ້ນຈະເປັນສິ່ງທີ່ມີປະໂຫຍດ. ສິ່ງທີ່ຖືກນໍາມາໃຊ້ເພື່ອສິ່ງນີ້ຄືແບບຝຶກຫັດທີ່ກົງໄປກົງມາ. ຍົກຕົວຢ່າງເຊັ່ນ: ໃນຕອນທີ 2, ຜູ້ເຂົ້າຮ່ວມສຶກສາຈະໄດ້ຮັບການຂໍໃຫ້ພິຈາລະນາວ່າ, ໃນບໍລິບົດຂອງຂໍ້ຄວາມທີ່ພວກເຂົາຫາກໍອ່ານໄປມີລັກສະນະບາງຢ່າງທີ່ ໜ້າຍົກຍ້ອງຫຼືບໍ່. ໃນແບບຝຶກຫັດທີ່ຄ້າຍຄືກັນໃນຕອນທີ 4, ພວກເຂົາໄດ້ຮັບການສົ່ງເສີມໃຫ້ລະບຸຄຸນນະທັມຫ້າປະການ ແລະ ຕັດສິນໃຈວ່າຈະເປັນໄປໄດ້ຫຼືບໍ່ ທີ່ຈະໄດ້ມາຊຶ່ງຄຸນນະທັມໃດກໍຕາມໃນບັນດາຄຸນນະທັມເຫຼົ່ານັ້ນ ໂດຍປາສະຈາກວາຈາສັດ, ຊຶ່ງເປັນຄຸນນະທັມທີ່ລະບຸໄວ້ໃນພຣະທັມມະລິຂິດວ່າເປັນ “ຮາກຖານຂອງຄຸນນະທັມທັງປວງ”.

ເພື່ອໃຫ້ບັນລຸຈຸດປະສົງທີ່ວາງໄວ້ ພາກນີ້ກຳນົດໃຫ້ຕ້ອງມີລະດັບທີ່ເລິກເຊິ່ງຍິ່ງຂຶ້ນຂອງການທຳຄວາມເຂົ້າໃຈໂດຍກະຕຸ້ນໃຫ້ຜູ້ເຂົ້າຮ່ວມຄິດເຖິງຄວາມໝາຍ ທີ່ສະແດງໄວ້ຂອງຂໍ້ຄວາມທີ່ຄັດມານັ້ນ. ໃນຕອນທີ 2, ພວກເຂົາຈະຕ້ອງພິຈາລະນາວ່າຂໍ້ຄວາມ "ມີຄົນດີໃນໂລກໜ້ອຍຫຼາຍຈົນການກະທຳຂອງພວກເຂົາບໍ່ເກີດຜົນ" ເປັນຄວາມຈິງຫຼືບໍ່. ໃນທີ່ນີ້, ຄວາມມຸ່ງໝາຍບໍ່ແມ່ນພຽງແຕ່ຈະກະຕຸ້ນໃຫ້ສະແດງຄວາມຄິດເຫັນເທົ່ານັ້ນ. ຜູ້ອຳນວຍຄວາມສະດວກຕ້ອງຢຸດໄລຍະໜຶ່ງ ແລະ ຖາມເຫດຜົນສຳລັບຄຳຕອບຂອງຜູ້ເຂົ້າຮ່ວມ. ສິ່ງທີ່ກຸ່ມຄວນຈະບັນລຸກໍຄື ຂໍ້ຄວາມນັ້ນຄວນຈະຕ້ອງເປັນຄຳຕອບທີ່ຜິດເພາະເປັນຂໍ້ຄວາມທີ່ຂັດແຍ່ງກັບ ພຣະວັດຈະນະທຳອິດທີ່ຄັດມາ ຊຶ່ງບັນຈຸຢູ່ໃນເນື້ອຫາຫຼັກສູດໃນຕອນກ່ອນໜ້ານັ້ນ. ຄຳຖາມວ່າບາຣາຍອາດສາລະພາບບາບຕໍ່ຜູ້ອື່ນໄດ້ຫຼືບໍ່? ກໍ່ເປັນຕົວຢ່າງໜຶ່ງຂອງແບບຝຶກຫັດໃນລັກສະນະນີ້. ຄຳຖາມນີ້ອ້າງເຖິງຂໍ້ຫ້າມໃນຄຳສອນ ທີ່ຫ້າມການສາລະພາບບາບເພື່ອໃຫ້ເປັນຫົນທາງໃນການຫຼຸດພົ້ນຈາກບາບ, ເຖິງແມ່ນຈະບໍ່ໄດ້ຖືກກ່າວເຖິງໄວ້ຢ່າງຊັດເຈນໃນຂໍ້ຄວາມໃດໆທີ່ສຶກສາໄປແລ້ວ ກໍ່ສາມາດດຶງເອົາຄຳຕອບອອກມາໄດ້ ໂດຍການສຳຫຼວດຄວາມໝາຍຂອງຂໍ້ຄວາມທີ່ວ່າ "ຈົ່ງສຳຫຼວດຕົວເຈົ້າເອງໃນແຕ່ລະວັນກ່ອນທີ່ເຈົ້າຈະຖືກຮຽກໄປຄິດບັນຊີ".

ບໍ່ມີທາງໃດເລີຍທີ່ແບບຝຶກຫັດໃນແຕ່ລະພາກ ຈະພະຍາຍາມຄອບຄຸມຂອບຂ່າຍຂອງຄວາມໝາຍທີ່ໄດ້ຮັບການອະນຸລັກໄວ້ ໃນຂໍ້ຄວາມທີ່ກຳລັງຢູ່ໃນການພິຈາລະນານັ້ນ. ຄຳຖາມໜຶ່ງທີ່ຜູ້ອຳນວຍຄວາມສະດວກທຸກຄົນຈະຕ້ອງພິຈາລະນາຄື ຄວນຈະມີການອະທິບາຍຫຼາຍພຽງໃດສຳລັບແຕ່ລະແບບຝຶກຫັດ. ໃນຈຸດນີ້ເປັນສິ່ງທີ່ສຳຄັນທີ່ຕ້ອງຈົດຈຳໄວ້ວ່າການຍືດເວລາການພິຈາລະນາ ໂດຍການແນະນຳແນວຄວາມຄິດທີ່ກ່ຽວຂ້ອງແຕ່ບໍ່ສຳຄັນຫຼາຍປານໃດ ມັກມີແນວໂນ້ມທີ່ຈະຫຼຸດຜ່ອນປະສິດທິພາບເນື້ອຫາຂອງຫຼັກສູດລົງໄປ. ທຸກກຸ່ມຈຳເປັນຕ້ອງສ້າງຈັງຫວະຄວາມກ້າວໜ້າທີ່ສົມເຫດສົມຜົນ; ຜູ້ເຂົ້າຮ່ວມຄວນຮູ້ສຶກເຖິງຄວາມແຕກຕ່າງທີ່ຊັດເຈນວ່າ ພວກເຂົາກຳລັງກ້າວໜ້າຢ່າງຕໍ່ເນື່ອງຕາມຄວາມເປັນໄປໄດ້ຂອງຕົນເອງ. ຢ່າງໃດກໍຕາມ, ຜູ້ອຳນວຍຄວາມສະດວກຈະຕ້ອງເອົາໃຈໃສ່ຢ່າງລະມັດລະວັງ ເພື່ອບໍ່ໃຫ້ຕອນໃດຕອນໜຶ່ງຜ່ານໄປຢ່າງວ່ອງໄວ ແລະ ຜິວເຜີນໂດຍບໍ່ມີການວິເຄາະແບບຝຶກຫັດຢ່າງຮອບຄອບ, ກຸ່ມທີ່ດຳເນີນການໄປໃນລັກສະນະທີ່ພຽງແຕ່ເຕີມຄຳຕອບໃຫ້ຄົບໃນແບບຝຶກຫັດເທົ່ານັ້ນ, ມັກບໍ່ໄດ້ຜົນທີ່ຍັ້ງຢືນ.

ປະເດັນສຸດທ້າຍຂໍ້ໜຶ່ງທີ່ສົມຄວນໄດ້ຮັບການກ່າວເຖິງ: ເປັນໜ້າທີ່ຂອງຜູ້ອຳນວຍຄວາມສະດວກທີ່ຈະຕ້ອງເຮັດໃຫ້ໝັ້ນໃຈໄດ້ວ່າ ສະມາຊິກທຸກຄົນໃນກຸ່ມຍັງຄົງມີສ່ວນຮ່ວມໃນຂະບວນການຮຽນຮູ້ທີ່ໄດ້ຮັບການສະໜັບສະໜູນໂດຍເນື້ອຫາຂອງຫຼັກສູດ. ໃນການກະຕຸ້ນໃຫ້ເກີດການມີສ່ວນຮ່ວມໂດຍບໍ່ກົດດັນໃຫ້ຄົນໃດຄົນໜຶ່ງເວົ້າ, ມັກຈະເປັນຄວາມທ້າທາຍ. ສິ່ງທີ່ຄວນຮູ້ຕັ້ງແຕ່ເລີ່ມຕົ້ນທຳອິດຄືຄວາມທ້າທາຍນີ້, ມັກບໍ່ຄ່ອຍໄດ້ຮັບການຕອບສະໜອງຢ່າງເໝາະສົມ ຫາກມີການຖາມຄຳຖາມເຊັ່ນ: "ສິ່ງນີ້ມີຄວາມໝາຍຕໍ່ເຈົ້າແນວໃດ?" ຄຳຖາມປະເພດນີ້ມີແນວໂນ້ມທີ່ຈະຫຼຸດຄວາມຮູ້ ແລະ ຄວາມຈິງລົງໄປຢູ່

ໃນລະດັບຂອງຄວາມຄິດເຫັນ ແລະ ເຮັດໃຫ້ກາຍເປັນເລື່ອງຍາກທີ່ຈະສ້າງບັນຍາກາດທີ່ຊ່ວຍໃຫ້ການປຶກສາຫາລືລະຫວ່າງສະມາຊິກຂອງກຸ່ມ ກໍ່ໃຫ້ເກີດຄວາມເຂົ້າໃຈເພີ່ມເຕີມຫຼາຍຂຶ້ນ.

ໃນລັກສະນະທີ່ຄ້າຍກັບພາກທໍາອິດ, ພາກທີສອງໃນຫຼັກສູດນີ້ເປັນເລື່ອງທີ່ກ່ຽວຂ້ອງກັບລັກສະນະນິດໄສທີ່ຈໍາເປັນຕໍ່ຊີວິດດ້ານຈິດວິນຍານແມ່ນໄດ້ແກ່: ການອະທິດຖານເປັນປະຈໍາ. ແນວຄວາມຄິດກ່ຽວກັບ "ຫົນທາງແຫ່ງການຮັບໃຊ້" ເປັນສິ່ງທີ່ສະແດງໃຫ້ເຫັນຢ່າງຊັດເຈນຕັ້ງແຕ່ຕອນທໍາອິດຂອງພາກນີ້, ໂດຍແນະນໍາວ່າ ໃນການເດີນໃນຫົນທາງນີ້, ເຮົາຈະຕ້ອງຊຶມຊັບດ້ວຍຈຸດປະສົງສອງປະການ. ຜູ້ເຂົ້າຮ່ວມສຶກສາຈະວິເຄາະຂໍ້ຄວາມທີ່ຄັດມາຈາກທັມມະລິຂິດຊຸດທໍາອິດ ຊຶ່ງໃຫ້ຄວາມຮູ້ກ່ຽວກັບລັກສະນະຂອງຈຸດປະສົງນີ້ ຊຶ່ງເປັນປະເດັນສໍາຄັນທີ່ຈະມີການລົງເລິກໃນລາຍລະອຽດໃນຫຼັກສູດເຫຼັ້ມອື່ນໆໃນອະນາຄົດ.

ໂດຍການມີປະເດັນສໍາຄັນນີ້ເປັນສາກຫຼັງ ພາກທີສອງນີ້ທໍາການສໍາຫຼວດກ່ຽວກັບຄວາມສໍາຄັນຂອງການອະທິດຖານ. ພາກນີ້ໃຊ້ວິທີການຄ້າຍກັບທີ່ອະທິບາຍໄວ້ໃນຫຼາຍຫຍໍ້ໜ້າກ່ອນໜ້ານີ້. ຄໍາຖາມ ແລະ ແບບຝຶກຫັດຖືກຮຽບຮຽງຂຶ້ນມາເພື່ອຄວາມເຂົ້າໃຈກ່ຽວກັບຄວາມໝາຍ ຂອງຂໍ້ຄວາມທີ່ຄັດມາຈາກທໍາມະລິຂິດທີ່ກໍາລັງສຶກສາຢູ່. ໃນຂະນະທີ່ກຸ່ມກໍາລັງກ້າວໜ້າໄປຜ່ານເນື້ອຫາຂອງພາກນີ້, ຜູ້ອໍານວຍຄວາມສະດວກອາດຈໍາເປັນຕ້ອງກໍາຈັດຄວາມສົນໃຈ ໂດຍການວິເຄາະຄວາມຄິດທີ່ຝັງຮາກຢູ່ໃນການຕີຄວາມໝາຍ ແລະ ການປະຕິບັດຕ່າງໆໃນອະດີດ. ໃນບາງຮີດຄອງນັ້ນ, ພິທີກໍາ ແລະ ຮູບແບບຄ່ອຍໆ ເຂົ້າມາບົດບັງຄວາມສໍາຄັນຂອງສະພາວະພາຍໃນ, ແລະ ຫຼາຍຄົນເພີກເສີຍຕໍ່ຄວາມຈໍາເປັນໃນການອະທິດຖານ, ຊຶ່ງເປັນສິ່ງທີ່ມີຄວາມສໍາຄັນຢ່າງຍິ່ງສໍາລັບຈິດວິນຍານຂອງມະນຸດ ບໍ່ໜ້ອຍໄປກວ່າທີ່ອາຫານມີຄວາມສໍາຄັນຕໍ່ການບໍາລຸງຮ່າງກາຍ.

ດັ່ງນັ້ນ, ຈາກຄໍາເວົ້າຂ້າງເທິງທັງໝົດ ພາກນີ້ຈຶ່ງປາດຖະໜາທີ່ຈະປຸກໃຫ້ຜູ້ເຂົ້າຮ່ວມສຶກສາມີຄວາມປາດຖະໜາທີ່ຈະ "ສົນທະນາກັບພຣະຜູ້ເປັນເຈົ້າ" ແລະເຂົ້າໃກ້ພຣະອົງ. ໃນບັນດາແນວຄິດທີ່ກ່າວເຖິງໃນພາກນີ້ ຄືຄວາມໝາຍຂອງການເຂົ້າສູ່ສະພາວະຂອງການອະທິດຖານ, ລັກສະນະທ່າທີຂອງຈິດໃຈ ແລະ ຄວາມຄິດໃນຂະນະທີ່ພວກເຮົາອະທິດຖານ, ແລະເງື່ອນໄຂທີ່ຄວນສ້າງຂຶ້ນມາໃນສະພາບແວດລ້ອມຂອງເຮົາ, ບໍ່ວ່າເຮົາຈະຢູ່ຄົນດຽວ ຫຼື ຢູ່ຮ່ວມກັນໃນການຊຸມນຸມ. ແທ້ຈິງແລ້ວ, ຫຼັງຈາກໄດ້ໃຊ້ຄວາມພະຍາຍາມຄິດກ່ຽວກັບພະລັງຕ່າງໆ ທີ່ຖືກສ້າງຂຶ້ນມາໂດຍຜ່ານການສັກກາລະບູຊາຮ່ວມກັນ, ຜູ້ເຂົ້າຮ່ວມສຶກສາຈະຖືກຂໍໃຫ້ພິຈາລະນາກ່ຽວກັບການເປັນເຈົ້າພາບ ໃນການຈັດການຊຸມນຸມເພື່ອການສວດມົນອະທິດຖານ ແລະ ການສັກກາລະບູຊາ.

ເປັນສິ່ງທີ່ຄາດຫວັງວ່າ ການສຶກສາເນື້ອຫາພາກທີສາມຂອງຫຼັກສູດນີ້ "ຊີວິດ ແລະ ຄວາມຕາຍ" ຈະເສີມສ້າງຄວາມມຸ່ງໝັ້ນທີ່ຈະກ້າວຍ່າງໄປໃນຫົນທາງແຫ່ງການຮັບໃຊ້ ແລະ ມອບຄວາມໝາຍທີ່ເລິກ ເຊິ່ງຍິ່ງຂຶ້ນ. ການຮັບໃຊ້ໃນໂລກນີ້ເປັນທີ່ເຂົ້າໃຈໄດ້ດີທີ່ສຸດ, ໃນບໍລິບົດອັນຄົບຖ້ວນທີ່ສຸດ

ຂອງຊີວິດ, ທີ່ຂະຫຍາຍຂອບເຂດອອກໄປ ເກີນກວ່າການດໍາລົງຢູ່ໃນໂລກຂອງເຮົາ ແລະ ຍັງຄົງດໍາເນີນສືບຕໍ່ໄປຕະຫຼອດການ ເມື່ອຈິດວິນຍານຂອງເຮົາກ້າວໜ້າໄປໃນພົບຕ່າງໆຂອງພຣະຜູ້ເປັນເຈົ້າ. ໃນຂະບວນການຂອງການສຶກສາ ຊຶ່ງກົງກັນຂ້າມກັບການຝຶກອົບຮົມທາງດ້ານເຕັກນິກ, ຜູ້ເຂົ້າຮ່ວມສຶກສາຄວນເອົາໃຈໃສ່ຫຼາຍຍິ່ງຂຶ້ນກ່ຽວກັບຄວາມໝາຍ ແລະ ຄວາມສໍາຄັນຂອງສິ່ງທີ່ພວກເຂົາກໍາລັງເຮັດຢູ່. ພຽງແຕ່ຈິດສໍານຶກເຕີບໂຕຂຶ້ນ, ປະສົບການກໍຈະບົ່ງຊີ້ວ່າ ພວກເຂົາຈະພິຈາລະນາວ່າຕົນເອງນັ້ນເປັນ "ເຈົ້າການ" ທີ່ມີຄວາມກະຕືລືລົ້ນ ແລະ ຮັບຜິດຊອບຕໍ່ການຮຽນຮູ້ຂອງຕົນເອງ.

ແຕ່ລະຕອນຂອງພາກນີ້ ເລີ່ມຕົ້ນດ້ວຍຂໍ້ຄວາມທີ່ຄັດມາຈາກທັມມະລິຂິດບາຮາຍຈໍານວນໜຶ່ງເຖິງສາມຕອນ, ຕໍ່ດ້ວຍແບບຝຶກຫັດສອງສາມຊຸດ. ພາສາຂອງຂໍ້ຄວາມທີ່ຄັດມາໃນພາກນີ້ ເປັນພາສາທີ່ຕ້ອງໃຊ້ທັກສະໃນການທໍາຄວາມເຂົ້າໃຈຫຼາຍກວ່າໃນສອງພາກກ່ອນໜ້ານີ້. ແນ່ນອນວ່າບໍ່ມີຄວາມຈໍາເປັນສໍາລັບກຸ່ມທີ່ຈະຢຸດຢູ່ທີ່ຄໍາສັບຍາກໆ; ຜູ້ອໍານວຍຄວາມສະດວກຍ່ອມຈະຕ້ອງການເຮັດໃຫ້ແນ່ໃຈວ່າທຸກຄົນເຂົ້າໃຈໃນແນວຄວາມຄິດຫຼັກທີ່ກ່າວເຖິງໃນແຕ່ລະຕອນ, ຊຶ່ງເປັນສິ່ງທີ່ແບບຝຶກຫັດພະຍາຍາມດຶງອອກມາ.

ເມື່ອພິຈາລະນາເຖິງລັກສະນະຂອງຫົວຂໍ້ທີ່ສຶກສາ, ແບບຝຶກຫັດທີ່ກ່ຽວຂ້ອງກັບຕົວຢ່າງທີ່ເປັນຮູບປະທັມມີຢູ່ບໍ່ຫຼາຍ ແລະ ບໍ່ພົບເລື້ອຍໆ. ແບບຝຶກຫັດສ່ວນໃຫຍ່ມີແນວໂນ້ມທີ່ຈະປະຕິບັດໜ້າທີ່ ໃນລະດັບທີ່ເປັນນາມມະທັມ. ສິ່ງທີ່ຄວນສັງເກດຄືຄໍາຖາມບາງຂໍ້ທີ່ຢູ່ໃນແບບຝຶກຫັດ ອາດເປັນຄໍາຖາມທີ່ບໍ່ສາມາດຕອບໄດ້ຢ່າງວ່ອງໄວ ຫຼື ຕອບໄດ້ຢ່າງຊັດເຈນ. ຄໍາຖາມເຫຼົ່ານີ້ຖືກບັນຈຸໄວ້ ເພື່ອເພີ່ມຄວາມເອົາໃຈໃສ່ກ່ຽວກັບຫົວຂໍ້ນັ້ນ, ຫາກຜູ້ເຂົ້າຮ່ວມພຽງແຕ່ຄິດເຖິງຄໍາຖາມດັ່ງກ່າວ ກໍນັບໄດ້ວ່າບັນລຸວັດຖຸປະສົງຂອງການຮຽນແລ້ວ.

ຫຼາຍຕອນໃນຊ່ວງທໍາອິດຂອງຫຼັກສູດພາກນີ້ ມຸ່ງເນັ້ນໄປທີ່ຄວາມສໍາພັນລະຫວ່າງຈິດວິນຍານ ແລະ ຮ່າງກາຍ, ຊຶ່ງຮ່ວມກັນປະກອບຂຶ້ນເປັນມະນຸດ ໃນລະດັບຂອງການດໍາລົງຢູ່ນີ້. ແນວຄິດສໍາຄັນທີ່ນໍາສະເໜີເນື້ອຫາໃນພາກເຫຼົ່ານີ້ຄື ຈິດວິນຍານບໍ່ແມ່ນຕົວຕົນທາງກາຍະພາບ; ການເຊື່ອມໂຍງຂອງຈິດວິນຍານກັບຮ່າງກາຍອາດປຽບໄດ້ກັບແສງສະຫວ່າງທີ່ປະກົດເທິງແວ່ນ. ບໍ່ວ່າຝຸ່ນຈະປົກຄຸມພື້ນຜິວຫຼືແມ່ນແຕ່ການທໍາລາຍແວ່ນນັ້ນ, ໃນທີ່ສຸດກໍບໍ່ສາມາດສົ່ງຜົນກະທົບຕໍ່ຄວາມຮຸ່ງເຮືອງຂອງແສງສະຫວ່າງນັ້ນ. ຄວາມຕາຍເປັນພຽງການປ່ຽນແປງຂອງສະພາບ, ເມື່ອຄວາມເຊື່ອມໂຍງກັນລະຫວ່າງຮ່າງກາຍ ແລະ ຈິດວິນຍານແຕກສະຫຼາຍລົງ; ຫຼັງຈາກນັ້ນ ຈິດວິນຍານຈະພັດທະນາກ້າວໜ້າຕໍ່ໄປຊົ່ວນິລັນດອນ ເພື່ອມຸ່ງໄປຫາພຣະຜູ້ສ້າງຂອງຕົນ.

ຈາກນັ້ນໃນເນື້ອຫາພາກນີ້ຫັນໄປພິຈາລະນາຄໍາຖາມກ່ຽວກັບຈຸດປະສົງຂອງຊີວິດ- ເພື່ອຮູ້ຈັກພຣະຜູ້ເປັນເຈົ້າ ແລະ ເພື່ອບັນລຸສູ່ທີ່ປະທັບຂອງພຣະອົງ. ການອະທິບາຍໃນພາກນີ້ມຸ່ງຄວາມສົນໃຈໄປທີ່ປະເດັນສໍາຄັນກວ້າງໆສອງປະເດັນ. ປະເດັນທໍາອິດຄືຈຸດປະສົງຂອງຊີວິດຂອງເຮົາໃນໂລກນີ້, ແລະ

ປະເດັນທີສອງຄືການເດີນທາງຂອງຈິດວິນຍານພາຍຫຼັງຄວາມຕາຍ. ຈິດວິນຍານເປັນສັນຍາລັກຂອງພຣະຜູ້ເປັນເຈົ້າ ແລະ ສາມາດສະທ້ອນພຣະນາມ ແລະ ຄຸນລັກສະນະທັງໝົດຂອງພຣະອົງ. ແຕ່ສັກກະຍະພາບທີ່ຢູ່ພາຍໃນມະນຸດນັ້ນແຝງຊ້ອນຢູ່; ສັກກະຍະພາບນີ້ຈະສາມາດພັດທະນາໄດ້ ດ້ວຍຄວາມຊ່ວຍເຫຼືອຈາກພຣະສາສະດາຂອງພຣະຜູ້ເປັນເຈົ້າເທົ່ານັ້ນ; ບັນດາພຣະຜູ້ຊົງຄວາມສັກສິດເຫຼົ່ານີ້ຈະຊົງສະເດັດມາເປັນໄລຍະໆ ເພື່ອນໍາທາງໃຫ້ແກ່ມະນຸດຊາດ. ສົມບັດທີ່ເຊື່ອງຊ້ອນຢູ່ພາຍໃນຕົວເຮົາ ຈະສາມາດຖືກເປີດເຜີຍອອກມາໄດ້ໂດຍຜ່ານທາງການສຶກສາທາງຈິດວິນຍານ ທີ່ພຣະຜູ້ສະແດງທັມຂອງພຣະຜູ້ເປັນເຈົ້າຊົງປະທານໃຫ້.

ສໍາລັບການເດີນທາງຂອງຈິດວິນຍານພາຍຫຼັງຄວາມຕາຍ, ມີການວາງລໍາດັບຂອງແນວຄວາມຄິດເພື່ອໃຫ້ຜູ້ເຂົ້າຮ່ວມສຶກສາໄຕ່ຕອງດັ່ງຕໍ່ໄປນີ້: ຜູ້ທີ່ຈິງຮັກພັກດີຕໍ່ພຣະຜູ້ເປັນເຈົ້າຈະບັນລຸເຖິງຄວາມສຸກທີ່ແທ້ຈິງ; ບໍ່ມີໃຜໃນໝູ່ພວກເຮົາຈະສາມາດຢັ່ງຮູ້ເຖິງຈຸດຈົບຂອງພວກເຮົາ; ດັ່ງນັ້ນ, ພວກເຮົາຈຶ່ງຄວນໃຫ້ອະໄພຊຶ່ງກັນແລະກັນ ແລະ ບໍ່ໃຫ້ຮູ້ສຶກວ່າຕົນເໜືອກວ່າຜູ້ອື່ນ; ກໍຄືກັບໃນໂລກນີ້, ໃນໂລກໜ້າຈິດວິນຍານຈະກ້າວໜ້າຕໍ່ໄປ ແລະ ຄຸນລັກສະນະທາງທັມທີ່ເຮົາພັດທະນາໃນໂລກນີ້ຈະສະໜັບສະໜູນ ແລະ ຊ່ວຍເຫຼືອເຮົາໃນໂລກໜ້າ; ໃນພົບໜ້າເຮົາຈະຍັງຈົດຈໍາບັນ ດາຄົນທີ່ເຮົາຮັກໄດ້ ແລະ ຈະຈົດຈໍາຊີວິດຂອງພວກເຮົາໃນໂລກນີ້ ແລະ ຈະເພີດເພີນໄປກັບມິດຕະພາບທີ່ມີຕໍ່ບັນດາດວງວິນຍານສັກສິດ ແລະ ບໍລິສຸດທັງຫຼາຍ.

ພາກທີສາມນີ້ຈົບລົງດ້ວຍຂໍ້ຄວາມທີ່ຄັດມາຈາກພຣະທັມມະລິຂິດຂອງພຣະບາຮາອຸລລາຫ໌ ຊຶ່ງໃຫ້ຄວາມໝັ້ນໃຈແກ່ເຮົາກ່ຽວກັບຜົນປະໂຫຍດທັງຫຼາຍຂອງໂລກໜ້າ ແລະ ເຕືອນເຮົາວ່າຢ່າຍອມໃຫ້ການປ່ຽນແປງ ແລະ ຄວາມເປັນໄປໄດ້ຕ່າງໆ ໃນຊີວິດນີ້ເຮັດໃຫ້ພວກເຮົາເສົ້າໂສກ. ຈາກນັ້ນຜູ້ເຂົ້າຮ່ວມສຶກສາຈະຖືກຂໍໃຫ້ໄຕ່ຕອງກ່ຽວກັບຄວາມໝາຍທີ່ຊ້ອນຢູ່ ໃນສິ່ງທີ່ພວກເຂົາສຶກສາສໍາລັບຊີວິດຂອງພວກເຂົາ.



# ການທຳຄວາມເຂົ້າໃຈ ໃນພຣະທັມມະລິຂິດບາຣາຍ

## ຈຸດປະສົງ

ເພື່ອເສີມສ້າງນິດໄສໃນການອ່ານຂໍ້ຄວາມ
ຈາກພຣະທັມມະລິຂິດສັກສິດທຸກວັນ ແລະ
ໄຕ່ຕອງຄວາມໝາຍຂອງພຣະທັມມະລິຂິດນັ້ນ

## ຕອນທີ 1

ຈຸດປະສົງຂອງພາກນີ້ຄື ເພື່ອຊ່ວຍເຈົ້າໃນການພັດທະນາ ແລະ ເສີມສ້າງນິດໄສການອ່ານຂໍ້ຄວາມຈາກ ທັມມະລິຂິດສັກສິດທຸກວັນ ແລະ ໄຕ່ຕອງກ່ຽວກັບຄວາມໝາຍຂອງພຣະວັດຈະນະເຫຼົ່ານັ້ນ. ພາກນີ້ເລີ່ມຕົ້ນດ້ວຍແບບຝຶກຫັດງ່າຍໆ ທີ່ຂໍໃຫ້ເຈົ້າອ່ານໜຶ່ງປະໂຫຍກຈາກພຣະທັມມະລິຂິດ ແລ້ວຕອບຄຳຖາມ, ຊຶ່ງຄຳຕອບກໍຄືຂໍ້ຄວາມທີ່ຄັດມາຈາກພຣະທັມມະລິຂິດນັ້ນເອງ. ເຖິງແມ່ນວ່າຈະເຮັດໄດ້ໂດຍງ່າຍ, ແບບຝຶກຫັດນີ້ຈະຊ່ວຍໃຫ້ເຈົ້າໄຕ່ຕອງກ່ຽວກັບຂໍ້ຄວາມທີ່ຄັດມາ ແລະ ຊ່ວຍເຈົ້າໃນການທ່ອງຈຳ.

**"ຄວາມຈະເລີນຂອງໂລກຈະບັນລຸຜົນໄດ້ ໂດຍອາໄສການກະທຳທີ່ບໍລິສຸດ ແລະ ດີງາມ, ຄວາມປະພຶດທີ່ຈົບງາມ ແລະ ໜ້າສັນລະເສີນ."**[1]

1. ຄວາມຈະເລີນຂອງໂລກຈະບັນລຸຜົນໄດ້ແນວໃດ? ______________________________

______________________________________________________________

**"ໂອ ປະຊາຊົນແຫ່ງບາຮາ, ຈົ່ງລະວັງ, ຢ່າດຳເນີນຕາມວິຖີທາງຂອງຄົນປະເພດທີ່ມີວາຈາຢ່າງໜຶ່ງ ແຕ່ການກະທຳອີກຢ່າງໜຶ່ງ."**[2]

2. ເຮົາບໍ່ຄວນດຳເນີນຕາມວິຖີທາງຂອງຄົນປະເພດໃດ? ______________________________

______________________________________________________________

**"ໂອ ບຸດແຫ່ງຊີວິດ! ຈົ່ງສຳຫຼວດຕົວເຈົ້າເອງໃນແຕ່ລະວັນກ່ອນທີ່ເຈົ້າຈະຖືກຮຽກຕົວໄປຄິດບັນຊີ"**[3]

3. ເຮົາຄວນປະພຶດຕົນແບບໃດ ກ່ອນທີ່ຈະຖືກຮຽກຕົວໄປຄິດບັນຊີ? ____________________

______________________________________________________________

**"ໂອ ອ້າຍນ້ອງທັງຫຼາຍ! ຈົ່ງກ່າວວ່າ: ຂໍໃຫ້ການກະທຳເປັນອາພອນຂອງເຈົ້າ, ບໍ່ແມ່ນພຽງແຕ່ຄຳເວົ້າ."**[4]

4. ແມ່ນຫຍັງຄວນເປັນອາພອນທີ່ແທ້ຈິງຂອງເຮົາ? ______________________________

______________________________________________________________

**"ວາຈາ ແລະ ການກະທຳທີ່ດີງາມ ແລະ ບໍລິສຸດ, ຈະລອຍຂຶ້ນໄປສູ່ສະຫວັນຊັ້ນຟ້າແຫ່ງຄວາມຮຸ່ງເຮືອງ."**[5]

5. ວາຈາ ແລະ ການກະທຳທີ່ດີງາມ ຈະຂຶ້ນໄປສູ່ບ່ອນໃດ? ______________________________

______________________________________________________________

## ຕອນທີ 2

ຂ້າງລຸ່ມນີ້ເປັນບົດຝຶກຫັດທີ່ກ່ຽວກັບພຣະວັດຈະນະ ໃນຕອນທີ່ເຈົ້າໄດ້ສຶກສາຜ່ານມາ. ແບບຝຶກຫັດເຫຼົ່ານີ້ມີຈຸດປະສົງເພື່ອຊ່ວຍໃຫ້ເຈົ້າໄຕ່ຕອງເພີ່ມເຕີມ ເຖິງຄວາມສຳຄັນຂອງຂໍ້ຄວາມຈາກພຣະທັມມະລິຂິດພາຍໃນກຸ່ມຂອງເຈົ້າ ແລະ ບໍ່ຄວນຕອບແບບຝຶກຫັດແບບອັດຕະໂນມັດໂດຍບໍ່ໃຊ້ຄວາມຄິດກ່ຽວກັບຄຳຖາມ. ແຕ່ກໍບໍ່ໄດ້ໝາຍຄວາມວ່າທຸກແບບຝຶກຫັດຈະຕ້ອງມີການອະພິປາຍກັນຫຼາຍ. ຢ່າງໃດກໍຕາມເມື່ອແບບຝຶກຫັດນັ້ນມີຄວາມທ້າທາຍ, ຜູ້ອຳນວຍຄວາມສະດວກຂອງກຸ່ມຂອງເຈົ້າ ຈະຊ່ວຍເຈົ້າສຳຫຼວດແບບຝຶກຫັດນັ້ນຢ່າງລະອຽດຖີ່ຖ້ວນ.

1. ເມື່ອສິ່ງໃດ "ໜ້າສັນລະເສີນ" ໝາຍຄວາມວ່າ ສິ່ງນັ້ນຄວນໄດ້ຮັບການຍ້ອງຍໍຊົມເຊີຍ. ຂໍ້ຄວາມຕໍ່ໄປນີ້, ແມ່ນຂໍ້ໃດຄືການກະທຳທີ່ໜ້າສັນລະເສີນ?
   _____ ການເປັນຄົນເຮັດວຽກດີ
   _____ ການເຄົາລົບນັບຖືຜູ້ອື່ນ
   _____ ການເປັນຄົນດຸໝັ່ນຂະຫຍັນພຽນ
   _____ ການເປັນຄົນຂີ້ຕົວະ
   _____ ການເປັນຄົນຂີ້ຄ້ານ
   _____ ການຮັບໃຊ້ຜູ້ອື່ນ

2. ວະລີທີ່ວ່າ "ກ່ອນທີ່ເຈົ້າຈະຖືກຮຽກໄປຄິດບັນຊີ" ມີຄວາມໝາຍວ່າແນວໃດ?

   ________________________________________________________

3. ຂໍ້ຄວາມໃດຕໍ່ໄປນີ້ ແມ່ນຂໍ້ຄວາມໃດແມ່ນເປັນຄວາມຈິງ?
   _____ ມີຄົນດີໃນໂລກໜ້ອຍ ຈົນການກະທຳຂອງພວກເຂົາບໍ່ເກີດຜົນ.
   _____ ສິ່ງນັ້ນແມ່ນຖືກຕ້ອງ ເພາະວ່າກົງກັບຄວາມຄິດເຫັນຂອງຄົນອື່ນ.
   _____ ສິ່ງນັ້ນແມ່ນຖືກຕ້ອງ ເພາະວ່າກົງກັບພຣະທັມຄຳສອນຂອງພຣະຜູ້ເປັນເຈົ້າ.

4. ການກະທຳຕໍ່ໄປນີ້, ແມ່ນການກະທຳໃດດີງາມ ແລະ ບໍລິສຸດ?
   _____ ການດູແລເບິ່ງແຍງ ແລະ ການສອນເດັກ
   _____ ການຂີ້ລັກ
   _____ ການອະທິຖານເພື່ອຄວາມກ້າວໜ້າຂອງຄົນອື່ນ
   _____ ການເວົ້າຂີ້ຕົວະໜ້ອຍໜຶ່ງເພື່ອບໍ່ໃຫ້ມີບັນຫາ
   _____ ການຊ່ວຍເຫຼືອຄົນອື່ນ ແລະ ຄາດຫວັງລາງວັນຕອບແທນ

5. ໃນສະຖານະການໃດຕໍ່ໄປນີ້ ຄຳເວົ້າຂອງບຸກຄົນນັ້ນແຕກຕ່າງຈາກການກະທຳຂອງເຂົາ?

____ ມີບາງຄົນເວົ້າຢໍ້າຢູ່ເລື້ອຍໆວ່າ ເຮົາທຸກຄົນຄວນສາມັກຄີກັນ, ແຕ່ກັບປະພຶດຕົວໃນລັກສະນະທີ່ເຮັດໃຫ້ເກີດຄວາມຂັດແຍ້ງກັນ.

____ ບາງຄົນສັນລະເສີນຄຸນຄ່າຂອງຊີວິດທີ່ບໍລິສຸດ, ແຕ່ມີຄວາມສຳພັນທາງເພດນອກສົມລົດ.

____ ບາງຄົນດື່ມສິ່ງມຶນເມົາບາງຄັ້ງຄາວ, ໃນຂະນະທີ່ອ້າງຕົນເອງວ່າປະຕິບັດຕາມຄວາມເຊື່ອທາງສາສະໜາທີ່ຫ້າມດື່ມ.

____ ບາງຄົນສະໜັບສະໜູນຄວາມເທົ່າທຽມກັນຂອງຊາຍແລະຍິງ, ແຕ່ໃນຖານະນາຍຈ້າງຜັດຈ່າຍຄ່າຈ້າງໃຫ້ຜູ້ຍິງໜ້ອຍກວ່າຜູ້ຊາຍສຳລັບວຽກງານດຽວກັນ.

6. ບາຮາຍໄດ້ຮັບອະນຸຍາດໃຫ້ສາລະພາບບາບຕໍ່ໜ້າຄົນອື່ນແມ່ນບໍ່?

______________________________

7. ແທນທີ່ຈະສາລະພາບບາບ, ເຮົາຄວນເຮັດແນວໃດ?

______________________________

8. ວະລີທີ່ວ່າ "ສະຫວັນຊັ້ນຟ້າແຫ່ງຄວາມຮຸ່ງເຮືອງ" ໝາຍຄວາມວ່າແນວໃດ?

______________________________

9. ການກະທຳທີ່ບໍ່ດີມີຜົນກະທົບແນວໃດຕໍ່ໂລກ?

______________________________

10. ການກະທຳທີ່ບໍ່ດີມີຜົນກະທົບແນວໃດຕໍ່ຜູ້ທີ່ກະທຳ?

______________________________

## ຕອນທີ 3

ໃນຕອນນີ້ຂໍໃຫ້ເຈົ້າອ່ານ ແລະ ໄຕ່ຕອງບັນດາພຣະວັດຈະນະ ທີ່ມາຈາກພຣະທັມມະລິຂິດ. ແລ້ວພະຍາຍາມທ່ອງຈຳພຣະວັດຈະນະເຫຼົ່ານັ້ນ.

**"ວາຈາສັດຊື່ ແມ່ນເປັນຮາກຖານແຫ່ງຄຸນນະທັມທັງປວງຂອງມະນຸດ."**[6]

1. ແມ່ນຫຍັງຄືຮາກຖານແຫ່ງຄຸນນະທັມທັງປວງຂອງມະນຸດ?______________

______________________________

**“ຫາກປາສະຈາກວາຈາສັດຊື່, ຄວາມກ້າວໜ້າ ແລະ ຄວາມສຳເລັດໃນທຸກພົບຂອງພຣະຜູ້ເປັນເຈົ້າ ຈະເປັນໄປບໍ່ໄດ້ສຳລັບຈິດວິນຍານທຸກດວງ.”[7]**

2. ແມ່ນຫຍັງທີ່ເປັນໄປບໍ່ໄດ້, ຫາກປາສະຈາກວາຈາສັດຊື່? ___________________________

_____________________________________________________________________

**“ໂອ ປະຊາຊົນ, ຈົ່ງຕົບແຕ່ງວາຈາຂອງເຈົ້າດ້ວຍຄວາມສັດຊື່ ແລະ ປະດັບຈິດວິນຍານຂອງເຈົ້າດ້ວຍເຄື່ອງປະດັບແຫ່ງຄວາມສຸຈະລິດ.”[8]**

3. ເຮົາຄວນຕົບແຕ່ງວາຈາຂອງເຮົາດ້ວຍສິ່ງໃດ?___________________________________

_____________________________________________________________________

4. ເຮົາຄວນປະດັບຈິດວິນຍານຂອງເຮົາດ້ວຍສິ່ງໃດ?_________________________________

_____________________________________________________________________

**“ຂໍໃຫ້ດວງຕາຂອງເຈົ້າບໍລິສຸດ, ມືຂອງເຈົ້າຊື່ສັດ, ວາຈາຂອງເຈົ້າມີສັດຈະ ແລະ ຫົວໃຈຂອງເຈົ້າສະຫວ່າງສະໄຫວ.”[9]**

5. ຕາຂອງເຮົາຄວນຈະເປັນແນວໃດ? ______________ ມືຂອງເຮົາ? ________________

ວາຈາຂອງເຮົາ? ______________________ ຫົວໃຈຂອງເຮົາ?____________________

**“ບັນດາຜູ້ທີ່ອາໄສຢູ່ໃນສະຫວັນຂອງພຣະຜູ້ເປັນເຈົ້າ ແລະ ໄດ້ຮັບການສະຖາປະນາຢູ່ເທິງບັນລັງແຫ່ງຄວາມຮຸ່ງເຮືອງນິລັນດອນ, ແມ່ນວ່າກຳລັງຈະຕາຍເພາະຄວາມຫິວ, ເຂົາກໍ່ຈະບໍ່ຍື່ນມືໄປຈັບເອົາຊັບສົມບັດຂອງເພື່ອນບ້ານຢ່າງບໍ່ຖືກຕ້ອງ, ແມ່ນວ່າເພື່ອນບ້ານຜູ້ນັ້ນຈະເປັນຄົນໄຮ້ຄ່າປານໃດກໍ່ຕາມ.”[10]**

6. ພວກເຮົາຄວນຈະປະຕິເສດການກະທຳສິ່ງໃດ, ແມ່ນວ່າພວກເຮົາກຳລັງຈະຕາຍເພາະຄວາມຫິວ?

_____________________________________________________________________

_____________________________________________________________________

## ຕອນທີ 4

ເຈົ້າອາດຈະສັງເກດເຫັນແລ້ວວ່າໃນຕອນທີ 2, ມີຄຳຖາມບາງຂໍ້ທີ່ຕ້ອງການຄຳຕອບທີ່ຊັດເຈນກົງຕາມປະເດັນທີ່ຖາມ. ໃນກໍລະນີນີ້, ຫາກເຈົ້າມີຄວາມສົງໄສກ່ຽວກັບຄຳຕອບ, ຜູ້ອຳນວຍຄວາມສະດວກຂອງເຈົ້າຈະສາມາດຊ່ວຍເຈົ້າ ແລະ ຜູ້ທີ່ຮຽນເຂົ້າຮ່ວມໃນກຸ່ມຂອງເຈົ້າ ໃນການບັນລຸເຖິງເອກະພາບຂອງແນວຄວາມຄິດ. ສຳລັບແບບຝຶກຫັດຂໍ້ອື່ນໆ, ການອະພິປາຍກັນໃນກຸ່ມຈະເປັນປະໂຫຍດຫຼາຍກວ່າ, ແລະ ບໍ່ຈຳເປັນຕ້ອງໄດ້ຄຳຕອບສະເພາະເຈາະຈົງ. ໃນແບບຝຶກຫັດຕໍ່ໄປນີ້, ຄຳຖາມຂໍ້ 3 ຖືວ່າເປັນຄຳຖາມໃນປະເພດທຳອິດ, ສ່ວນຄຳຖາມຂໍ້ 6 ຈັດຢູ່ໃນປະເພດທີສອງດັ່ງທີ່ກ່າວໄວ້ຂ້າງເທິງ.

1. ວາຈາສັດຊື່ຄືຮາກຖານຂອງຄຸນນະທັມທັງປວງ. ຈົ່ງຍົກຕົວຢ່າງຂອງຄຸນນະທັມ 5 ປະການ:

______________________________________________

______________________________________________

2. ພວກເຮົາສາມາດບັນລຸຄຸນນະທັມເຫຼົ່ານີ້ໂດຍປາສະຈາກວາຈາສັດຊື່ໄດ້ຫຼືບໍ່? ____________

3. ຄຳເວົ້າໃດຕໍ່ໄປນີ້ເປັນຄຳເວົ້າທີ່ເປັນຄວາມຈິງ?

____ ຄົນເຮົາສາມາດເປັນຜູ້ທີ່ຍຸຕິທັມໄດ້ເຖິງແມ່ນວ່າຈະເວົ້າຕົວະ.

____ ຄົນຂີ້ລັກມີມືທີ່ຊື່ສັດ.

____ ມືທີ່ຊື່ສັດຈະບໍ່ແຕະຕ້ອງເຄື່ອງຂອງທີ່ບໍ່ແມ່ນຂອງຕົນເອງ.

____ ການອ່ານປື້ມ ແລະ ວາລະສານລາມົກອະນາຈານ, ຂັດກັບຄຳແນະນຳຂອງພຣະບາຮາອຸລລາຫ໌ທີ່ໃຫ້ເຮົາມີດວງຕາທີ່ບໍລິສຸດ.

____ ວາຈາສັດຊື່ໝາຍຄວາມວ່າບໍ່ເວົ້າຕົວະ.

____ ຄວາມສຸດຈະລິດຄືເຄື່ອງປະດັບຂອງຈິດວິນຍານ.

____ ຜູ້ບໍ່ມີວາຈາສັດຊື່ສາມາດພັດທະນາຈິດວິນຍານຂອງຕົນໄດ້.

____ ເປັນສິ່ງທີ່ຍອມຮັບໄດ້ທີ່ຈະເວົ້າຕົວະໃນບາງຄັ້ງຄາວ.

____ ການລັກເຄື່ອງເປັນທີ່ຍອມຮັບຕໍ່ພຣະພັກຂອງພຣະຜູ້ເປັນເຈົ້າ, ຫາກຜູ້ລັກອຶດຫິວແຮງ.

____ ການຈັບເອົາເຄື່ອງຂອງໄປໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງ ໂດຍທີ່ຄິດວ່າຈະເອົາມາຄືນໃຫ້ໃນພາຍຫຼັງບໍ່ແມ່ນການລັກ.

____ ເມື່ອເຮົາມີຄວາມສຸດຈະລິດ, ຍຸຕິທັມ ແລະ ມີວາຈາສັດຊື່, ຫົວໃຈຂອງເຮົາຍ່ອມສະຫວ່າງສະໄຫວ.

____ ເປັນໄປບໍ່ໄດ້ທີ່ຈະເຮັດທຸລະກິດໃຫ້ປະສົບຜົນສຳເລັດ ໂດຍບໍ່ມີການສໍ້ໂກງແມ່ນແຕ່ໜ້ອຍ.

4. ເປັນໄປໄດ້ບໍ່ທີ່ຈະຕົວະຕົນເອງ? ______________________________

5. ເຮົາສູນເສຍຫຍັງໄປເມື່ອເຮົາເວົ້າຕົວະ? ___________________________

6. ໂລກຈະເປັນແນວໃດຫາກເຮົາທຸກຄົນມີວາຈາສັດຊື່ ແລະ ສຸດຈະລິດ? ____________

______________________________________________

______________________________________________

______________________________________________

## ຕອນທີ 5

ຂໍໃຫ້ເຈົ້າອ່ານບັນທຶກອ້າງອີງຕໍ່ໄປນີ້ ແລະ ພະຍາຍາມທ່ອງຈຳໃຫ້ຂຶ້ນໃຈ. ການທ່ອງຂຶ້ນໃຈຂໍ້ຄວາມຈາກພຣະທັມມະລິຂິດສັກສິດນີ້ມີຄຸນປະໂຫຍດຢ່າງຍິ່ງ ແລະ ເຈົ້າຄວນທຸ້ມເທຄວາມພະຍາຍາມເພື່ອກະທຳສິ່ງນີ້. ແນ່ນອນທີ່ສຸດ, ບໍ່ແມ່ນທຸກຄົນຈະສາມາດທ່ອງຈຳໄດ້ຢ່າງງ່າຍດາຍ. ຢ່າງໃດກໍ່ຕາມ, ການໃຊ້ຄວາມພະຍາຍາມທີ່ຈະທ່ອງຈຳຈະຊ່ວຍຈາລຶກແນວຄວາມຄິດເຫຼົ່ານີ້ໃນຈິດໃຈ ແລະ ຄວາມຄິດຂອງພວກເຮົາ, ແລະ ເພື່ອສະແດງຄວາມຄິດເຫັນກ່ຽວກັບແນວຄວາມຄິດເຫຼົ່ານີ້ໄດ້ ໂດຍໃຊ້ຄຳເວົ້າທີ່ໃກ້ຄຽງກັບຖ້ອຍຄຳໃນພຣະທັມມະລິຂິດໃຫ້ຫຼາຍທີ່ສຸດເທົ່າທີ່ຈະເປັນໄປໄດ້.

> **"ລີ້ນທີ່ອ່ອນໂຍນຄືແມ່ເຫຼັກທີ່ດຶງດູດຫົວໃຈຂອງມະນຸດ, ຄືອາຫານຂອງຈິດວິນຍານ ຊຶ່ງປະດັບຖ້ອຍຄຳ ດ້ວຍຄວາມໝາຍອັນເປັນບໍ່ເກີດຂອງແສງສະຫວ່າງແຫ່ງອັດສະລິຍະພາບ ແລະ ຄວາມເຂົ້າໃຈ."**[11]

1. ລີ້ນທີ່ອ່ອນໂຍນຖືກອະທິບາຍວ່າເປັນແນວໃດ? ______________________

______________________

______________________

2. ລີ້ນທີ່ອ່ອນໂຍນມີຜົນແນວໃດຕໍ່ຖ້ອຍຄຳ? ______________________

______________________

> **"ໂອ ຜູ້ເປັນທີ່ຮັກຍິ່ງຂອງພຣະຜູ້ເປັນນາຍ! ໃນຍຸກສາສະໜາທີ່ສັກສິດນີ້, ຄວາມຂັດແຍ້ງ ແລະ ການໂຕ້ຖຽງ ແມ່ນບໍ່ໄດ້ຮັບອະນຸຍາດ. ຜູ້ຮຸກຮານທຸກຄົນຈະພາກຕົນເອງຈາກພຣະກະລຸນາຂອງ ພຣະຜູ້ເປັນເຈົ້າ."**[12]

3. ໃນພຣະວັດຈະນະຂ້າງເທິງນີ້, ມີຫຍັງແດ່ທີ່ບໍ່ໄດ້ຮັບອະນຸຍາດໃນຍຸກສາສະໜານີ້?

______________________

4. ຜູ້ຮຸກຮານທຸກຄົນກະທຳສິ່ງໃດໃຫ້ກັບຕົນເອງ?______________________

______________________

> **"ໃນຍຸກນີ້, ບໍ່ມີສິ່ງໃດເປັນໄພຕໍ່ສາສະໜານີ້ໄດ້ຫຼາຍກວ່າຄວາມຂັດແຍ້ງ ແລະ ການວິວາດຜິດຖຽງກັນ, ການຕໍ່ສູ້, ຄວາມບາດໝາງ ແລະ ຄວາມເມີນເສີຍຕໍ່ກັນໃນໝູ່ຜູ້ເປັນທີ່ຮັກຂອງພຣະຜູ້ເປັນເຈົ້າ."**[13]

5. ສະພາບແນວໃດທີ່ເປັນໄພຕໍ່ສາສະໜາຂອງພຣະຜູ້ເປັນເຈົ້າຫຼາຍທີ່ສຸດ?

______________________

______________________

**“ຢ່າໄດ້ພໍໃຈກັບການສະແດງມິດຕະພາບດ້ວຍຄຳເວົ້າເທົ່ານັ້ນ, ຈົ່ງໃຫ້ຫົວໃຈຂອງເຈົ້າລຸກເປັນໄຟ ແຫ່ງຄວາມເມດຕາຮັກແພງ ສຳລັບທຸກຄົນທີ່ອາດຈະເຂົ້າມາໃນເສັ້ນທາງຂອງເຈົ້າ.”**[14]

6. ເຮົາບໍ່ຄວນພໍໃຈກັບມິດຕະພາບແນວໃດ? ________________________________________
________________________________________________________________

7. ແມ່ນສິ່ງໃດທີ່ຄວນໃຫ້ລຸກເປັນໄຟສະຫວ່າງສະໄຫວຢູ່ໃນຫົວໃຈຂອງເຮົາ? _______________
________________________________________________________________

**“ເມື່ອສົງຄາມເຂົ້າມາໃນຄວາມຄິດ, ຈົ່ງຕ້ານມັນດ້ວຍຄວາມຄິດແຫ່ງສັນຕິພາບທີ່ເໜືອກວ່າ, ຄວາມຮູ້ສຶກກຽດຊັງຕ້ອງຖືກທຳລາຍລົງດ້ວຍຄວາມຄິດແຫ່ງຄວາມຮັກແພງທີ່ມີອຳນາດເໜືອກວ່າ.”**[15]

8. ຄວາມຄິດແຫ່ງສົງຄາມຄວນຈະຖືກຕໍ່ຕ້ານດ້ວຍສິ່ງໃດ? ____________________________
________________________________________________________________

9. ຄວາມຮູ້ສຶກກຽດຊັງຄວນຖືກທຳລາຍລົງດ້ວຍຫຍັງ? ______________________________
________________________________________________________________

## ຕອນທີ 6

ຂໍໃຫ້ນຶກເຖິງພຣະທັມມະລິຂິດຂ້າງເທິງເຫຼົ່ານີ້ໄວ້ໃນໃຈ, ແລ້ວເຮັດແບບຝຶກຫັດຕໍ່ໄປນີ້:

1. “ຄຳເວົ້າທີ່ອ່ອນໂຍນ” ສາມາດດຶງດູດຄືກັບແມ່ເຫຼັກ, ເຮົາຄວນປະພຶດແນວໃດ ເພື່ອໃຫ້ລີ້ນທີ່ອ່ອນໂຍນສາມາດດຶງດູດດັ່ງແມ່ເຫຼັກ? ________________________________

2. ຄຳເວົ້າໃດຕໍ່ໄປນີ້ ມາຈາກລີ້ນທີ່ອ່ອນໂຍນ?

____ “ຢ່າມາກວນໃຈຂ້ອຍເດີ້!”
____ “ເປັນຫຍັງເຈົ້າຈຶ່ງບໍ່ເຂົ້າໃຈເລື່ອງນີ້?”
____ “ກະລຸນາລໍຖ້າຈັກໜ້ອຍໄດ້ບໍ່?”
____ “ເດັກນ້ອຍຫຍັງ, ຄືນິດໄສບໍ່ດີແທ້!”
____ “ຂອບໃຈ, ທີ່ເຈົ້າໃຫ້ຄວາມກະລຸນາ.”
____ “ຕອນນີ້ຂ້ອຍບໍ່ມີເວລາໃຫ້ເຈົ້າ. ຂ້ອຍຄາວຽກ.”

3. ໃນສະຖານະການໃດຕໍ່ໄປນີ້, ມີຄວາມຂັດແຍ້ງ ແລະ ການໂຕ້ຖຽງກັນຢູ່ບໍ່?

____ ຄົນສອງຄົນສະແດງຄວາມຄິດເຫັນທີ່ຕ່າງກັນ ລະຫວ່າງທີ່ມີການປຶກສາຫາລືແບບບາຮາຍ.

____ ຄົນສອງຄົນອາລົມເສຍ ແລະ ໂຕ້ຖຽງກັນລະຫວ່າງປຶກສາຫາລື.

____ ຄົນສອງຄົນຢຸດການເຂົ້າຮ່ວມການຊຸມນຸມອະທິຖານ ທີ່ຈັດເປັນປະຈຳທຸກອາທິດ ເພາະພວກເຂົາບໍ່ເວົ້ານຳກັນ.

____ ສະມາຊິກທີມທີ່ເຮັດວຽກຮ່ວມກັນໃນໂຄງການໜຶ່ງມີແຕ່ຈົ່ມເວົ້າໃຫ້ກັນ ໂດຍແຕ່ລະຄົນບອກວ່າຄົນອື່ນບໍ່ເຮັດໜ້າທີ່ຂອງຕົນ.

4. ສະຖານະການໃດຕໍ່ໄປນີ້, ສະແດງສັນຍານຂອງຄວາມບາດໝາງ ແລະ ເມີນເສີຍ?

____ ເພື່ອນສອງຄົນຍ່າງສວນທາງກັນຕາມທົ່ນທາງ ແຕ່ຕ່າງຄົນຕ່າງບໍ່ສົນໃຈຊຶ່ງກັນແລະກັນ.

____ ມີບາງຄົນມາຮອດສະຖານທີ່ຊຸມນຸມເພື່ອມາອະທິດຖານຮ່ວມກັນ ແລະ ທຸກຄົນທັກທາຍລາວຢ່າງອົບອຸ່ນ.

____ ເຖິງແມ່ນວ່າພວກເຂົາຈະສຸພາບຕໍ່ກັນ ແຕ່ສະມາຊິກສອງຄົນຂອງກຸ່ມກັບລັງເລທີ່ຈະມີສ່ວນຮ່ວມໃນໂຄງການດ້ວຍກັນ.

5. ຂໍໃຫ້ຕັດສິນໃຈວ່າ ຄຳເວົ້າຕໍ່ໄປນີ້ແມ່ນຂໍ້ໃດເປັນຄວາມຈິງ:

____ ເຮົາຄວນເວົ້າຕາມທີ່ເຮົາຄິດກ່ຽວກັບຄົນອື່ນ; ເຖິງແມ່ນວ່າຄຳເວົ້ານັ້ນຈະເຮັດໃຫ້ຜູ້ອື່ນເຈັບໃຈຫຼືບໍ່ນັ້ນບໍ່ສຳຄັນ.

____ ເປັນສິ່ງທີ່ຍອມຮັບໄດ້, ຫາກຈະເວົ້າຕົວະເພື່ອຫຼີກລ້ຽງຄວາມຂັດແຍ້ງ.

____ ເຮົາເອົາຊະນະຄວາມຂັດແຍ້ງໄດ້ດ້ວຍຄວາມຮັກ ແລະ ຄວາມເມດຕາ.

____ ຄຳເວົ້າມີຜົນຫຼາຍກວ່າ, ຫາກເວົ້າອອກໄປດ້ວຍຄວາມຮັກ.

____ ເປັນສິ່ງທີ່ຖືກຕ້ອງທີ່ຈະຜິດຖຽງກັບຄົນບາງຄົນ, ຫາກເຂົາເປັນຝ່າຍທີ່ເລີ່ມກ່ອນ.

____ ຍາມເຈັບເປັນຫຼືເສົ້າໃຈ, ບຸກຄົນນັ້ນມີສິດທີ່ຈະບໍ່ອ່ອນໂຍນຕໍ່ຜູ້ອື່ນ.

____ ເປັນການຂາດຄວາມກະລຸນາ ທີ່ຈະຫົວຂວັນໃສ່ຜູ້ອື່ນເມື່ອເຂົາເຮັດຜິດພາດ.

____ ເມື່ອມີຄວາມຮູ້ສຶກທີ່ບໍ່ດີເກີດຂຶ້ນລະຫວ່າງເພື່ອນ, ຕ່າງຝ່າຍຄວນພະຍາຍາມເປັນພິເສດທີ່ຈະໃກ້ຊິດກັບອີກຝ່າຍໜຶ່ງ.

____ ເມື່ອມີຄວາມຮູ້ສຶກທີ່ບໍ່ດີເກີດຂຶ້ນລະຫວ່າງເພື່ອນ, ຕ່າງຝ່າຍຄວນລໍຖ້າຈົນກະທັ້ງອີກຝ່າຍ ໜຶ່ງພະຍາຍາມເຂົ້າມາຫາ.

## ຕອນທີ 7

ຈົ່ງອ່ານ ແລະ ທ່ອງຈຳພຣະທັມມະລິຂິດຕໍ່ໄປນີ້:

**"… ການນິນທາມອດແສງຂອງຫົວໃຈ ແລະ ດັບຊີວິດຂອງຈິດວິນຍານ."[16]**

**"ຈົ່ງຢ່າເວົ້າເຖິງບາບຂອງຜູ້ອື່ນ ໃນເມື່ອເຈົ້າເອງກໍ່ເປັນຄົນບາບ."[17]**

**"ຈົ່ງຢ່າເວົ້າສິ່ງຊົ່ວຮ້າຍ, ເພື່ອວ່າເຈົ້າຈະບໍ່ໄດ້ຍິນສິ່ງຊົ່ວຮ້າຍທີ່ເວົ້າໃສ່ເຈົ້າ, ແລະຢ່າຂະຫຍາຍຂໍ້ຜິດພາດຂອງຜູ້ອື່ນ, ເພື່ອວ່າຂໍ້ຜິດພາດຂອງເຈົ້າເອງຈະບໍ່ຖືກຂະຫຍາຍໃຫຍ່ຂື້ນ......"[18]**

**"ໂອ ບຸດແຫ່ງຊີວິດ! ເຈົ້າລືມຂໍ້ຜິດພາດຂອງຕົວເຈົ້າເອງ ແລະ ໄປຫຍຸ້ງກັບຂໍ້ຜິດພາດຂອງຜູ້ອື່ນໄດ້ແນວໃດ?"[19]**

1. ການນິນທາສົ່ງຜົນແນວໃດຕໍ່ຜູ້ນິນທາ? ______________________________

______________________________________________

2. ພວກເຮົາຄວນຄຳນຶງເຖິງຫຍັງກ່ອນທີ່ຈະຄິດເຖິງບາບຂອງຜູ້ອື່ນ? ______________

______________________________________________

3. ສິ່ງໃດຈະເກີດຂື້ນກັບພວກເຮົາ, ຫາກພວກເຮົາມົວແຕ່ໄປຂະຫຍາຍຂໍ້ຜິດພາດຂອງຜູ້ອື່ນ? ___

______________________________________________

4. ພວກເຮົາຄວນລະນຶກເຖິງຫຍັງກ່ອນ, ໃນຍາມທີ່ເຮົາຄິດເຖິງຂໍ້ຜິດພາດຂອງຄົນອື່ນ? _______

______________________________________________

## ຕອນທີ 8

ໂດຍການນຶກເຖິງໄວ້ໃນໃຈ ພຣະທັມມະລິຂິດຕ່າງໆຂ້າງເທິງ, ຈົ່ງເຮັດແບບຝຶກຫັດຕໍ່ໄປນີ້:

1. ຄວາມກ້າວໜ້າຂອງຈິດວິນຍານຂອງບຸກຄົນຈະເປັນແນວໃດ, ຫາກວ່າເຂົາມົວແຕ່ມຸ່ງຄວາມສົນໃຈກັບຂໍ້ຜິດ ພາດຂອງຜູ້ອື່ນ? ______________________________

2. ການນິນທາຈະສົ່ງຜົນແນວໃດຕໍ່ຊຸມຊົນ? ______________________________

______________________________________________

3. ເຈົ້າຈະເຮັດແນວໃດ ຫາກເພື່ອນຄົນໜຶ່ງເລີ່ມເວົ້າກ່ຽວກັບຂໍ້ຜິດພາດຂອງຜູ້ອື່ນ? __________

______________________________________________________________________

4. ຈົ່ງຕັດສິນວ່າຄຳເວົ້າຕໍ່ໄປນີ້ແມ່ນຂໍ້ໃດເປັນຄວາມຈິງ?

____ ໃນຍາມທີ່ພວກເຮົາກ່າວເຖິງຂໍ້ຜິດພາດທີ່ແທ້ຈິງຂອງຜູ້ອື່ນ, ບໍ່ຖືວ່າພວກເຮົານິນທາ.

____ ໃນຍາມທີ່ພວກເຮົາກ່າວເຖິງຂໍ້ດີທີ່ໜ້າສັນລະເສີນຂອງຄົນອື່ນ ແລະ ຂໍ້ຜິດພາດຂອງຜູ້ນັ້ນໃນເວລາດຽວກັນ, ບໍ່ຖືວ່າພວກເຮົານິນທາ.

____ ການນິນທາກາຍເປັນສິ່ງທີ່ປະຕິບັດກັນທົ່ວໄປໃນສັງຄົມ ແລະ ພວກເຮົາຄວນພັດທະນາລະບຽບວິໄນເພື່ອຫຼີກລ້ຽງການນິນທາ.

____ ຫາກຜູ້ຟັງສັນຍາວ່າຈະບໍ່ເອົາສິ່ງທີ່ເຮົາເວົ້າກ່ຽວກັບອີກຄົນໜຶ່ງໄປເລົ່າຕໍ່, ກໍຈະບໍ່ມີອັນຕະລາຍຫຍັງຈາກການນິນທາ.

____ ການນິນທາເປັນໜຶ່ງໃນສັດຕູທີ່ຮ້າຍແຮງທີ່ສຸດຂອງຄວາມສາມັກຄີ.

____ ຫາກວ່າພວກເຮົາມີນິດໄສມັກເວົ້າເຖິງຜູ້ອື່ນຕະຫຼອດເວລາ, ກໍເປັນການງ່າຍທີ່ພວກເຮົາຈະຕົກເຂົ້າໄປສູ່ການນິນທາ.

____ ເມື່ອອະທິບາຍເຖິງຄວາມສາມາດຂອງບຸກຄົນຕ່າງໆ ໃນການປະຊຸມທັມມະສະພາທ້ອງຖິ່ນເພື່ອຈະແຕ່ງຕັ້ງຄະນະກຳມະການ, ນີ້ຄືການນິນທາ.

____ ໃນຍາມທີ່ພວກເຮົາຮູ້ສຶກຢາກຈະນິນທາ, ພວກເຮົາຄວນຄິດເຖິງຂໍ້ຜິດພາດຂອງຕົນເອງກ່ອນ.

____ ໃນຍາມທີ່ພວກເຮົາຮູ້ວ່າມີບາງຄົນກຳລັງເຮັດສິ່ງທີ່ເປັນໄພຕໍ່ສາສະໜາ, ພວກເຮົາຄວນນຳມາປຶກສາຫາລືກັບສະມາຊິກຄົນອື່ນໆໃນຊຸມຊົນ.

____ ໃນຍາມທີ່ພວກເຮົາຮູ້ວ່າມີບາງຄົນກຳລັງເຮັດສິ່ງທີ່ເປັນໄພຕໍ່ສາສະໜາ, ພວກເຮົາຄວນແຈ້ງໃຫ້ທັມມະສະພາທ້ອງຖິ່ນຊາບ.

____ ບໍ່ແມ່ນສິ່ງທີ່ຜິດ, ຫາກສາມີພັນລະຍາຈະໂອ້ລົມກັນກ່ຽວກັບຂໍ້ຜິດພາດຂອງຜູ້ອື່ນ ເພາະສາມີພັນລະຍາບໍ່ຄວນມີຄວາມລັບຕໍ່ກັນແລະກັນ.

## ຕອນທີ 9

ດັ່ງທີ່ກ່າວໄວ້ໃນຕອນເລີ່ມຕົ້ນ, ຈຸດປະສົງຂອງພາກນີ້ຄືການຊ່ວຍເຫຼືອຜູ້ເຂົ້າຮ່ວມສຶກສາໃນຄວາມພະຍາຍາມພັດທະນາ ແລະ ເສີມສ້າງນິດໄສການອ່ານຂໍ້ຄວາມຕ່າງໆທີ່ຄັດມາຈາກພຣະທັມມະລິຂິດສັກສິດທຸກວັນ ແລະ ໄຕ່ຕອງຄວາມໝາຍຂອງພຣະທັມມະລິຂິດເຫຼົ່ານັ້ນ. ການອ່ານພຣະວັດຈະນະຂອງພຣະຜູ້ເປັນເຈົ້າທຸກເຊົ້າ ແລະ ແລງ ເປັນຄຳສອນຂອງພຣະບາຮາອຸລລາຫ໌ ທີ່ຊ່ວຍສົ່ງເສີມການພັດທະນາຈິດວິນຍານຂອງພວກເຮົາ. ຂໍ້ຄວາມຕໍ່ໄປນີ້ເຕືອນໃຫ້ພວກເຮົາລະນຶກເຖິງຂອງຂວັນລາງວັນທີ່ພວກເຮົາໄດ້ຮັບຈາກການປະຕິບັດຕາມຂໍ້ຜູກພັນນີ້, ແລະເຈົ້າໄດ້ຮັບການຊຸກຍູ້ ໃຫ້ພະຍາຍາມທ່ອງຈຳພຣະທັມມະລິຂິດຕອນຕໍ່ໄປນີ້:

> **"ຈົ່ງດຳດິ່ງລົງໃນມະຫາສະໝຸດແຫ່ງວັດຈະນະຂອງເຮົາ, ເພື່ອເຈົ້າຈະໄຂຄວາມລັບ ແລະ ຄົ້ນພົບໄຂ່ມຸກແຫ່ງປັນຍາທັງປວງ ທີ່ເຊື່ອງຊ້ອນຢູ່ໃນຫ້ອງເລິກຂອງມະຫາສະໝຸດນີ້."[20]**

ເມື່ອຈົບພາກນີ້ແລ້ວ, ເຈົ້າອາດຕ້ອງການປຶ້ມທີ່ມີພຣະທັມມະລິຂິດຂອງ ພຣະບາຮາອຸລລາຫ໌ ແລະ ອ່ານຈາກປຶ້ມນັ້ນທຸກວັນ. "ພຣະວັດຈະນະແຫ່ງຄວາມລີ້ລັບ" ເປັນທາງເລືອກທຳອິດທີ່ເໝາະສົມ.

## ໜັງສືອ້າງອີງ:


1. ພຣະບາຮາອຸລລາຫ໌, ກ່າວໂດຍ ທ່ານ ໂຊເກ ເອັບເຟັນດີ ໃນປຶ້ມ, *The Advent of Divine Justice* (Wilmette: Baha'i Publishing Trust, ຈັດພິມປີ 2006, 2018), ວັກທີ 39, ພາສາອັງກິດໜ້າທີ 36-37.
2. *ປະມວນພຣະທັມຈາກພຣະທັມມະລິຂິດຂອງພຣະບາຮາອຸລລາຫ໌*, (Wilmette: Baha'i Publishing Trust, 1983), CXXXIX, ວັກທີ 8, ພາສາອັງກິດໜ້າທີ 345.
3. ພຣະບາຮາອຸລລາຫ໌, ໃນປຶ້ມ *ພຣະວັດຈະນະແຫ່ງຄວາມລີ້ລັບ,* ພາສາອາຫຣັບ, ໝາຍເລກ 31, ພາສາອັງກິດໜ້າທີ 31.
4. ພຣະບາຮາອຸລລາຫ໌, ໃນປຶ້ມ *ພຣະວັດຈະນະແຫ່ງຄວາມລີ້ລັບ,* ພາສາເປີເຊຍ, ໝາຍເລກ 5, ພາສາອັງກິດໜ້າທີ 24.
5. ພຣະບາຮາອຸລລາຫ໌,ໃນປຶ້ມ *ພຣະວັດຈະນະແຫ່ງຄວາມລີ້ລັບ,* ພາສາເປີເຊຍ, ໝາຍເລກ 69, ພາສາອັງກິດໜ້າທີ 46.
6. ພຣະອັບດຸລບາຮາ, ກ່າວໂດຍ ທ່ານ ໂຊເກ ເອັບເຟັນດີ ໃນປຶ້ມ, *The Advent of Divine Justice,* ວັກທີ 40, ພາສາອັງກິດໜ້າທີ 39.
7. ພຣະອັບດຸລບາຮາ, ກ່າວໂດຍ ທ່ານ ໂຊເກ ເອັບເຟັນດີ ໃນປຶ້ມ, *The Advent of Divine Justice,* ວັກທີ 40, ພາສາອັງກິດໜ້າທີ 39.
8. *ປະມວນພຣະທັມຈາກພຣະທັມມະລິຂິດຂອງພຣະບາຮາອຸລລາຫ໌*, CXXXVI, ວັກທີ 6, ພາສາອັງກິດໜ້າທີ 336.
9. *ພຣະທັມມະຈາລຶກຂອງພຣະບາຮາອຸລລາຫ໌ ທີ່ເປີດເຜີຍພາຍຫຼັງພຣະຄຳພີເຄທໍເບອັກດັດສ໌* (Wilmette: Baha'i Publishing Trust, 1988, 2005 printing), ເລກທີ 9.5, ພາສາອັງກິດໜ້າທີ 138.
10. *ປະມວນພຣະທັມຈາກພຣະທັມມະລິຂິດຂອງພຣະບາຮາອຸລລາຫ໌*, CXXXVII, ວັກທີ 3, ພາສາອັງກິດໜ້າທີ 338.
11. *ປະມວນພຣະທັມຈາກພຣະທັມມະລິຂິດຂອງພຣະບາຮາອຸລລາຫ໌*, CXXXII, ວັກທີ 5, ພາສາອັງກິດໜ້າທີ 327.
12. *ພິໄນກຳຂອງພຣະອັບດຸລລາບາຮາ* (Wilmette: Baha'i Publishing Trust, ຈັດພິມປີ 1944, 2013), ພາສາອັງກິດໜ້າທີ 26.
13. *ປະມວນພຣະທັມຈາກພຣະທັມມະລິຂິດຂອງພຣະບາຮາອຸລລາຫ໌*, V, ວັກທີ 5, ພາສາອັງກິດໜ້າທີ 8.
14. ຈາກສູນທອນພົດໃນວັນທີ 16 ແລະ 17 ຕຸລາ 1911, ພິມເຜີຍແຜ່ລົງໃນປຶ້ມ *ສູນທອນພົດທີ່ນະຄອນປາຣີ: ຈາກຄຳປາໄສຂອງພຣະອັບດຸລບາຮາ ປີ 1911* (Wilmette: Baha'i Publishing, ຈັດພິມປີ 2006, 2016), ເລກທີ 1.7, ພາສາອັງກິດໜ້າທີ 6.

15. ຈາກສູນທອນພິດຂອງພຣະອັບດຸລບາຮາໃນວັນທີ 21 ຕຸລາ 1911, ປື້ມທົວດງອກັນ, ເລກທີ 6.7, ພາສາອັງກິດໜ້າທີ 22.
16. *ປະມວນພຣະທັມຈາກພຣະທັມມະລິຂິດຂອງພຣະບາຮາອຸລລາຫ໌*, CXXV, ວັກທີ 3, ພາສາອັງກິດໜ້າທີ 300.
17. *ພຣະວັດຈະນະແຫ່ງຄວາມລີ້ລັບ,* ພາສາອາຫຣັບ, ໝາຍເລກ 27, ພາສາອັງກິດໜ້າທີ 10.
18. *ພຣະວັດຈະນະແຫ່ງຄວາມລີ້ລັບ,* ພາສາເປີເຊຍ, ໝາຍເລກ 44, ພາສາອັງກິດໜ້າທີ 37.
19. *ພຣະວັດຈະນະແຫ່ງຄວາມລີ້ລັບ,* ພາສາອາຫຣັບ, ໝາຍເລກ 26, ພາສາອັງກິດໜ້າທີ 10.
20. *ປະມວນພຣະທັມຈາກພຣະທັມມະລິຂິດຂອງພຣະບາຮາອຸລລາຫ໌, LXX*, ວັກທີ 2, ພາສາອັງກິດໜ້າທີ 154.

**********************



# ບົດອະທິດຖານ

## ຈຸດປະສົງ

ເພື່ອໄຕ່ຕອງເຖິງຄວາມສຳຄັນຂອງການອະທິດຖານ ແລະ
ເສີມສ້າງນິດໄສຂອງການອະທິດຖານຢ່າງສະໝ່ຳສະເໝີ

## ຕອນທີ 1

ຫຼັກສູດຕ່າງໆຂອງສະຖາບັນຣູຮີ ມຸ່ງໝັ້ນທີ່ຈະຊ່ວຍໃຫ້ຜູ້ເຂົ້າຮ່ວມສຶກສາກ້າວຍ່າງຕາມຫົນທາງແຫ່ງການຮັບໃຊ້. ພວກເຮົາກ້າວຍ່າງໄປຕາມຫົນທາງນີ້ ໂດຍໄດ້ຮັບແຮງກະຕຸ້ນຈາກຄວາມຕະໜັກໃນຈຸດປະສົງສອງດ້ານ - ເພື່ອເຕີບໃຫຍ່ທາງຈິດວິນຍານ ແລະ ສະຕິປັນຍາ, ແລະ ປະກອບສ່ວນເຂົ້າໃນການປ່ຽນແປງຂອງສັງຄົມ. ຈຸດປະສົງທັງສອງດ້ານຂອງພວກເຮົານັ້ນ ແມ່ນບໍ່ສາມາດແຍກອອກຈາກກັນໄດ້. ພຣະບາຮາອຸລລາຫ໌ ຊົງເຕືອນພວກເຮົາໃນພຣະທັມມະລິຂິດຕອນໜຶ່ງວ່າ:

**"ຈົ່ງຢ່າໃຫ້ຕົວເຈົ້າເອງຫຍຸ້ງຢູ່ກັບວຽກຂອງຕົນເອງ; ຂໍໃຫ້ຄວາມຄິດຂອງເຈົ້າມຸ່ງໄປຍັງສິ່ງທີ່ຈະຟື້ນຟູໂຊກຊະຕາຂອງມະນຸດຊາດ ແລະ ເຮັດໃຫ້ຫົວໃຈ ແລະ ຈິດວິນຍານຂອງມະນຸດບໍລິສຸດ."**[1]

ໃນພຣະຄຳພີອີກຕອນໜຶ່ງ, ພຣະອົງຊົງອະທິບາຍຢ່າງຊັດເຈນວ່າ:

**."..ຈຸດປະສົງສຳລັບມະນຸດຜູ້ທີ່ຕ້ອງຕາຍຈາກໄປ, ນັບຕັ້ງແຕ່ສູນຍະພາບທີ່ສົມບູນ, ກ້າວຍ່າງມາສູ່ອານາຈັກແຫ່ງການດຳລົງຢູ່, ຊຶ່ງພວກເຂົາອາດເຮັດວຽກເພື່ອຄວາມຈະເລີນຂອງໂລກ, ແລະອາໄສຢູ່ນຳກັນດ້ວຍມິດຕະພາບ ແລະ ຄວາມປອງດອງ."**[2]

ໃນສ່ວນທີ່ກ່ຽວກັບສະພາບພາຍໃນຂອງພວກເຮົາ, ພຣະອົງຊົງປະກາດວ່າ:

**"ຫົວໃຈທີ່ບໍລິສຸດປຽບຄືກັບແວ່ນແຍງ; ຈົ່ງຊຳລະແວ່ນໃຫ້ສະອາດໂດຍການພັດໃຫ້ເຫຼື້ອມເງົາດ້ວຍຄວາມຮັກ ແລະ ການຕັດຂາດຈາກທຸກສິ່ງນອກຈາກພຣະຜູ້ເປັນເຈົ້າ, ເພື່ອວ່າດວງອາທິດທີ່ແທ້ຈິງຈະສ່ອງແສງໃນແວ່ນແຍງນັ້ນ ແລະ ຮຸ່ງອາລຸນແຫ່ງນິດນິລັນ."**[3]

ແລະ ພຣະອັບດຸບາຮາໄດ້ບອກພວກເຮົາວ່າ:

**"ຫົວໃຈຂອງພວກເຈົ້າຕ້ອງບໍລິສຸດ ແລະ ເຈດຕະນາຂອງພວກເຈົ້າຕ້ອງຈິງໃຈ ເພື່ອວ່າພວກເຈົ້າອາດຈະກາຍເປັນຜູ້ຮັບຂອງຂວັນທັງຫຼາຍທີ່ປະທານຈາກສະຫວັນ."**[4]

1. ສິ່ງທີ່ຄວນເປັນຈຸດສົນໃຈຂອງຄວາມຄິດ ແລະ ຄວາມເອົາໃຈໃສ່ຂອງເຮົາແມ່ນຫຍັງ?

   ________________________________________

   ________________________________________

2. ແມ່ນຫຍັງຄືຈຸດປະສົງທີ່ພວກເຮົາກ້າວອອກມາຈາກສູນຍະພາບທີ່ສົມບູນມາສູ່ອານາຈັກແຫ່ງການ ດຳລົງຢູ່?______________________________

   ________________________________________

   ________________________________________

   ________________________________________

3. ພວກເຮົາຄວນຊໍາລະແວ່ນແຍງແຫ່ງຫົວໃຈຂອງພວກເຮົາໃຫ້ສະອາດດ້ວຍສິ່ງໃດ?

______________________________________________

4. ມີບັນດາເງື່ອນໄຂໃດແດ່ທີ່ດຶງດູດເອົາຂອງຂວັນທີ່ປະທານຈາກສະຫວັນ?

______________________________________________

5. ຂໍ້ໃດຕໍ່ໄປນີ້ແມ່ນຖືກຕ້ອງ?
   - ເຈົ້າຄວນເບິ່ງແຍງຕົນເອງກ່ອນເປັນລໍາດັບທໍາອິດ, ແລະຈາກນັ້ນເຈົ້າຈຶ່ງສາມາດເບິ່ງແຍງຄົນອື່ນໄດ້.
   - ຫາກເຈົ້າຊ່ວຍເຫຼືອຜູ້ອື່ນຢູ່ຕະຫຼອດເວລາ, ເຈົ້າຈະຈົບລົງດ້ວຍການບໍ່ເຫັນຄວາມສໍາຄັນຂອງເປົ້າໝາຍຂອງຕົນເອງ.
   - ເຈົ້າເປັນໝູ່ທີ່ສະໜິດທີ່ສຸດຂອງຕົວເຈົ້າເອງ.
   - ສິ່ງທີ່ສໍາຄັນທີ່ສຸດຄືການຄົ້ນຫາວ່າ ແມ່ນຫຍັງເຮັດໃຫ້ເຈົ້າມີຄວາມສຸກ.
   - ຕາມຄວາມຝັນຂອງເຈົ້າໄປ, ແລ້ວຄວາມຝັນເຫຼົ່ານັ້ນຈະນໍາເຈົ້າໄປສູ່ຄວາມສຸກ.
   - ຕາບໃດທີ່ເຈົ້າບໍ່ໄດ້ທໍາຮ້າຍຜູ້ໃດ, ເຈົ້າຈະເຮັດຫຍັງກໍບໍ່ແມ່ນເລື່ອງສໍາຄັນ.
   - ເປັນສິ່ງທີ່ຖືກຕ້ອງສໍາລັບແຮງຈູງໃຈຂອງເຈົ້າທີ່ຈະເຫັນແກ່ຕົວ, ຕາບໃດທີ່ເຈົ້າເຮັດບາງສິ່ງທີ່ດີ.

## ຕອນທີ 2

ຄວາມເຊື່ອໝັ້ນທີ່ເປັນໃຈກາງສໍາລັບຈຸດປະສົງສອງປະການຂອງພວກເຮົາຄື ການທີ່ພວກເຮົາທຸກຄົນລ້ວນຖືກສ້າງຂຶ້ນມາຢ່າງສູງສົ່ງ. ພຣະບາຮາອຸລລາຫ໌ ຊົງດໍາລັດວ່າ:

> **"ໂອ ບຸດແຫ່ງຈິດວິນຍານ! ເຮົາສ້າງເຈົ້າຂຶ້ນມາຮັ່ງມີ, ເຫດໃດເຈົ້າຈຶ່ງນໍາພາຕົນເອງລົງໄປສູ່ຄວາມຍາກຈົນ? ເຮົາສ້າງເຈົ້າຂຶ້ນມາປະເສີດ, ເຫດໃດເຈົ້າຈຶ່ງເຮັດໃຫ້ຕົນເອງຕໍ່າລົງ? ເຮົາໃຫ້ຊີວິດຂອງເຈົ້າກໍາເນີດມາຈາກສາລະແຫ່ງຄວາມຮູ້, ເຫດໃດເຈົ້າຈຶ່ງສະແຫວງຫາການຮູ້ແຈ້ງຈາກຜູ້ອື່ນນອກຈາກເຮົາ? ເຮົາປັ້ນເຈົ້າຂຶ້ນມາຈາກດິນແຫ່ງຄວາມຮັກ, ເຈົ້າຫຍຸ້ງຢູ່ກັບຜູ້ອື່ນໄດ້ແນວໃດ? ຈົ່ງຫຼຽວເບິ່ງຕົວເຈົ້າເອງ, ເພື່ອວ່າເຈົ້າຈະພົບເຮົາຢືນຢູ່ພາຍໃນຕົວເຈົ້າຢ່າງຊົງອໍານາດ, ຊົງພະລານຸພາບ ແລະ ດໍາລົງຢູ່ໄດ້ດ້ວຍຕົນເອງ."[5]**

ການເຕີມຄໍາລົງໃນຊ່ອງຫວ່າງຂ້າງລຸ່ມ ຈະຊ່ວຍເຈົ້າໃນການໄຕ່ຕອງກ່ຽວກັບພຣະທັມມະລິຂິດຕອນນີ້.

> "ໂອ ບຸດແຫ່ງຈິດວິນຍານ! ເຮົາສ້າງເຈົ້າຂຶ້ນມາ ___________, ເຫດໃດເຈົ້າຈຶ່ງນໍາພາຕົນເອງ __ໄປສູ່ _________? ເຮົາ ___ເຈົ້າຂຶ້ນມາ _________ ເຫດໃດເຈົ້າຈຶ່ງ______ຕົນເອງ_________? ເຮົາໃຫ້ຊີວິດຂອງເຈົ້າ___________ ມາຈາກ _____ແຫ່ງ________, ເຫດໃດເຈົ້າ___________________________ຈາກຜູ້ອື່ນນອກຈາກ ________? ເຮົາ

____________ເຈົ້າຂຶ້ນມາຈາກດິນແຫ່ງ__________________, ເຈົ້າ________ຢູ່ກັບ__
______ໄດ້ແນວໃດ? ຈົ່ງ___________ຕົວເຈົ້າເອງ, ເພື່ອວ່າເຈົ້າຈະພົບ ______ຢືນ
ຢູ່ພາຍໃນຕົວເຈົ້າ ___________, __________ ແລະ _______________________."

ເພື່ອສະແດງຄວາມຈິງຕໍ່ຄວາມປະເສີດແຫ່ງຈິດວິນຍານຂອງພວກເຮົາ, ພວກເຮົາຕ້ອງຫັນໄປຫາພຣະຜູ້ຊົງເປັນແຫຼ່ງກໍາເນີດແຫ່ງການດໍາລົງຢູ່ຂອງພວກເຮົາ ແລະ ຊອກຫາການຮູ້ແຈ້ງຈາກພຣະອົງ. ວິທີໜຶ່ງທີ່ໜ້າສົນໃຈທີ່ສຸດໃນການບັນລຸເປົ້າໝາຍນີ້ຄືການອະທິດຖານ. ທ່ານ ໂຊເກ ເອັບເຟັນດີ, ຜູ້ພິທັກສາສະໜາບອກພວກເຮົາວ່າ ເປົ້າໝາຍຫຼັກຄື "ການພັດທະນາບຸກຄົນ ແລະ ສັງຄົມ, ໂດຍການໄດ້ມາຊຶ່ງຄຸນນະທໍາ ແລະ ພະລັງແຫ່ງຈິດວິນຍານ. ຈິດວິນຍານຂອງມະນຸດຕ້ອງໄດ້ຮັບການບໍາລຸງລ້ຽງກ່ອນ. ແລະການອະທິດຖານສາມາດໃຫ້ການບໍາລຸງລ້ຽງນີ້ໄດ້ດີທີ່ສຸດ.[6]"

## ຕອນທີ 3

ພຣະຜູ້ເປັນເຈົ້າຄືພຣະຜູ້ຊົງຮູ້ທຸກສິ່ງ, ພຣະຜູ້ຊົງອັດສະລິຍະພາບ. ພຣະອົງຊົງສ້າງມະນຸດຂຶ້ນມາ ແລະ ພຣະອົງຊົງຮູ້ເຖິງສິ່ງທີ່ຢູ່ໃນຫົວໃຈຂອງພວກເຮົາ ແລະ ສິ່ງທີ່ດີທີ່ສຸດສໍາລັບພວກເຮົາ. ພຣະອົງບໍ່ຕ້ອງການການອະທິດຖານຂອງພວກເຮົາ. ຖ້າເປັນແນວນັ້ນ, ເປັນຫຍັງພວກເຮົາຈຶ່ງຕ້ອງອະທິດຖານ?

ພຣະອັບດຸລບາຮາ ກ່າວວ່າ:

**"ໃນການອະທິດຖານຂັ້ນສູງສຸດ, ມະນຸດຈະອະທິດຖານແດ່ຄວາມຮັກທີ່ມີຕໍ່ພຣະຜູ້ເປັນເຈົ້າເທົ່ານັ້ນ, ບໍ່ແມ່ນເພາະພວກເຂົາຢ້ານກົວພຣະອົງ ຫຼື ຢ້ານນາລົກ, ບໍ່ແມ່ນຄວາມຫວັງທີ່ຈະໄດ້ຮັບພຣະພອນ ຫຼື ໄດ້ຂຶ້ນສະຫວັນ... ເມື່ອມະນຸດຫຼົງຮັກຜູ້ໃດຜູ້ໜຶ່ງ, ເປັນໄປບໍ່ໄດ້ທີ່ເຂົາຈະບໍ່ກ່າວເຖິງຊື່ຂອງຜູ້ທີ່ເຂົາຮັກ. ດັ່ງນັ້ນ, ແມ່ນເປັນການຍາກວ່າພຽງໃດທີ່ຈະບໍ່ກ່າວເຖິງພຣະນາມຂອງພຣະຜູ້ເປັນເຈົ້າ ເມື່ອມະນຸດຮັກພຣະອົງ... ຜູ້ທີ່ມີທັມມະຈະບໍ່ພົບຄວາມປິຕິຍິນດີໃນສິ່ງໃດ, ນອກຈາກການລະນຶກເຖິງພຣະຜູ້ເປັນເຈົ້າ."[7]**

ແລະເພື່ອຕອບຄໍາຖາມນີ້, ທ່ານອະທິບາຍວ່າ:

**"ຖ້າເພື່ອນຄົນໜຶ່ງຮັກອີກຄົນໜຶ່ງ, ມັນບໍ່ແມ່ນເລື່ອງທໍາມະດາທີ່ເຂົາປາດຖະໜາຈະບອກເລື່ອງນີ້ບໍ? ເຖິງແມ່ນເຂົາຈະຮູ້ວ່າເພື່ອນຜູ້ນັ້ນກໍຮູ້ດີກ່ຽວກັບຄວາມຮັກຂອງເຂົາ, ແຕ່ເຂົາກໍຍັງຄົງບໍ່ປາດຖະໜາທີ່ຈະບອກກັບເພື່ອນໃນເລື່ອງນີ້ບໍ?... ເປັນຄວາມຈິງທີ່ວ່າພຣະຜູ້ເປັນເຈົ້າຊົງຮູ້ເຖິງຄວາມປາດຖະໜາຂອງຫົວໃຈທຸກດວງ; ແຕ່ແຮງກະຕຸ້ນທີ່ຈະອະທິດຖານນັ້ນເກີດຂຶ້ນຕາມທໍາມະຊາດ, ແມ່ນອອກມາຈາກຄວາມຮັກຂອງມະນຸດທີ່ມີຕໍ່ພຣະຜູ້ເປັນເຈົ້າ."[8]**

1. ຈົ່ງເຕີມປະໂຫຍກເຫຼົ່ານີ້ໃຫ້ສົມບູນ:

ກ. ໃນການອະທິດຖານ ______________________, ພວກເຮົາຈະ_____________ ແດ່ ___________________ ທີ່ມີຕໍ່ພຣະຜູ້ເປັນເຈົ້າເທົ່ານັ້ນ, ບໍ່ແມ່ນເພາະພວກເຮົາຢ້ານກົວພຣະອົງ ຫຼື ຢ້ານ _________, ບໍ່ແມ່ນຄວາມຫວັງທີ່ຈະໄດ້ _____________ ຫຼື ໄດ້ຂຶ້ນສະຫວັນ.

ຂ. ເມື່ອ___________ ຫຼົງ _______ ຜູ້ໃດຜູ້ໜຶ່ງ, ແມ່ນເປັນ ___________ ທີ່ເຂົາຈະບໍ່ກ່າວເຖິງ __________ ຂອງ _________________. ດັ່ງນັ້ນ, ______________ ກວ່າພຽງໃດທີ່ຈະບໍ່ ________ ພຣະນາມຂອງພຣະຜູ້ເປັນເຈົ້າ ເມື່ອມະນຸດ __ ພຣະອົງ.

ຄ. ຜູ້ທີ່ມີທັມມະຈະບໍ່ພົບ ______________________ ໃນສິ່ງໃດ ນອກຈາກ ______ ___________ ພຣະຜູ້ເປັນເຈົ້າ.

2. ເປັນຫຍັງເຮົາຈຶ່ງຄວນອະທິດຖານ? _____________________________________

_______________________________________________________________

3. ອະລິທີ່ວ່າ "ການລະນຶກເຖິງພຣະຜູ້ເປັນເຈົ້າ" ໝາຍຄວາມວ່າແນວໃດ? ____________

_______________________________________________________________

4. ແມ່ນຫຍັງຄືຄວາມປາດຖະໜາອັນແຮງກ້າທີ່ສຸດຂອງຄົນຜູ້ໜຶ່ງທີ່ຮັກອີກຄົນໜຶ່ງ? ______

_______________________________________________________________

5. ແມ່ນສິ່ງໃດອອກມາຈາກແຮງກະຕຸ້ນໃຫ້ຮູ້ສຶກຢາກອະທິດຖານ?__________________

_______________________________________________________________

## ຕອນທີ 4

ໃນບົດອະທິດຖານທີ່ໄດ້ຮັບການເປີດເຜີຍໂດຍ ພຣະບາຮາອຸລລາຫ໌, ຂໍໃຫ້ພວກເຮົາອ່ານ:

**"ຂ້າພະເຈົ້າຂໍວິງວອນຕໍ່ພຣະອົງ... ຂໍຊົງບັນດານໃຫ້ການອະທິດຖານຂອງຂ້າພະອົງລຸກເປັນໄຟທີ່ຈະເຜົາມ່ານທີ່ປິດກັ້ນຂ້າພະອົງ ຈາກຄວາມງາມຂອງພຣະອົງ, ແລະ ເປັນແສງສະຫວ່າງທີ່ຈະນຳທາງຂ້າພະອົງເຂົ້າໄປສູ່ມະຫາສະໝຸດແຫ່ງທີ່ປະທັບຂອງພຣະອົງ."**[9]

ພວກເຮົາຮ້ອງຂໍຕໍ່ພຣະຜູ້ເປັນເຈົ້າໃນບົດອະທິດຖານດຽວກັນວ່າ:

**"ໂອ ພຣະຜູ້ເປັນນາຍຂອງຂ້າພະອົງ, ຂໍຊົງບັນດານໃຫ້ການອະທິດຖານຂອງຂ້າພະອົງເປັນດັ່ງສາຍນ້ຳແຫ່ງຊີວິດ ທີ່ຈະຫຼໍ່ລ້ຽງຂ້າພະອົງຕາບນານ ເທົ່າທີ່ອະທິປະໄຕຂອງພຣະອົງຍັງຄົງຢູ່ ແລະ ເຮັດໃຫ້ຂ້າພະອົງກ່າວເຖິງພຣະອົງໃນທຸກພົບແຫ່ງພົບທັງຫຼາຍຂອງພຣະອົງ."**[10]

1. ການອະທິດຖານຄ້າຍຄືກັບໄຟໃນລັກສະນະໃດ? ໄຟນີ້ເຜົາໄໝ້ຫຍັງ? ____________

________________________________________

2. ຈົ່ງກ່າວເຖິງມ່ານບາງຢ່າງທີ່ປິດກັ້ນພວກເຮົາຈາກພຣະຜູ້ເປັນເຈົ້າ?______________

________________________________________

________________________________________

3. ການອະທິດຖານປຽບຄືກັບແສງສະຫວ່າງໄດ້ບໍ່? ແສງສະຫວ່າງນີ້ຈະພາພວກເຮົາໄປໃສ?

________________________________________

________________________________________

4. ການອະທິດຖານປຽບຄືກັບສາຍນໍ້າແຫ່ງຊີວິດໄດ້ບໍ່? ສາຍນໍ້ານີ້ມອບຫຍັງໃຫ້ກັບຈິດວິນຍານຂອງພວກເຮົາ? ______________________________

________________________________________

________________________________________

## ຕອນທີ 5

ຈົ່ງອ່ານ ແລະ ໄຕ່ຕອງຄຳສອນຂອງພຣະອັບດຸລບາຮາທີ່ຢູ່ຂ້າງລຸ່ມນີ້:

**"ບໍ່ມີສິ່ງໃດໃນໂລກຫອມຫວານກວ່າການອະທິດຖານ, ມະນຸດຄວນໃຊ້ຊີວິດຢູ່ນຳການອະທິດຖານ. ສະພາວະທີ່ໄດ້ຮັບພອນສູງສຸດແມ່ນການອະທິດຖານ ແລະ ການສວດອ້ອນວອນ. ການອະທິດຖານແມ່ນການສົນທະນາກັບພຣະຜູ້ເປັນເຈົ້າ. ການບັນລຸທີ່ຍິ່ງໃຫຍ່ທີ່ສຸດ ຫຼື ພາວະທີ່ຫອມຫວານທີ່ສຸດບໍ່ແມ່ນສິ່ງອື່ນໃດ ນອກຈາກການໄດ້ສົນທະນາກັບພຣະຜູ້ເປັນເຈົ້າ. ການສົນທະນານີ້ກໍ່ໃຫ້ເກີດຄວາມຜ່ອງໃສໃນຈິດວິນຍານ, ການມີສະຕິ ແລະ ຄວາມສຸກໃຈ, ກໍ່ໃຫ້ເກີດພະລັງດຶງດູດໃໝ່ໆຈາກອານາຈັກສະຫວັນ, ແລະກໍ່ໃຫ້ເກີດຄວາມຕື່ນຕົວຕໍ່ພູມປັນຍາທີ່ສູງຂຶ້ນ.**[11]

1. ສະພາວະໃດຄືສະພາວະທີ່ຫອມຫວານທີ່ສຸດໃນໂລກແຫ່ງການດຳລົງຢູ່?____________

________________________________________

2. ວະລີທີ່ວ່າ "ສະພາວະຂອງການອະທິດຖານ" ໝາຍຄວາມວ່າແນວໃດ?____________

________________________________________

________________________________________

3. ຈົ່ງກ່າວເຖິງຄຸນລັກສະນະບາງຢ່າງທີ່ການອະທິດຖານກໍ່ໃຫ້ເກີດຂຶ້ນ? ________________

________________________________________________________________

________________________________________________________________

4. ຂໍໃຫ້ທົບທວນພຣະທັມມະລິຂິດ ທີ່ເຈົ້າໄດ້ສຶກສາໄປໃນສອງສາມຕອນທີ່ຜ່ານມາ ແລະ ຂຽນຫ້າຂໍ້ຄວາມກ່ຽວກັບລັກສະນະຂອງການອະທິດຖານ.
   – ການອະທິດຖານເປັນ ________________________________
   – ການອະທິດຖານເປັນ ________________________________
   – ການອະທິດຖານເປັນ ________________________________
   – ການອະທິດຖານເປັນ ________________________________
   – ການອະທິດຖານເປັນ ________________________________

## ຕອນທີ 6

ຈົ່ງອ່ານ ແລະ ໄຕ່ຕອງພຣະວັດຈະນະຂອງ ພຣະບາຮາອຸລລາຫ໌ຂ້າງລຸ່ມນີ້:

**"ຈົ່ງຂັບຂານ, ໂອ ຄົນຮັບໃຊ້ຂອງເຮົາ, ພຣະວັດຈະນະຂອງພຣະຜູ້ເປັນເຈົ້າທີ່ເຈົ້າໄດ້ຮັບ, ແມ່ນໄດ້ຂັບຂານໂດຍຜູ້ທີ່ເຂົ້າໃກ້ພຣະອົງ, ເພື່ອໃຫ້ຄວາມຫອມຫວານແຫ່ງທຳນອງຂອງເຈົ້າຈູດໄຟຂຶ້ນໃນຈິດວິນຍານຂອງເຈົ້າເອງ ແລະ ດຶງດູດຫົວໃຈຂອງມວນມະນຸດ. ຫາກຜູ້ໃດອ່ານອອກສຽງພຣະວັດຈະນະ ທີ່ໄດ້ຮັບການເປີດເຜີຍໂດຍພຣະຜູ້ເປັນເຈົ້າຢູ່ພຽງຜູ້ດຽວໃນຫ້ອງຂອງເຂົາ, ເຫຼົ່າເທບທິດາຂອງພຣະຜູ້ຊົງອານຸພາບທີ່ສະຖິດຢູ່ທົ່ວທຸກແຫ່ງຫົນ ຈະຊ່ວຍກະຈາຍສຸຄົນທະລົດແຫ່ງພຣະວັດຈະນະ ທີ່ເປັ່ງອອກມາຈາກປາກຂອງເຂົາອອກໄປກວ້າງໄກ ແລະ ດົນບັນດານໃຫ້ຫົວໃຈຂອງມະນຸດທີ່ຊອບທັມທຸກຄົນຟົດຟື້ນຂຶ້ນ. ແມ່ນວ່າໃນຕອນທຳອິດເຂົາອາດບໍ່ທັນເຂົ້າໃຈເລິກເຊິ່ງເຖິງຜົນຂອງການອະທິດຖານ, ບໍ່ຊ້າກໍ່ໄວ ອຳນາດຂອງພຣະກະລຸນາທີ່ເຂົາໄດ້ຮັບ ຈະຊ່ວຍຊຸກຍູ້ໃຫ້ເຂົາຈຳເປັນຕ້ອງໃຊ້ອິດທິພົນຂອງການອະທິດຖານກັບດວງວິນຍານຂອງເຂົາ. ດັ່ງນັ້ນ, ຄວາມເລິກລັບຂອງການເປີດເຜີຍພຣະທັມຂອງພຣະຜູ້ເປັນເຈົ້າ ຖືກປະກາສິດໄວ້ດ້ວຍອຳນາດແຫ່ງພຣະປະສົງຂອງພຣະອົງ ພຣະຜູ້ຊົງເປັນບໍ່ເກີດແຫ່ງອານຸພາບ ແລະ ອັດສະລິຍະພາບ."**[12]

1. "ການຂັບຂານ" ໝາຍຄວາມວ່າແນວໃດ? ________________________________

________________________________________________________________

2. ພວກເຮົາຄວນຂັບຂານບົດກະວີຕ່າງໆຂອງພຣະຜູ້ເປັນເຈົ້າແນວໃດ? ______________

______________________________________________________________

______________________________________________________________

3. ຄຳວ່າ "ອ່ານອອກສຽງ" ໝາຍຄວາມວ່າຢ່າງໃດ? ___________________________

______________________________________________________________

4. ຄຳວ່າ "ກະຈາຍ" ໝາຍຄວາມວ່າແນວໃດ? _______________________________

______________________________________________________________

5. ຄວາມຫວານແຫ່ງທຳນອງຂອງເຮົາ ຈະມີຜົນແນວໃດຕໍ່ຈິດວິນຍານຂອງຕົວເຮົາເອງ? ___

______________________________________________________________

______________________________________________________________

6. ຄວາມຫວານແຫ່ງທຳນອງຂອງເຮົາ ຈະມີຜົນແນວໃດຕໍ່ຫົວໃຈຂອງຜູ້ອື່ນ? ___________

______________________________________________________________

______________________________________________________________

## ຕອນທີ 7

ເຈົ້າອາດຕ້ອງການທ່ອງຈຳສອງວັກ ຈາກບົດອະທິດຖານທີ່ໄດ້ຮັບການເປີດເຜີຍໂດຍພຣະບາຮາອຸລລາຫ໌:

**"ໂອ ພຣະຜູ້ເປັນເຈົ້າ, ພຣະຜູ້ເປັນເຈົ້າຂອງຂ້າພະອົງ! ຂໍຊົງຢ່າໄດ້ສົນໃຈຕໍ່ຄວາມຫວັງ ແລະ ການກະທຳຂອງຂ້າພະອົງ, ຂໍຊົງຖືຕາມພຣະປະສົງຂອງພຣະອົງທີ່ໂອບຮອບສະຫວັນ ແລະ ໂລກ. ພຣະນາມອັນຍິ່ງໃຫຍ່ທີ່ສຸດຂອງພຣະອົງເປັນພະຍານ, ໂອ ພຣະຜູ້ຊົງເປັນນາຍແຫ່ງປະຊາຊາດທັງປວງ! ຂ້າພະອົງປາດຖະໜາແຕ່ສິ່ງທີ່ພຣະອົງຊົງປາດຖະໜາ ແລະ ຮັກແຕ່ສິ່ງທີ່ພຣະອົງຊົງຮັກເທົ່ານັ້ນ."[13]**

**"ພຣະອົງຊົງຄວາມສູງສົ່ງເກີນກວ່າຄຳສັນລະເສີນຂອງບັນດາຜູ້ທີ່ໃກ້ພຣະອົງ ເພື່ອລ່ອງລອຍຂຶ້ນໄປສູ່ສະຫວັນແຫ່ງຄວາມໃກ້ຊິດກັບພຣະອົງ, ຫຼື ເພື່ອວິຫົກແຫ່ງຫົວໃຈຂອງບັນດາຜູ້ທີ່ອຸທິດຕົວຕໍ່ພຣະອົງຈະໄປເຖິງປະຕູຂອງພຣະອົງ. ຂ້າພະອົງຂໍຢັ້ງຢືນວ່າ ພຣະອົງຊົງຄວາມສັກສິດເໜືອຄຸນລັກສະນະ ແລະ ນາມທັງປວງ. ບໍ່ມີພຣະຜູ້ເປັນເຈົ້າອື່ນໃດອີກນອກຈາກພຣະອົງ, ພຣະຜູ້ຊົງປະເສີດສຸດ, ພຣະຜູ້ຊົງຄວາມຮຸ່ງເຮືອງ."[14]**

## ຕອນທີ 8

ພຣະອັບດຸລບາຮາ ກ່າວວ່າ:

**"ເປັນການສົມຄວນທີ່ຄົນຮັບໃຊ້ຈະສວດອະທິດຖານ ແລະ ຂໍຄວາມຊ່ວຍເຫຼືອຈາກພຣະຜູ້ ເປັນເຈົ້າ, ແລະວິງວອນ ແລະ ຮ້ອງຂໍຄວາມຊ່ວຍເຫຼືອຈາກພຣະອົງ. ສິ່ງນີ້ແມ່ນລຳດັບ ຂັ້ນຂອງການຮັບໃຊ້, ແລະ ພຣະຜູ້ເປັນນາຍຈະຊົງບັນຊາສິ່ງໃດກໍຕາມທີ່ພຣະອົງຊົງປາດຖະໜາ, ຊຶ່ງເປັນໄປຕາມພຣະປີຊາຍານອັນສົມບູນຢ່າງຍິ່ງຂອງພຣະອົງ."**[15]

ແລະ ພຣະອັບດຸລບາຮາ ອະທິບາຍວ່າ:

**"ຈິດວິນຍານມີອິດທິພົນ; ການອະທິດຖານມີຜົນທາງຈິດວິນຍານ. ດັ່ງນັ້ນ, ໃຫ້ເຮົາອະທິດຖານວ່າ, ໂອ ພຣະຜູ້ເປັນເຈົ້າ! ຂໍຊົງຮັກສາຄົນເຈັບຜູ້ນີ້! ບາງທີພຣະຜູ້ເປັນເຈົ້າອາດຈະຕອບຕໍ່ຄຳອະທິດຖານ. ສຳຄັນຫຼືບໍ່ວ່າແມ່ນໃຜເປັນຜູ້ອະທິດຖານ? ພຣະຜູ້ເປັນເຈົ້າຈະຊົງຕອບຕໍ່ຄຳອະທິດຖານຂອງຄົນຮັບໃຊ້ທຸກຄົນຂອງພຣະອົງ ຫາກຄຳອະທິດຖານນັ້ນເປັນເລື່ອງຮີບດ່ວນ. ຄວາມເມດຕາປານີຂອງພຣະອົງຍິ່ງໃຫຍ່ ແລະ ໄຮ້ຂີດຈຳກັດ. ພຣະຜູ້ເປັນເຈົ້າຊົງຕອບຄຳອະທິດຖານຂອງຄົນຮັບໃຊ້ຂອງພຣະອົງທຸກຄົນ. ພຣະອົງຊົງຕອບຄຳອະທິດຖານຂອງພືດຕົ້ນນີ້, ຊຶ່ງພືດອະທິດຖານຢ່າງຊ້ອນແຝງວ່າ, 'ໂອ ພຣະຜູ້ເປັນເຈົ້າ! ຂໍຊົງປະທານນ້ຳຝົນໃຫ້ແກ່ຂ້າພະອົງ' ພຣະຜູ້ເປັນເຈົ້າຊົງຕອບຕໍ່ຄຳອະທິດຖານ, ແລະພືດນັ້ນກໍເຕີບໃຫຍ່ຂຶ້ນ. ພຣະຜູ້ເປັນເຈົ້າຈະຊົງຕອບຄຳອະທິດຖານຂອງທຸກຄົນ."**[16]

ເປັນເລື່ອງທຳມະດາທີ່ຢູ່ໃນການອະທິດຖານຂອງພວກເຮົາ ເຮົາອາດຈະຂໍໃຫ້ພຣະຜູ້ເປັນເຈົ້າຊົງຕອບສະໜອງຄວາມຕ້ອງການຂອງເຮົາ. ດັ່ງນັ້ນ, ພວກເຮົາຈຶ່ງອະທິດຖານເພື່ອສຸຂະພາບຂອງເຮົາ ແລະ ສຸຂະພາບຂອງຄົນທີ່ເຮົາຮັກ, ພວກເຮົາສວດອະທິດຖານເພື່ອຄວາມຈະເລີນກ້າວ ໜ້າທາງຈິດວິນຍານ ແລະ ທາງວັດຖຸຂອງຄອບຄົວເຮົາ ແລະ ພວກເຮົາອະທິດຖານເພື່ອຂໍການນຳທາງ. ພວກເຮົາຂໍຄວາມເຂັ້ມແຂງ, ຄວາມສັດທາ ແລະ ການຮັບຮອງໃນຫົນທາງແຫ່ງການຮັບໃຊ້. ແນ່ນອນວ່າ, ໃນການສວດອະທິດຖານເຖິງພຣະຜູ້ເປັນເຈົ້າ, ພວກເຮົາຄວນຈື່ໄວ້ວ່າເປົ້າໝາຍໃນຊີວິດ ຂອງພວກເຮົາຄືການເຮັດໃຫ້ຄວາມປະສົງຂອງເຮົາ ສອດຄ່ອງກັບພຣະປະສົງຂອງພຣະອົງ. ດັ່ງນັ້ນ, ພວກເຮົາຕ້ອງອະທິດຖານ ຂໍໃຫ້ພຣະປະສົງຂອງພຣະອົງບັນລຸສູ່ຄວາມສຳເລັດ ແລະ ພ້ອມທີ່ຈະຍອມເຮັດຕາມພຣະປະສົງນັ້ນ. ຫາກເຈົ້າພະຍາຍາມຍຶດໝັ້ນໃນວັດຈະນະຕໍ່ໄປນີ້ຂອງ ພຣະອັບດຸລບາຮາໄວ້ໃນຄວາມຊົງຈຳ, ພຣະວັດຈະນະຕອນນີ້ຈະເຮັດໜ້າທີ່ເປັນແຫຼ່ງກຳເນີດແຫ່ງຄວາມສຸກ ແລະ ຄວາມໝັ້ນໃຈໃຫ້ເຈົ້າຢູ່ຕະຫຼອດເວລາ:

"ໂອ ເຈົ້າຜູ້ທີ່ກຳລັງຫັນໜ້າໄປຫາພຣະຜູ້ເປັນເຈົ້າ! ຈົ່ງປິດຕາຂອງເຈົ້າຈາກສິ່ງອື່ນໃດທັງໝົດ, ແລະເປີດຕາຂຶ້ນເພື່ອເບິ່ງໄປຍັງອານາຈັກແຫ່ງຄວາມຮຸ່ງເຮືອງເຫຼືອງເຫຼື້ອມ. ຈົ່ງຂໍສິ່ງໃດກໍຕາມທີ່ເຈົ້າປາດຖະໜາຈາກພຣະອົງພຽງຜູ້ດຽວ; ຈົ່ງສະແຫວງຫາສິ່ງໃດກໍຕາມທີ່ເຈົ້າ ສະແຫວງຫາຈາກພຣະອົງພຽງຜູ້ດຽວ. ພຣະອົງຊົງມອບຄວາມຫວັງນັບແສນ, ດ້ວຍການທອດພຣະເນດມາພຽງຄັ້ງດຽວ, ພຣະອົງຊົງປິ່ນປົວຄວາມເຈັບເປັນເອັນຮ້າຍນັບແສນທີ່ບໍ່ປິ່ນປົວບໍ່ໄດ້, ດ້ວຍການກົ້ມພຣະພັກພຽງຄັ້ງດຽວ, ພຣະອົງຊົງໃສ່ຢາຮັກສາໃຫ້ກັບທຸກບາດແຜ, ດ້ວຍການທອດພຣະເນດຜ່ານພຽງແວບດຽວ, ພຣະອົງຊົງປົດປ່ອຍຫົວໃຈທັງຫຼາຍ ໃຫ້ຫຼຸດພົ້ນຈາກພັນທະນາການແຫ່ງຄວາມເສົ້າໂສກ. ພຣະອົງຊົງກະທຳດັ່ງທີ່ພຣະອົງຊົງກະທຳ, ແລະ ພວກເຮົາຈະຂໍຄວາມຊ່ວຍເຫຼືອຫຍັງອີກ? ພຣະອົງຊົງດຳເນີນການຕາມພຣະປະສົງຂອງພຣະອົງ, ພຣະອົງຊົງບັນຍັດສິ່ງທີ່ພຣະອົງຊົງເພິ່ງພໍພຣະໄທ. ດັ່ງນັ້ນ, ຈຶ່ງເປັນການດີກວ່າທີ່ເຈົ້າຈະນ້ອມສີສະລົງດ້ວຍຄວາມຈຳນົນ, ແລະມອບຄວາມໄວ້ວາງໃຈຂອງເຈົ້າໄວ້ກັບພຣະຜູ້ເປັນນາຍ ຜູ້ຊົງປ່ຽມດ້ວຍຄວາມເມດຕາປານີ."[17]

## ຕອນທີ 9

ຈາກທຸກສິ່ງທີ່ເຮົາໄດ້ສຶກສາມາຈົນເຖິງຕອນນີ້, ເປັນສິ່ງທີ່ເຫັນໄດ້ຊັດເຈນວ່າການຫັນໄປຫາພຣະຜູ້ເປັນເຈົ້າດ້ວຍການອະທິດຖານ ເປັນສິ່ງຈຳເປັນທີ່ສຳຄັນຢ່າງຍິ່ງຕໍ່ຊີວິດທາງຈິດວິນຍານ. ການອະທິດຖານຕໍ່ພຣະຜູ້ເປັນເຈົ້າທັນທີຫຼັງຈາກຕື່ນນອນຕອນເຊົ້າ ແລະ ຕອນກາງຄືນກ່ອນເຂົ້ານອນນັ້ນ, ແມ່ນຫອມຫວານເປັນພິເສດພຽງໃດ. ເວລາທີ່ເຮົາໃຊ້ໃນການອະທິດຖານໃນແຕ່ລະວັນ ແລະ ຈຳນວນບົດອະທິດຖານທີ່ເຮົາສວດນັ້ນ ຂຶ້ນຢູ່ກັບຄວາມຕ້ອງການ ແລະ ຄວາມຫິວກະຫາຍທາງຈິດວິນຍານຂອງເຮົາ. ໃນທຸກໂອກາດ, ພວກເຮົາສາມາດເລືອກໄດ້ຈາກບົດອະທິດຖານ ຈຳນວນຫຼວງຫຼາຍທີ່ໄດ້ຮັບການເປີດເຜີຍໂດຍ ພຣະບາຮາອຸລລາຫ໌, ພຣະບ໊ອບ ແລະ ພຣະອັບດຸລບາຮາ. ຢ່າງໃດກໍຕາມພຣະບາຮາອຸລລາຫ໌ ຊົງເປີດເຜີຍບົດອະທິດຖານບັງຄັບປະຈຳວັນໄວ້ສາມບົດ. ທ່ານ ໂຊເກ ເອັບເຟັນດີ ກ່າວວ່າ:

"ບົດອະທິດຖານບັງຄັບປະຈຳວັນມີຢູ່ 3 ບົດ. ບົດສັ້ນທີ່ສຸດປະກອບດ້ວຍເນື້ອຫາຕອນ ດຽວທີ່ຕ້ອງອ່ານອອກສຽງໜຶ່ງຄັ້ງໃນທຸກ 24 ຊົ່ວໂມງໃນຕອນທ່ຽງ. ບົດປານກາງ, ທີ່ເລີ່ມຕົ້ນດ້ວຍຂໍ້ຄວາມວ່າ 'ພຣະຜູ້ເປັນນາຍຊົງເປັນພະຍານວ່າ ບໍ່ມີພຣະຜູ້ເປັນເຈົ້າອື່ນໃດອີກນອກຈາກພຣະອົງ,' ແຕ່ຕ້ອງອ່ານອອກສຽງ 3 ຄັ້ງໃນໜຶ່ງວັນ, ຄືຕອນເຊົ້າ, ຕອນທ່ຽງ ແລະ ຕອນຄ່ຳ. ບົດອະທິດຖານນີ້ແມ່ນໃຫ້ສວດໄປພ້ອມກັບການກະທຳທາງກາຍຍະພາບ ແລະ ການເຮັດທ່າ ທາງສະເພາະບາງຢ່າງ. ບົດອະທິດຖານແບບຍາວແມ່ນເປັນບົດທີ່ລະອຽດທີ່ສຸດໃນສາມບົດນີ້, ຈະຕ້ອງອ່ານອອກສຽງໜຶ່ງຄັ້ງໃນທຸກ 24 ຊົ່ວໂມງ, ແລະໃນເວລາໃດກໍໄດ້ທີ່ຮູ້ສຶກເໝາະຄວນ.

> "ສາສະນິກະຊົນມີອິດສະຫຼະຢ່າງເຕັມທີ່ໃນການເລືອກບົດໃດບົດໜຶ່ງໃນ 3 ບົດນີ້, ແຕ່ຕ້ອງປະຕິບັດພາຍໃຕ້ຂໍ້ກຳນົດຂອງການສວດບົດນັ້ນ, ແລະສອດຄ່ອງກັບຄຳແນະນຳ ທີ່ກຳກັບໄວ້ສະເພາະໃນແຕ່ລະບົດ."[18]

ແລະ ທ່ານຍັງກ່າວຕໍ່ອີກວ່າ:

> "ບົດອະທິດຖານບັງຄັບປະຈຳວັນເຫຼົ່ານີ້, ພ້ອມກັບບົດອະທິດຖານສະເພາະອື່ນໆ, ເຊັ່ນ ບົດອະທິດຖານເພື່ອການຮັກສາປິ່ນປົວ, ພຣະຣາຊະສານເຖິງອາຫ໌ມາດ, ໄດ້ຮັບການປະສິດປະສາດດ້ວຍອຳນາດ ແລະ ຄວາມໝາຍເປັນພິເສດໂດຍ ພຣະບາຮາອຸລລາຫ໌, ແລະດັ່ງນັ້ນ, ຄວນໄດ້ຮັບການຍອມຮັບໃນຖານະດັ່ງກ່າວ ແລະ ໄດ້ຮັບການສວດອອກສຽງໂດຍສາສະນິກະຊົນຜູ້ມີຄວາມສັດທາ ແລະ ຄວາມໝັ້ນຄົງຢ່າງບໍ່ຕ້ອງສົງໃສ, ໂດຍຜ່ານບົດອະທິດຖານເຫຼົ່ານີ້ພວກເຮົາຈະສາມາດເຂົ້າໃກ້ຊິດ ກັບພຣະຜູ້ເປັນເຈົ້າຫຼາຍຂຶ້ນ, ແລະພິສູດຕົນເອງໃນການປະຕິບັດຕາມກົດ ແລະ ຫຼັກທັມຂອງພຣະອົງໄດ້ດີຂຶ້ນ."[19]

ບົດອະທິດຖານບັງຄັບສາມບົດທີ່ເປີດເຜີຍໂດຍພຣະບາຮາອຸລລາຫ໌ ແມ່ນໃຊ້ສວດອະທິດຖານສ່ວນຕົວໂດຍລຳພັງ. ປະເພດຂອງການອະທິດຖານແບບອ່ານອອກສຽງຮ່ວມກັນເປັນໝູ່ຄະນະຕາມພິທີກຳພາຍໃຕ້ເງື່ອນ ໄຂໃດໜຶ່ງນັ້ນ, ບໍ່ມີໃນສາສະໜາບາຮາຍ. ບົດອະທິດຖານສຳລັບຜູ້ຕາຍເປັນບົດອະທິດຖານສຳລັບອ່ານອອກ ສຽງຊ້ຳໄປຊ້ຳມາເປັນໝູ່ຄະນະພຽງບົດດຽວ ທີ່ບັນຍັດໄວ້ໃນກົດບາຮາຍ. ບົດອະທິດຖານດັ່ງກ່າວນີ້ຕ້ອງສວດກ່ອນຝັງສົບທີ່ສວດໂດຍຜູ້ໃດຜູ້ໜຶ່ງທີ່ຢູ່ໃນງານນັ້ນ, ໃນຂະນະທີ່ຄົນອື່ນໆທີ່ເຫຼືອຢືນຢູ່ໃນຄວາມສະຫງົບ.

1. ຄຳວ່າ "ບັງຄັບ" ໝາຍຄວາມວ່າແນວໃດ? ______________________________________

   ______________________________________________________________________

2. ພຣະບາຮາອຸລລາຫ໌ ຊົງເປີດເຜີຍບົດອະທິດຖານບັງຄັບປະຈຳວັນໄວ້ຈັກບົດ? ___________

3. ພວກເຮົາຄວນອ່ານອອກສຽງບົດອະທິດຖານບັງຄັບທັງ 3 ບົດທຸກວັນແມ່ນບໍ່?___________

4. ຫາກເຮົາເລືອກສວດບົດອະທິດຖານບັງຄັບບົດຍາວ, ເຮົາຄວນອ່ານອອກສຽງຈັກຄັ້ງໃນແຕ່ລະວັນ?

   ______________________________________________________________________

5. ຫາກເຮົາເລືອກສວດບົດອະທິດຖານບັງຄັບບົດປານກາງ, ເຮົາຄວນສວດຈັກຄັ້ງໃນແຕ່ລະວັນ?_

   ______________________________________________________________________

6. ຫາກເຮົາເລືອກສວດບົດອະທິດຖານບັງຄັບບົດສັ້ນ, ເຮົາຄວນສວດຈັກຄັ້ງໃນແຕ່ລະວັນ?_____

______________________________________________________________

7. ຈົ່ງກ່າວເຖິງບົດອະທິດຖານບາງບົດທີ່ມີອຳນາດພິເສດ: ________________________

______________________________________________________________

______________________________________________________________

8. ຈົ່ງທ່ອງຈຳບົດອະທິດຖານບັງຄັບບົດສັ້ນນີ້, ຫາກເຈົ້າຍັງບໍ່ທັນໄດ້ທ່ອງຈຳ:

**"ໂອ ພຣະຜູ້ເປັນເຈົ້າ, ຂ້າພະອົງຂໍເປັນສັກຂີພະຍານວ່າ, ພຣະອົງໄດ້ຊົງສ້າງຂ້າພະອົງຂຶ້ນມາ ເພື່ອຈະໄດ້ຮູ້ຈັກ ແລະ ນະມັດສະການພຣະອົງ. ຂະນະນີ້, ຂ້າພະອົງຂໍຢັ້ງຢືນຄວາມປາສະຈາກອຳນາດວາດສະໜາຂອງຂ້າພະອົງ ຕໍ່ສັກດານຸພາບຂອງພຣະອົງ, ຄວາມທຸກຍາກຂອງຂ້າພະອົງ ຕໍ່ຄວາມອຸດົມຮັ່ງມີຂອງພຣະອົງ. ບໍ່ມີພຣະຜູ້ເປັນເຈົ້າອື່ນໃດນອກຈາກພຣະອົງ, ພຣະຜູ້ຊົງຊ່ວຍເຫຼືອໃນໄພອັນຕະລາຍ, ພຣະຜູ້ຊົງດຳລົງຢູ່ດ້ວຍພຣະອົງເອງ."[20]**

9. ໃນບົດອະທິດຖານບັງຄັບບົດສັ້ນນີ້ທ່ານໄດ້ຢັ້ງຢືນຫຍັງ?________________________

______________________________________________________________

______________________________________________________________

______________________________________________________________

## ຕອນທີ 10

ພວກເຮົາຄວນຈື່ໄວ້ວ່າ, ນອກເໜືອຈາກພອນທີ່ພວກເຮົາໄດ້ຮັບຈາກການເຊື່ອຟັງກົດຂອງການອະທິດຖານພາກບັງຄັບ ແລະ ການບຳລຸງລ້ຽງທີ່ເຮົາໄດ້ຮັບຈາກການສວດບົດອະທິດຖານອື່ນໆດ້ວຍຕົວເຮົາເອງຕາມລຳພັງແລ້ວ, ຈິດວິນຍານຂອງພວກເຮົາຈະໄດ້ຮັບການຍົກສູງຂຶ້ນ ໃນຍາມທີ່ພວກເຮົາໄດ້ຍິນບົດອະທິດຖານທີ່ອ່ານອອກສຽງກັນໃນທີ່ຊຸມນຸມ, ບໍ່ວ່າຈະເປັນທີ່ຊຸມນຸມຂະໜາດໃຫຍ່ຫຼືນ້ອຍ. ພຣະບາຮາອຸລາຫ໌ ຊົງມີພຣະກະແສຮັບສັ່ງກັບພວກເຮົາວ່າ:

> **"ຈົ່ງເຕົ້າໂຮມກັນດ້ວຍຄວາມສຸກສັນຫັນສາ ແລະ ໄມຕີຈິດຢ່າງເຕັມທີ່ ແລະອ່ານອອກສຽງພຣະວັດຈະ ນະຕ່າງໆ ທີ່ໄດ້ຮັບການເປີດເຜີຍໂດຍພຣະຜູ້ເປັນນາຍຜູ້ຊົງປານີ. ໂດຍການກະທຳເຊັ່ນນີ້ ປະຕູແຫ່ງຄວາມຮູ້ທີ່ແທ້ຈິງຈະເປີດອອກໃຫ້ແກ່ຈິດວິນຍານຂອງພວກເຈົ້າ, ແລະຈາກນັ້ນພວກເຈົ້າຈະຮູ້ສຶກວ່າ ວິນຍານຂອງພວກເຈົ້າໄດ້ຮັບການປະສິດປະສາດດ້ວຍຄວາມໝັ້ນຄົງ ແລະ ຫົວໃຈຂອງພວກເຈົ້າເຕັມປ່ຽມໄປດ້ວຍຄວາມສຸກສັນຫັນສາອັນຜ່ອງໃສ."[21]**

ພວກເຮົາທຸກຄົນໄດ້ຮັບຄວາມສຸກທັນສາອັນຍິ່ງໃຫຍ່ຈາກຄວາມຮູ້ທີ່ວ່າ, ໃນທົ່ວໂລກ, ການຊຸມນຸມກັນເພື່ອການອະທິດຖານໃນບ່ອນທີ່ບັນດາມິດສະຫາຍ ແລະ ເພື່ອນບ້ານທັງຫຼາຍມາເຕົ້າໂຮມກັນເພື່ອຕິດຕໍ່ພົວພັນກັບພຣະຜູ້ເປັນເຈົ້ານັ້ນ ກໍາລັງເພີ່ມທະວີຂຶ້ນຫຼາຍພັນແຫ່ງ. ສະພາຍຸຕິທັມສາກົນຊຽນວ່າ:

> **"ການຊຸມນຸມເພື່ອການອະທິດຖານ ເປັນໂອກາດທີ່ວິນຍານດວງໃດກໍຕາມຈະໄດ້ເຂົ້າມາ, ສູດດົມສຸຄົນທະລົດແຫ່ງສະຫວັນ, ສໍາພັດກັບຄວາມຫອມຫວານຂອງບົດອະທິດຖານ, ໄຕ່ຕອງຢ່າງເລິກເຊິ່ງກ່ຽວກັບ ພຣະວັດຈະນະແຫ່ງການສ້າງສັນ, ໄດ້ຮັບການນໍາພາໄປດ້ວຍປີກແຫ່ງຈິດວິນຍານ, ແລະຕິດຕໍ່ພົວພັນກັບພຣະອົງຜູ້ເປັນທີ່ຮັກ. ຄວາມຮູ້ສຶກແຫ່ງມິດຕະພາບ ແລະຈຸດປະສົງຮ່ວມກັນກໍ່ເກີດຂຶ້ນມາ, ໂດຍສະເພາະຢ່າງຍິ່ງໃນການສົນທະນາທັມທີ່ຖືກຍົກລະດັບທາງຈິດວິນຍານ ເກີດຂຶ້ນໂດຍທໍາມະຊາດໃນເວລາດັ່ງກ່າວ ແລະ ໂດຍການສົນທະນານີ້ 'ນະຄອນແຫ່ງຫົວໃຈຂອງມະນຸດ' ອາດຈະຖືກເປີດອອກ."**[22]

ໃນຍາມທີ່ພວກເຮົາຮູ້ສຶກຢາກອະທິດຖານ, ພວກເຮົາລໍຖ້າຢ່າງມິດງຽບຈັກໜ່ອຍໜຶ່ງເພື່ອຊໍາລະຈິດໃຈຂອງພວກເຮົາໃຫ້ໝົດສິ້ນໄປຈາກສິ່ງຕ່າງໆທາງໂລກນີ້. ຂະນະທີ່ສວດອະທິດຖານ, ໃຫ້ພວກເຮົາພະຍາຍາມມຸ່ງຄວາມຄິດຂອງຕົນໄປທີ່ພຣະຜູ້ເປັນເຈົ້າ. ພາຍຫຼັງຈາກທີ່ພວກເຮົາໄດ້ອ່ານອອກສຽງບົດອະທິດຖານແລ້ວ, ເຮົາຈະຍັງຄົງມິດງຽບຢູ່ອີກໜ່ອຍໜຶ່ງ ແລະ ຈະບໍ່ເຄື່ອນຢ່າງກະທັນຫັນໄປເຮັດກິດຈະກໍາອື່ນ. ກໍຄືກັບໃນຍາມທີ່ພວກເຮົາຟັງບົດອະທິດຖານທີ່ສວດໂດຍຜູ້ອື່ນໃນການຊຸມນຸມ. ໃນໂອກາດດັ່ງກ່າວ, ພວກເຮົາຈະຮັກສາທ່າທີຂອງການອະທິດຖານ ແລະ ຕັ້ງໃຈຟັງແຕ່ລະຄໍາເວົ້າຢ່າງໃກ້ຊິດ, ຄືກັບວ່າເຮົາເປັນຜູ້ອ່ານອອກສຽງຄໍາເວົ້າເຫຼົ່ານັ້ນເອງ.

1. ພວກເຮົາຄວນເຕົ້າໂຮມກັນດ້ວຍຈິດວິນຍານແນວໃດ ໃນຄະນະທີ່ມີການອ່ານອອກສຽງບົດພຣະທັມຂອງພຣະຜູ້ເປັນເຈົ້າ? ______________________________

   ______________________________

2. ແມ່ນຫຍັງຄືຜົນທີ່ໄດ້ຈາກການຊຸມນຸມກັນຂອງພວກເຮົາ ເພື່ອອ່ານອອກສຽງບົດພຣະທັມຂອງພຣະຜູ້ເປັນເຈົ້າ?______________________________

   ______________________________

3. ການຊຸມນຸມເພື່ອການອະທິດຖານ ເປັນໂອກາດທີ່ຈິດວິນຍານໃດກໍຈະສາມາດ:
   - ______________,
   - ______________________________,
   - ______________________________,
   - ______________________________,

- ______________________________________________, ແລະ
- ______________________________________________.

4. ຄວາມຮູ້ສຶກຫຍັງທີ່ເກີດຂຶ້ນໃນການຊຸມນຸມເພື່ອການອະທິດຖານ?

______________________________________________

______________________________________________

5. ແມ່ນຫຍັງຄືຜົນຂອງການສົນທະນາທີ່ຖືກຍົກສູງທາງຈິດວິນຍານ ຊຶ່ງເກີດຂຶ້ນໂດຍທຳມະຊາດໃນການຊຸມນຸມເພື່ອການອະທິດຖານ?

______________________________________________

______________________________________________

6. ຈົ່ງຂຽນຂໍ້ຄວາມສັ້ນໆກ່ຽວກັບທ່າທີທີ່ເຕັມໄປດ້ວຍຄວາມເຄົາລົບ ທີ່ພວກເຮົາຄວນສະແດງໃນຍາມທີ່ອະທິດຖານ, ບໍ່ວ່າຈະຢູ່ຄົນດຽວ ຫຼື ໃນທີ່ຊຸມນຸມ.

______________________________________________

______________________________________________

______________________________________________

______________________________________________

## ຕອນທີ 11

ພາກທຳອິດຂອງປຶ້ມຫົວນີ້ ມຸ່ງເນັ້ນໄປທີ່ນິດໄສຂອງການອ່ານວັກຕອນຕ່າງໆຈາກພຣະທັມມະລິຂິດທຸກມື້ ແລະ ໄຕ່ຕອງຄວາມໝາຍຂອງພຣະທັມມະລິຂິດເຫຼົ່ານັ້ນ. ເຈົ້າໄດ້ໄຕ່ຕອງກ່ຽວກັບຄວາມສຳຄັນຂອງການອະທິດຖານ ຊຶ່ງມີຜົນຕໍ່ການເສີມສ້າງນິດໄສໃນການສວດອະທິດຖານເປັນປະຈຳທຸກມື້. ຕອນທີ່ຜ່ານມາ ໃຫ້ຄວາມສຳຄັນກັບການສັກກາລະບູຊາຮ່ວມກັນຂອງຊຸມຊົນ. ສິ່ງທີ່ເຈົ້າສຶກສາມາທັງໝົດຈົນຮອດຍາມນີ້ ໄດ້ກຽມ ພ້ອມໃຫ້ແກ່ເຈົ້າທີ່ຈະລົງມືກະທຳສິ່ງທຳອິດໃນຫົນທາງຂອງການຮັບໃຊ້, ຫາກເຈົ້າປາດຖະໜາທີ່ຈະເຮັດ ນັ້ນຄື: ການຈັດຊຸມນຸມເພື່ອການອະທິດຖານ.

ໃນຂັ້ນຕອນທຳອິດ, ເຈົ້າອາດຕ້ອງການທ່ອງຈຳບົດອະທິດຖານຈຳນວນໜຶ່ງ ແລະ ຫາໂອກາດທີ່ຈະແບ່ງປັນບົດອະທິດຖານເຫຼົ່ານັ້ນກັບໝູ່ສອງສາມຄົນ. ໃນຂະນະດຽວກັນ, ເຈົ້າສາມາດເຮັດໃຫ້ໝັ້ນໃຈໄດ້ວ່າ ເຈົ້າຈະເຂົ້າຮ່ວມການຊຸມນຸມເພື່ອການອະທິດຖານຢ່າງໜ້ອຍໜຶ່ງຄັ້ງໃນຊຸມ ຊົນຂອງເຈົ້າ ແລະ ເປັນຜູ້ໜຶ່ງໃນຜູ້ສະໜັບສະໜູນທີ່ກະຕືລືລົ້ນຂອງກິດຈະກຳນີ້. ໃນທີ່ສຸດ, ເຈົ້າອາດຈະຕັດສິນໃຈເປັນເຈົ້າພາບ ຈັດການຊຸມນຸມເພື່ອການອະທິດຖານດ້ວຍຕົວເອງ, ເຊີນມິດສະຫາຍ, ສະມາຊິກໃນຄອບຄົວ ແລະ ເພື່ອນບ້ານມາຮ່ວມຊຸມນຸມກັນເປັນປະຈຳເພື່ອອະທິດຖານ ແລະ ເພື່ອສ້າງມິດຕະພາບ.

ບໍ່ແມ່ນເລື່ອງແປກທີ່ຜູ້ເຂົ້າຮ່ວມສຶກສາຫຼັກສູດນີ້ສອງຫຼືສາມຄົນຈະເລີ່ມຈັດການຊຸມນຸມເພື່ອການອະທິດຖານນຳກັນ.

ດັ່ງທີ່ເຈົ້າສາມາດຈິນຕະນາການໄດ້ວ່າ, ບໍ່ມີສູດຕາຍຕົວສຳລັບວິທີການຈັດຊຸມນຸມເພື່ອການອະທິດຖານ. ແຕ່ກໍເປັນສິ່ງທີ່ເຫັນໄດ້ຢ່າງຈະແຈ້ງ ວ່າເປັນການເຕົ້າໂຮມກັນຂອງໝູ່ທີ່ມີການສວດບົດອະທິດຖານ, ມີການອ່ານຂໍ້ຄວາມຈາກພຣະທັມມະລິຂິດ, ແລະຍົກລະດັບການສົນທະນາ- ທັງໝົດນີ້ເກີດຂຶ້ນໃນບັນຍາກາດທາງສິລະທັມທີ່ພົ້ນເດັ່ນ. ເຈົ້າສາມາດເວົ້າສັ້ນໆໄດ້ບໍ່ກ່ຽວກັບແນວຄວາມຄິດດັ່ງຕໍ່ໄປນີ້, ໃນເວລາເປັນເຈົ້າພາບຂອງການຈັດຊຸມນຸມເພື່ອການອະທິດຖານ?

ກະຈາຍການເຊື້ອເຊີນທີ່ອົບອຸ່ນ ແລະ ເຕັມໄປດ້ວຍຄວາມຮັກ:

________________________________________

________________________________________

________________________________________

ການສ້າງສະພາບແວດລ້ອມທີ່ຍິນດີຕ້ອນຮັບ:

________________________________________

________________________________________

________________________________________

ການຮັກສາບັນຍາກາດແຫ່ງຄວາມເຄົາລົບນັບຖື:

________________________________________

________________________________________

________________________________________

ການສົ່ງເສີມມິດຕະພາບຢ່າງສຸກສັນທັນສາ:

________________________________________

________________________________________

________________________________________

ການຊຸກຍູ້ການສົນທະນາທີ່ຍົກລະດັບຈິດວິນຍານ:

________________________________________

________________________________________

________________________________________

**ໜັງສືອ້າງອີງ:**


1. *ປະມວນພຣະທັມຈາກພຣະທັມມະລິຂິດຂອງພຣະບາຮາອຸລລາຫ໌,* (Wilmette: Baha'I Publishing Trust, ຈັດພິມປີ 1983, 2017), XLIII, ວັກທີ 4, ພາສາອັງກິດໜ້າທີ 105.
2. ພຣະບາຮາອຸລລາຫ໌, ໃນປຶ້ມ *Trustworthiness: A Compilation of Extracts from the Bahá' Writings*, compiled by the Research Department of the Universal House of Justice (London: Bahá'í Publishing Trust, 1987), ເລກທີ 21, ພາສາອັງກິດໜ້າທີ 5.
3. *The Call of the Divine Beloved: ຄັດເລືອກມາຈາກ Mystical Works ຂອງ ພຣະບາຮາອຸລລາຫ໌* (Haifa: Bahá'í World Centre, 2018), ເລກທີ 2.43, ພາສາອັງກິດໜ້າທີ 31.
4. ຈາກຄຳກ່າວປາໄສໃນວັນທີ 5 ພຶດສະພາ 1912, ພິມເຜີຍແຜ່ລົງໃນປຶ້ມ *The Promulgation of Universal Peace: ຈາກຄຳກ່າວປາໃສໂດຍ ພຣະອັບດຸລບາຮາ ໃນຊ່ວງທີ່ພຣະອົງຢ້ຽມຢາມສະຫະລັດອາເມຣິກາ ແລະ ການາດາ ໃນປີ 1912* (Wilmette: Bahá'í Publishing, 2012), ພາສາອັງກິດໜ້າທີ 127.
5. ພຣະບາຮາອຸລລາຫ໌, ໃນປຶ້ມ *ພຣະວັດຈະນະແຫ່ງຄວາມລີ້ລັບ* (Wilmette: Bahá'í Publishing Trust, ຈັດພິມປີ 2003, 2012), ພາສາອາຫຣັບ ເລກທີ 13, ພາສາອັງກິດໜ້າທີ 6-7.
6. ຈາກຈົດໝາຍລົງວັນທີ 8 ທັນວາ 1935 ຂຽນໂດຍ ທ່ານ ໂຊເກ ເອັຟເຟັນດີ, ພິມເຜີຍແຜ່ໃນປຶ້ມ *Prayer and Devotional Life: A Compilation of Extracts from the Writings ຂອງພຣະບາຮາອຸລລາຫ໌, ພຣະບ໊ອບ ແລະ ພຣະອັບດຸລບາຮາ ແລະ ຈົດໝາຍຕ່າງໆຂອງ ທ່ານ ໂຊເກ ເອັຟເຟັນດີ ແລະ ສະພາຍຸຕິທັມແຫ່ງສາກົນ*, compiled by the Research Department of the Universal House of Justice (Wilmette: Bahá'í Publishing, 2019), ເລກທີ 71, ພາສາອັງກິດໜ້າທີ 31.
7. ຖ້ອຍຄຳກ່າວຂອງພຣະອັບດຸລບາຮາ, cited by J. E. Esslemont, ໃນປຶ້ມ *ພຣະບາຮາອຸລລາຫ໌ ແລະ ລະບົບໂລກໃໝ່: An Introduction to the Bahá'I Faith* (Wilmette: Bahá'í Publishing, ຈັດພິມປີ 2006, 2017), ພາສາອັງກິດໜ້າທີ 106.
8. ຖ້ອຍຄຳກ່າວຂອງພຣະອັບດຸລບາຮາ, cited by J. E. Esslemont, ໃນປຶ້ມ *ພຣະບາຮາອຸລລາຫ໌ ແລະ ລະບົບໂລກໃໝ່: An Introduction to the Bahá'I Faith* (Wilmette: Bahá'í Publishing, ຈັດພິມປີ 2006, 2017), ພາສາອັງກິດໜ້າທີ 106.
9. ພຣະບາຮາອຸລລາຫ໌, ໃນປຶ້ມ *Bahá'I Prayers: A Selection of Prayers Revealed ໂດຍ ພຣະບາຮາອຸລລາຫ໌, ພຣະບ໊ອບ, ແລະ ພຣະອັບດຸລບາຮາ* (Wilmette: Bahá'í Publishing Trust, ຈັດພິມປີ 2002, 2017), ພາສາອັງກິດໜ້າທີ 7–8.

10. ພຣະບາຮາອຸລລາຫ໌, ໃນປຶ້ມ *Bahá'I Prayers: A Selection of Prayers Revealed ໂດຍພຣະບາຮາອຸລລາຫ໌, ພຣະບ໊ອບ, ແລະ ພຣະອັບດຸລບາຮາ* (Wilmette: Bahá'í Publishing Trust, ຈັດພິມປີ 2002, 2017), ພາສາອັງກິດໜ້າທີ 9.
11. ຖ້ອຍຄຳກ່າວຂອງພຣະອັບດຸລບາຮາ, *Cited in Star of the West*, vol. 8, ເລກທີ 4 (17 ພຶດສະພາ 1917), ພາສາອັງກິດໜ້າທີ 41.
12. *ປະມວນພຣະທັມຈາກພຣະທັມມະລິຂິດຂອງພຣະບາຮາອຸລລາຫ໌*, CXXXVI, ວັກທີ 2, ພາສາອັງກິດໜ້າທີ 334; ໃນປຶ້ມ *Bahá'I Prayers*, ໜ້າ iii.
13. ພຣະບາຮາອຸລລາຫ໌, ໃນປຶ້ມ *Bahá'I Prayers*, ໜ້າທີ 8–9.
14. ພຣະບາຮາອຸລລາຫ໌, ໃນປຶ້ມ *Bahá'I Prayers*, ໜ້າທີ 12.
15. ພຣະອັບດຸລບາຮາ, ໃນປຶ້ມ *Prayer and Devotional Life*, ເລກທີ 24, ພາສາອັງກິດໜ້າທີ 7.
16. ຈາກຄຳກ່າວປາໄສໂດຍພຣະອັບດຸລບາຮາ ໃນວັນທີ 5 ສິງຫາ 1912, ພິມເຜີຍແຜ່ລົງໃນປຶ້ມ *The Promulgation of Universal Peace*, ພາສາອັງກິດໜ້າທີ 345.
17. *ຄັດຈາກທັມມະລິຂິດຂອງພຣະອັບດຸລບາຮາ* (Wilmette: Bahá'í Publishing, ຈັດພິມປີ 2010, 2015), ເລກທີ 22.1, ພາສາອັງກິດໜ້າທີ 75–76.
18. ຈາກຈົດໝາຍລົງວັນທີ 10 ມັງກອນ 1936 ຂຽນໂດຍ ທ່ານ ໂຊເກ ເອັບເຟັນດີ, ພິມເຜີຍແຜ່ລົງໃນປຶ້ມ *Prayer and Devotional Life*, ເລກທີ 61, ພາສາອັງກິດໜ້າທີ 25.
19. ຈາກຈົດໝາຍ ລົງວັນທີ 10 ມັງກອນ 1936 ຂຽນໂດຍ ທ່ານ ໂຊເກ ເອັບເຟັນດີ, ກ່າວໃນປຶ້ມ *Bahá'I Prayers*, ພາສາອັງກິດໜ້າທີ 301.
20. ພຣະບາຮາອຸລລາຫ໌, ໃນປຶ້ມ *Bahá'I Prayers*, ພາສາອັງກິດໜ້າທີ 4.
21. ພຣະບາຮາອຸລລາຫ໌, ໃນປຶ້ມ *Prayer and Devotional Life*, ເລກທີ 68, ພາສາອັງກິດໜ້າທີ 29.
22. ຈາກຈົດໝາຍລົງວັນທີ 29 ທັນວາ 2015, ພິມເຜີຍແຜ່ລົງໃນປຶ້ມ *Framework for Action: ຄັດຈາກຂໍ້ຄວາມຂອງສະພາຍຸຕິທັມແຫ່ງສາກົນ ແລະ Supplementary Material, 2006–2016* (West Palm Beach: Palabra Publications, 2017), ເລກທີ 35.49, ພາສາອັງກິດໜ້າທີ 232.

**********************



# ຊີວິດ ແລະ ຄວາມຕາຍ

## ຈຸດປະສົງ

ເພື່ອໃຫ້ເຂົ້າໃຈວ່າ ຊີວິດບໍ່ແມ່ນຄວາມປຸ່ງນແປງ
ແລະ ຄວາມບັງເອີນຂອງໂລກນີ້
ແຕ່ຄວາມໝາຍທີ່ແທ້ຈິງຂອງຊີວິດນັ້ນ
ພົບໄດ້ໃນການພັດທະນາຂອງຈິດວິນຍານ

## ຕອນທີ 1

ຈິດວິນຍານຂອງມະນຸດນັ້ນສູງສົ່ງເໜືອກວ່າວັດຖຸທາດ ແລະ ໂລກທາງກາຍະພາບ. ໃນການກ່າວສູນທອນພິດຄັ້ງໜຶ່ງຂອງພຣະອັບດຸລບາຮາ, ພຣະອົງຊົງອະທິບາຍວ່າ:

**"ຮ່າງກາຍທີ່ເປັນວັດຖຸເຫຼົ່ານີ້ປະກອບດ້ວຍອາຕອມ; ເມື່ອອາຕອມເຫຼົ່ານີ້ເລີ່ມແຍກອອກຈາກກັນ , ການສະຫຼາຍຕົວກໍເລີ່ມຕົ້ນຂຶ້ນ, ຈາກນັ້ນສິ່ງທີ່ເຮົາເອີ້ນວ່າຄວາມຕາຍກໍມາເຖິງ..."**

**"ແຕ່ກັບຈິດວິນຍານນັ້ນແຕກຕ່າງກັນ. ຈິດວິນຍານບໍ່ແມ່ນການລວມເຂົ້າກັນຂອງທາດຕ່າງໆ, ຈິດວິນຍານບໍ່ໄດ້ປະກອບກັນດ້ວຍອາຕອມຈຳນວນຫຼາຍ, ຈິດວິນຍານເປັນທາດ ໜຶ່ງດຽວທີ່ແບ່ງແຍກບໍ່ໄດ້ ແລະ ດ້ວຍເຫດນີ້ຈຶ່ງເປັນນິລັນ. ຈິດວິນຍານຢູ່ນອກເໜືອລຳດັບຂອງການສ້າງສັນທາງກາຍຍະພາບທັງໝົດ; ຈິດວິນຍານເປັນອຳມະຕະ!"**

1. "ປະກອບດ້ວຍ" ມີໝາຍຄວາມວ່າແນວໃດ? ________________________________
2. ຈິດວິນຍານຂອງມະນຸດປະກອບດ້ວຍທາດຕ່າງໆ ເໝືອນຮ່າງກາຍທີ່ເປັນວັດຖຸຫຼືບໍ່? ____
________________________________________________________________
3. ຈິດວິນຍານຂອງມະນຸດເປັນສິ່ງທີ່ມີສະຖານະທາງກາຍຍະພາບຫຼືບໍ່? ______________
________________________________________________________________

## ຕອນທີ 2

ຈົດໝາຍທີ່ຂຽນໃນນາມຂອງທ່ານຜູ້ພິທັກສາສະໜາລະບຸວ່າ "ຈິດວິນຍານຂອງມະນຸດເກີດຂຶ້ນມາໃນເວລາຂອງການປະຕິສົນທິ."[2] ໃນການຕອບຄຳຖາມກ່ຽວກັບຄວາມໝາຍຂອງ "ການປະຕິສົນທິ", ສະພາຍຸຕິທັມແຫ່ງສາກົນຕັ້ງຂໍ້ສັງເກດວ່າ:

**"ບໍ່ພົບວ່າມີທັມມະລິຂິດບາຮາຍຕອນໃດ ທີ່ໃຫ້ນິຍາມໄວ້ຢ່າງຊັດເຈນກ່ຽວກັບຊ່ວງເວລາທາງຊີວະວິທະຍາ ແລະ ລັກສະນະໂດຍທຳມະຊາດຂອງເຫດການທີ່ລະບຸວ່າເປັນ 'ການປະຕິສົນທິ'. ການໃຊ້ຄຳນີ້ໃນບໍລິບົດທາງການແພດເບິ່ງຄືວ່າຈະບໍ່ຊັດເຈນດ້ວຍເຊັ່ນກັນ. ແທ້ຈິງແລ້ວຄວາມເຂົ້າໃຈຢ່າງໜຶ່ງກ່ຽວກັບການປະຕິສົນທິຄື ການປະຕິສົນທິເກີດຂຶ້ນ ພ້ອມກັນກັບການປະສົມຂອງໄຂ່ກັບອະສຸຈິ ແລະ ການຝັງຕົວຂອງຕົວອ່ອນ ຊຶ່ງກໍຄືຈຸດເລີ່ມຕົ້ນຂອງການຖືພາ. ດັ່ງນັ້ນ, ຈຶ່ງອາດເປັນໄປບໍ່ໄດ້ທີ່ຈະຮູ້ວ່າການເຊື່ອມໂຍງກັນລະຫວ່າງຈິດວິນຍານກັບຮູບແບບທາງວັດຖຸນັ້ນເກີດຂຶ້ນເມື່ອໃດ ແລະ ຄຳຖາມດັ່ງກ່າວອາດເປັນບັນຫາທີ່ແກ້ບໍ່ຕົກ ໂດຍຄວາມຄິດ ຫຼືການໄຕ່ຕອງຂອງມະນຸດ, ເນື່ອງຈາກບັນຫາເຫຼົ່ານີ້ກ່ຽວຂ້ອງກັບຄວາມເລິກລັບຂອງໂລກແຫ່ງຈິດວິນຍານ ແລະ ທຳມະຊາດຂອງຈິດວິນຍານນັ້ນເອງ."[3]**

1. ຈິດວິນຍານຂອງມະນຸດເກີດຂຶ້ນເມື່ອໃດ? ________________________________________
________________________________________________________________________

2. ຄຳວ່າ "ການປະຕິສົນທິ" ອະທິບາຍເຖິງໄລຍະເວລາທາງວິທະຍາສາດທີ່ສະເພາະເຈາະຈົງຫຼືບໍ່? ________________________________________________________________________

## ຕອນທີ 3

ການເຊື່ອມໂຍງກັນລະຫວ່າງຈິດວິນຍານ ແລະ ຮ່າງກາຍບໍ່ແມ່ນການເຊື່ອມໂຍງທາງດ້ານວັດຖຸ; ຈິດວິນຍານບໍ່ໄດ້ເຂົ້າໄປຢູ່ໃນ ຫຼື ອອກຈາກຮ່າງກາຍ ແລະ ບໍ່ໄດ້ຄອບຄອງພື້ນທີ່ທາງກາຍະພາບ. ຄວາມສຳພັນຂອງຈິດວິນຍານກັບຮ່າງກາຍນັ້ນ ຄ້າຍກັບຄວາມສຳພັນຂອງແສງກັບແວ່ນແຍງທີ່ສະທ້ອນແສງນັ້ນ. ແສງທີ່ປາກົດຢູ່ເທິງແວ່ນແຍງບໍ່ໄດ້ຢູ່ໃນແວ່ນແຍງນັ້ນ. ໃນທຳນອງດຽວກັນຈິດວິນຍານບໍ່ໄດ້ຢູ່ໃນຮ່າງກາຍ. ດັ່ງທີ່ພຣະອັບດຸລບາຮາບົ່ງຊີ້ໃຫ້ເຫັນວ່າ:

> **"ຈິດວິນຍານຕາມເຫດຜົນ ຫຼື ຈິດວິນຍານຂອງມະນຸດ, ບໍ່ໄດ້ດຳລົງຢູ່ໃນຮ່າງກາຍນີ້ ໂດຍການເປັນອົງປະກອບພາຍໃນມາແຕ່ກຳເນີດ - ກ່າວຄື, ຈິດວິນຍານບໍ່ໄດ້ເຂົ້າໄປໃນຮ່າງກາຍ ສຳລັບການເປັນອົງປະກອບພາຍໃນ ແລະ ການເຂົ້າໄປເປັນລັກສະນະຂອງຮ່າງກາຍ, ແລະ ຕາມເຫດຜົນຈິດວິນຍານໄດ້ຮັບການຊຳລະໃຫ້ບໍລິສຸດເໜືອສິ່ງນີ້. ຈິດວິນຍານບໍ່ເຄີຍເຂົ້າສູ່ຮ່າງກາຍນີ້ເພື່ອເລີ່ມຕົ້ນ ແລະ ຈິດວິນຍານບໍ່ຈຳເປັນຕ້ອງມີສະຖານທີ່ອາໄສ, ເມື່ອລະໄປຈາກຮ່າງກາຍ. ບໍ່ເປັນແນວນັ້ນ, ການເຊື່ອມໂຍງກັນຂອງຈິດວິນຍານກັບຮ່າງກາຍ ແມ່ນຄ້າຍຄືກັບການເຊື່ອມໂຍງຂອງຕະກຽງກັບແວ່ນແຍງ. ຫາກແວ່ນແຍງຖືກຂັດເງົາ ແລະ ສົມປະກອບ, ແສງຂອງຕະກຽງຈະປະກົດຂຶ້ນໃນນັ້ນ ແລະ ຫາກແວ່ນແຍງນັ້ນແຕກ ຫຼື ມີຝຸ່ນປົກຄຸມ, ແສງກໍຈະຖືກປົກປິດໄວ້."**

1. ຈົ່ງເຕີມຄຳລົງໃນຊ່ອງຫວ່າງໃນປະໂຫຍກຂ້າງລຸ່ມນີ້:

   ກ. ຈິດວິນຍານຕາມເຫດຜົນ ຫຼື______________________ບໍ່ໄດ້ດຳລົງຢູ່ໃນຮ່າງກາຍນີ້ໂດຍການເປັນອົງປະກອບພາຍໃນມາໂດຍກຳເນີດ - ກ່າວຄືຈິດວິນຍານໄດ້ ____________________.

   ຂ. ____________________ ຫຼື ຈິດວິນຍານຂອງມະນຸດບໍ່ໄດ້ເຂົ້າໄປໃນຮ່າງກາຍສຳລັບການເປັນອົງປະກອບພາຍໃນ ແລະ ການເຂົ້າໄປເປັນ __________ ______________ແລະ ຕາມເຫດຜົນຈິດວິນຍານ____________________ ________________________.

   ຄ. ຈິດວິນຍານບໍ່ເຄີຍ__________________ເພື່ອເລີ່ມຕົ້ນ ແລະ ຈິດວິນຍານບໍ່ຈຳເປັນຕ້ອງມີ ___________ເມື່ອລະໄປຈາກຮ່າງກາຍ.

ງ. ການເຊື່ອມໂຍງກັນຂອງຈິດວິນຍານກັບຮ່າງກາຍ ແມ່ນຄ້າຍຄືກັບການເຊື່ອມໂຍງຂອງ ______________________________.

ຈ. ຫາກແວ່ນແຍງຖືກຂັດເງົາ ແລະ ສົມປະກອບ__________________________ ຈະປະກົດຂຶ້ນໃນນັ້ນ.

ສ. ຫາກແວ່ນແຍງແຕກ ຫຼື ມີຝຸ່ນປົກຄຸມ_________________________________.

2. ຈາກສິ່ງທີ່ເຮົາສຶກສາຈົບເຖິງຕອນນີ້ ຈົ່ງພິຈາລະນາວ່າຂໍ້ຄວາມຕໍ່ໄປນີ້ເປັນຈິງ ຫຼື ບໍ່:

_____ ຈິດວິນຍານບໍ່ໄດ້ຢູ່ໃນໂລກທາງກາຍະພາບ

_____ ຈິດວິນຍານຢູ່ພາຍໃນຮ່າງກາຍ

_____ ຮ່າງກາຍເປັນເຈົ້າຂອງຈິດວິນຍານ

_____ ຈິດວິນຍານເປັນອຳມະຕະ

_____ ແຕ່ລະຄົນມີຈຸດເລີ່ມຕົ້ນຂອງຕົນເອງເມື່ອຈິດວິນຍານເຊື່ອມໂຍງເຂົ້າກັບຕົວອ່ອນ

_____ ຊີວິດເລີ່ມຕົ້ນເມື່ອແຕ່ລະຄົນເກີດມາໃນໂລກນີ້

_____ ການດຳລົງຢູ່ທາງວັດຖຸຂອງແຕ່ລະບຸກຄົນດຳເນີນຕໍ່ໄປຫຼັງຈາກຄວາມຕາຍ

_____ ຊີວິດປະກອບດ້ວຍສິ່ງຕ່າງໆທີ່ເກີດຂຶ້ນກັບເຮົາທຸກວັນ

3. ຈົ່ງໃຊ້ຮູບລັກຂອງແສງ ແລະ ແວ່ນແຍງໃນການອະທິບາຍຄວາມສຳພັນລະຫວ່າງຈິດວິນຍານ ແລະ ຮ່າງກາຍ:

______________________________________________________________

______________________________________________________________

______________________________________________________________

______________________________________________________________

______________________________________________________________

## ຕອນທີ 4

ມີຄວາມສຳພັນທີ່ພິເສດຫຼາຍລະຫວ່າງຈິດວິນຍານ ແລະ ຮ່າງກາຍ ຊຶ່ງລວມເຂົ້າກັນເປັນມະນຸດ. ຄວາມສຳພັນນີ້ຄົງຢູ່ໃນຊ່ວງທີ່ຍັງມີຊີວິດຢູ່ເທົ່ານັ້ນ. ເມື່ອຄວາມສຳພັນລະຫວ່າງທັງສອງສິ້ນສຸດລົງ ແຕ່ລະຝ່າຍກໍກັບໄປຍັງຈຸດເລີ່ມຕົ້ນຂອງຕົນເອງ - ຮ່າງກາຍໄປສູ່ໂລກແຫ່ງຝຸ່ນທຸລີ ແລະ ຈິດວິນຍານໄປສູ່ໂລກແຫ່ງຈິດວິນຍານຂອງພຣະຜູ້ເປັນເຈົ້າ, ໃນບ່ອນທີ່ຈິດວິນຍານຍັງຄົງກ້າວໜ້າຕໍ່ໄປ. ພຣະອັບດຸລບາຮາກ່າວວ່າ:

> **"ຈິດວິນຍານຂອງມະນຸດມີຈຸດເລີ່ມຕົ້ນແຕ່ບໍ່ມີຈຸດຈົບ: ຈິດວິນຍານຈະຄົງຢູ່ຕະຫຼອດໄປ."[5]**

ໃນການກ່າວສູນທອນພິດຄັ້ງໜຶ່ງຂອງພຣະອັບດຸລບາຮາ, ທ່ານຊີ້ແຈງວ່າ:

**"ຈິດວິນຍານບໍ່ຕ້ອງການຮ່າງກາຍ, ແຕ່ຮ່າງກາຍຕ້ອງການຈິດວິນຍານ ບໍ່ດັ່ງນັ້ນແລ້ວຈະບໍ່ສາມາດມີຊີວິດຢູ່ໄດ້. ຈິດວິນຍານມີຊີວິດຢູ່ໄດ້ໂດຍບໍ່ມີຮ່າງກາຍ, ແຕ່ຮ່າງກາຍທີ່ບໍ່ມີຈິດວິນຍານກໍຈະຕາຍ."[6]**

ແລະ ທ່ານຜູ້ພິທັກສາສະໜາອະທິບາຍວ່າ:

**"ກ່ຽວກັບຈິດວິນຍານຂອງມະນຸດ: ຕາມຫຼັກຄຳສອນບາຮາຍ, ຈິດວິນຍານຂອງມະນຸດເລີ່ມຕົ້ນດ້ວຍການກໍ່ຕົວຂອງຕົວອ່ອນຂອງມະນຸດ, ແລະພັດທະນາຕໍ່ໄປ ແລະ ຜ່ານຂັ້ນຕອນຂອງການດຳລົງຢູ່ອັນບໍ່ມີທີ່ສິ້ນສຸດ ຫຼັງຈາກແຍກຈາກຮ່າງກາຍແລ້ວ. ຄວາມຈະເລີນກ້າວໜ້າຂອງຈິດວິນຍານຈະຍັງຄົງຢູ່ຊົ່ວນິລັນດອນ."[7]**

1. ດ້ວຍການຄຳນຶງເຖິງພຣະທັມມະລິຂິດຂ້າງເທິງໃນໃຈ, ຈົ່ງຕອບຄຳຖາມຕໍ່ໄປນີ້:
   ກ. ຮ່າງກາຍຕ້ອງການຈິດວິນຍານຫຼືບໍ່? ______________________________
   ຂ. ຈິດວິນຍານຕ້ອງການຮ່າງກາຍຫຼືບໍ່? ______________________________
   ຄ. ເກີດຫຍັງຂຶ້ນກັບການເຊື່ອມໂຍງລະຫວ່າງຮ່າງກາຍ ແລະ ຈິດວິນຍານເມື່ອເຮົາຕາຍ?
   ______________________________________________________
   ງ. ເກີດຫຍັງຂຶ້ນກັບຈິດວິນຍານຫຼັງຄວາມຕາຍ? ___________________________
   ______________________________________________________
   ຈ. ຄວາມກ້າວໜ້າຂອງຈິດວິນຍານຈະຍັງຄົງຢູ່ໄດ້ດົນພຽງໃດ? _______________
   ______________________________________________________
   ສ. ຊີວິດຈະສິ້ນສຸດລົງເມື່ອໃດ? ___________________________________

2. ຈົ່ງຕັດສິນໃຈວ່າຂໍ້ໃດຕໍ່ໄປນີ້ສອດຄ່ອງກັບສິ່ງທີ່ເຮົາໄດ້ສຶກສາໄປແລ້ວໃນເນື້ອຫາທີ່ຜ່ານມາ:
   _____ ຄວາມຕາຍຄືການລົງໂທດ.
   _____ ການເຊື່ອມໂຍງລະຫວ່າງຮ່າງກາຍ ແລະ ຈິດວິນຍານຄົງຢູ່ໃນຊ່ວງທີ່ຍັງມີຊີວິດຢູ່ເທົ່ານັ້ນ.
   _____ ຮ່າງກາຍມີຄວາມສາມາດໃນການຈະເລີນກ້າວໜ້າໄປຊົ່ວນິລັນດອນ.
   _____ ຈິດວິນຍານຈະເລີນກ້າວໜ້າຕະຫຼອດໄປ.
   _____ ຄວາມຕາຍຄືຈຸດຈົບຂອງຊີວິດ.
   _____ ຈະມີມື້ພິພາກສາ ແລະ ເມື່ອນັ້ນຮ່າງກາຍຂອງເຮົາຈະລຸກຂຶ້ນມາ.
   _____ ເມື່ອເຖິງຄວາມຕາຍ, ຈິດວິນຍານຈະມີອິດສະຫຼະພາບຫຼາຍກວ່າທີ່ເຄີຍເປັນມາ.
   _____ ຊີວິດຈົບລົງດ້ວຍຄວາມຕາຍ.

_____ ເຮົາຄວນຢ້ານຄວາມຕາຍ.
_____ ອາຫານ, ເສື້ອຜ້າ, ການພັກຜ່ອນ ແລະ ສາລະບັນເທີງ ເປັນສິ່ງທີ່ຈຳເປັນ ສຳລັບຈິດວິນຍານ.
_____ ຈິດວິນຍານຈະອິດເມື່ອຍເມື່ອຮ່າງກາຍໃຊ້ພະລັງງານຈົນໝົດສິ້ນ.
_____ ຈິດວິນຍານບໍ່ໄດ້ຮັບຜົນກະທົບຈາກຄວາມເຈັບປ່ວຍ ຫຼື ຄວາມອ່ອນແອຂອງຮ່າງກາຍ.
_____ ມະນຸດຈະຍັງຄົງມີຄວາມຕ້ອງການທາງຮ່າງກາຍຢູ່ພາຍຫຼັງຄວາມຕາຍ.

## ຕອນທີ 5

ເຮົາໄດ້ເຫັນແລ້ວວ່າຈິດວິນຍານບໍ່ໄດ້ຄອບຄອງພື້ນທີ່ທາງກາຍະພາບ ແລະ ບໍ່ໄດ້ເຮັດວຽກຕາມກົດຂອງທຳມະຊາດເຊັ່ນດຽວກັບສິ່ງທີ່ເປັນວັດຖຸ. ຈິດວິນຍານມີອິດທິພົນໃນໂລກໂດຍຜ່ານທາງຕົວແທນທີ່ເປັນຮ່າງກາຍ ແຕ່ບໍ່ແມ່ນວິທີດຽວທີ່ຈິດວິນຍານໃຊ້ພະລັງຂອງຕົວເອງ. ພຣະບາຮາອຸລລາຫ໌ຊົງປະກາດວ່າ:

**"ແທ້ຈິງແລ້ວເຮົາກ່າວວ່າຈິດວິນຍານຂອງມະນຸດ ໄດ້ຮັບການຍົກຍ້ອງເໜືອກວ່າການປະກົດອອກມາ ແລະ ການຖອຍກັບທັງໝົດ. ຈິດວິນຍານຢູ່ກັບທີ່ແຕ່ວ່າທະຍານຂຶ້ນໄປ ຈິດວິນຍານເຄື່ອນໄຫວແຕ່ວ່າຢູ່ກັບທີ່."[8]**

ແລະ ພຣະອັບດຸລບາຮາບອກເຮົາວ່າ:

**"ຈົ່ງຮູ້ໄວ້ວ່າອິດທິພົນ ແລະ ການຮັບຮູ້ຂອງຈິດວິນຍານມະນຸດມີສອງປະເພດ, ນັ້ນຄື ຈິດວິນຍານມະນຸດມີການເຮັດວຽກ ແລະ ຄວາມເຂົ້າໃຈສອງແບບ; ແບບໜຶ່ງອາໄສສື່ກາງຂອງເຄື່ອງມື ແລະ ອະໄວຍະວະຂອງຮ່າງກາຍ. ດັ່ງນັ້ນ, ຈິດວິນຍານຈຶ່ງເຫັນໄດ້ດ້ວຍຕາ, ໄດ້ຍິນດ້ວຍຫູ, ເວົ້າດ້ວຍລີ້ນ..."**
**"ອີກດ້ານໜຶ່ງຂອງອິດທິພົນ ແລະ ການກະທຳຂອງຈິດວິນຍານນັ້ນບໍ່ຕ້ອງອາໄສເຄື່ອງມືແລະອະໄວຍະວະຂອງຮ່າງກາຍເຫຼົ່ານີ້."[9]**

1. ຈົ່ງເຕີມຊ່ອງຫວ່າງໃນປະໂຫຍກຕໍ່ໄປນີ້:
   ກ. ຈິດວິນຍານຂອງມະນຸດໄດ້ຮັບການຍົກຍ້ອງເໜືອ ____________________
   ແລະ ____________________ທັງໝົດ
   ຂ. ຈິດວິນຍານ ________________ ແຕ່ວ່າ ________________
   ຄ. ຈິດວິນຍານ ________________ແຕ່ວ່າ ________________

2. ຈົ່ງອະທິບາຍເຖິງສອງວິທີທີ່ຈິດວິນຍານຮັບຮູ້ ແລະ ມີອິດທິພົນໃນໂລກນີ້:

________________________________________________

________________________________________________

________________________________________________

3. ຂໍໃຫ້ເຈົ້າຍົກຕົວຢ່າງຂອງອິດທິພົນ ແລະ ການກະທຳຂອງຈິດວິນຍານໂດຍບໍ່ຕ້ອງໃຊ້ເຄື່ອງມືທາງຮ່າງກາຍ? ____________________________________________

________________________________________________________________

________________________________________________________________

________________________________________________________________

## ຕອນທີ 6

ໃນຕອນນີ້, ໂດຍພິຈາລະນາເຖິງການອະພິປາຍທີ່ຜ່ານມາໃນຫຼາຍຕອນກ່ອນໜ້ານີ້, ກະລຸນາອ່ານຂໍ້ຄວາມຕໍ່ໄປນີ້ ທີ່ຄັດມາຈາກພຣະທັມມະລິຂິດຂອງພຣະບາຮາອຸລລາຫ໌:

> **"ເຈົ້າຈົ່ງຮູ້ໄວ້ວ່າ, ຈິດວິນຍານຂອງມະນຸດນັ້ນໄດ້ຮັບການຍົກຍ້ອງເໜືອກວ່າ, ແລະ ເປັນອິດສະຫຼະພົ້ນຈາກຄວາມອ່ອນແອທັງໝົດຂອງຮ່າງກາຍ ຫຼື ຈິດໃຈ. ການທີ່ຜູ້ທີ່ເຈັບປ່ວຍສະແດງສັນຍານຂອງຄວາມອ່ອນແອນັ້ນ ເນື່ອງມາຈາກສິ່ງກີດຂວາງທີ່ເຂົ້າມາແຊກລະຫວ່າງຈິດວິນຍານ ແລະ ຮ່າງກາຍຂອງເຂົາ, ສຳລັບຈິດວິນຍານເອງນັ້ນ ບໍ່ໄດ້ຮັບຜົນກະທົບໃດໆຈາກຄວາມເຈັບປ່ວຍທາງຮ່າງກາຍ. ຈົ່ງພິຈາລະນາແສງຂອງຕະກຽງ ເຖິງແມ່ນວ່າວັດຖຸພາຍນອກອາດຈະລົບກວນຄວາມສະຫວ່າງຂອງມັນ, ແຕ່ແສງເອງກໍຍັງຄົງສ່ອງແສງຕໍ່ໄປ ດ້ວຍພະລັງທີ່ບໍ່ຖືກຫຼຸດຜ່ອນລົງ. ໃນທຳນອງດຽວກັນຄວາມເຈັບເປັນເອັນຮ້າຍທຸກຢ່າງທີ່ລົບກວນຮ່າງກາຍຂອງມະນຸດ ເປັນອຸປະສັກທີ່ຂັດຂວາງບໍ່ໃຫ້ຈິດວິນຍານສະແດງພະລັງ ແລະ ອຳນາດທີ່ມີຢູ່ໂດຍກຳເນີດ. ຢ່າງໃດກໍຕາມ, ເມື່ອຈິດວິນຍານປະຮ່າງກາຍໄປ, ຈິດວິນຍານຈະສະແດງໃຫ້ເຫັນເຖິງຄວາມມີອຳນາດນັ້ນ ແລະ ຈະເຜີຍໃຫ້ເຫັນອິດທິພົນທີ່ບໍ່ມີພະລັງໃດໆເທິງໂລກສາມາດເທົ່າທຽມໄດ້. ຈິດວິນຍານທຸກດວງແມ່ນບໍລິສຸດ, ໄດ້ຮັບການກັ່ນຕອງ ແລະ ການຊຳລະໃຫ້ບໍລິສຸດຈະໄດ້ຮັບການປະສິດປະສາດດ້ວຍພະລັງມະຫາສານ ແລະ ຈະມີຄວາມປິຕິຍິນດີທີ່ເກີນກວ່າຄວາມດີໃຈ."[10]**

1. ຈົ່ງອະທິບາຍດ້ວຍຄຳເວົ້າຂອງເຈົ້າເອງວ່າ ຈິດວິນຍານບໍ່ໄດ້ຮັບຜົນກະທົບຈາກຄວາມອ່ອນແອຂອງຮ່າງກາຍ ຫຼື ຈິດໃຈ ແລະ ສິ່ງໃດຈະເຫັນໄດ້ຊັດເຈນເມື່ອຈິດວິນຍານແຍກອອກຈາກຮ່າງກາຍ.

________________________________________________________________

________________________________________________________________

________________________________________________________________

________________________________________________________________

________________________________________________________________

2. ເຮົາຈະຮັກສາບຸກຄະລິກກະພາບຂອງເຮົາໄວ້ຫຼັງຈາກການຕາຍຂອງຮ່າງກາຍເຮົາໄດ້ບໍ່?

______________________________________________

## ຕອນທີ 7

ພຣະບາຮາອຸລລາຫ໌ຊົງດຳລັດວ່າ:

**"ບັດນີ້ມາເຖິງຄຳຖາມຂອງເຈົ້າກ່ຽວກັບຈິດວິນຍານຂອງມະນຸດ ແລະ ການດຳລົງຢູ່ພາຍ ຫຼັງຄວາມຕາຍ. ເຈົ້າຈົ່ງຮູ້ຄວາມຈິງໄວ້ວ່າ, ພາຍຫຼັງທີ່ແຍກຈາກຮ່າງກາຍຈິດວິນຍານຈະເລີນກ້າວໜ້າຕໍ່ໄປຈົນກະທັ້ງບັນລຸເຖິງທີ່ປະທັບຂອງພຣະຜູ້ເປັນເຈົ້າ, ຊຶ່ງຈະເປັນໄປໃນສະພາວະທີ່ການໝູນວຽນຂອງຍຸກສະໄໝ ແລະ ສັດຕະວັດ, ຫຼືການປ່ຽນແປງ ແລະຄວາມບັງເອີນຂອງໂລກນີ້ກໍບໍ່ສາມາດທັບປ່ຽນໄດ້. ຈິດວິນຍານຈະຄົງຢູ່ເທົ່າທີ່ອານາຈັກອະທິປະໄຕ ແລະ ອານຸພາບຂອງພຣະຜູ້ເປັນເຈົ້າຍັງຄົງຢູ່. ຈິດວິນຍານຈະສະແດງສັນຍາລັກ ແລະ ຄຸນລັກສະນະຂອງພຣະຜູ້ເປັນເຈົ້າ ແລະ ຈະເປີດເຜີຍຄວາມເມດຕາຮັກແພງ ແລະ ຄວາມອາລີຂອງພຣະອົງ."[11]**

1. ຈິດວິນຍານຈະຄົງກ້າວໜ້າຕໍ່ໄປອີນດົນປານໃດຫຼັງຈາກຄວາມຕາຍທາງຮ່າງກາຍ?

______________________________________________

2. ຈິດວິນຍານຈະຍັງຄົງເດີນທາງຕໍ່ໄປສູ່ທີ່ປະທັບຂອງພຣະຜູ້ເປັນເຈົ້າໃນສະພາວະໃດ?

______________________________________________

______________________________________________

3. ຄຸນລັກສະນະແລະສັນຍາລັກຫຍັງແດ່ທີ່ຈິດວິນຍານຈະສະແດງອອກມາໃນສະພາວະນັ້ນ?

______________________________________________

______________________________________________

4. ບົນພື້ນຖານຂອງສິ່ງທີ່ເຮົາໄດ້ສຶກສາມາຈົນເຖິງຕອນນີ້ ຈົ່ງພິຈາລະນາຂໍ້ຄວາມຕໍ່ໄປນີ້ວ່າເປັນຈິງຫຼືບໍ່:

_____ ອານາຈັກຂອງພຣະຜູ້ເປັນເຈົ້າຈະຄົງຢູ່ຕະຫຼອດໄປ.

_____ ຈິດວິນຍານມີຄວາມສາມາດທີ່ຈະສະແດງຄຸນລັກສະນະຂອງພຣະຜູ້ເປັນເຈົ້າ.

_____ ບົດອະທິດຖານທີ່ເຮົາສວດໃຫ້ກັບຜູ້ທີ່ຈາກໄປແລ້ວ ຈະບໍ່ສົ່ງຜົນຕໍ່ຄວາມຈະເລີນກ້າວໜ້າຂອງຈິດວິນຍານຂອງພວກເຂົາ.

_____ ຈິດວິນຍານບໍ່ມີວັນດັບສູນໄປ.

## ຕອນທີ 8

ພຣະບາຮາອຸລລາຫ໌ຊົງດຳລັດວ່າ:

"ຈົ່ງຮູ້ໄວ້ວ່າຫູທີ່ສະດັບຟັງ, ຫາກວ່າຍັງຄົງບໍລິສຸດ ແລະ ຜຸດຜ່ອງ, ໃນທຸກເວລາຕ້ອງຕັ້ງໃຈຟັງສຽງທີ່ເປັ່ງພຣະວັດຈະນະສັກສິດເຫຼົ່ານີ້ທີ່ດັງກ້ອງມາຈາກທຸກທິດທາງ: 'ແທ້ຈິງແລ້ວ ເຮົາເປັນຂອງພຣະຜູ້ເປັນເຈົ້າ ແລະ ເຮົາຈະກັບໄປສູ່ພຣະອົງ.' ຄວາມເລິກລັບຂອງຄວາມຕາຍທາງກາຍຂອງມະນຸດ ແລະ ການກັບໄປຂອງເຂົາຍັງບໍ່ຖືກເປີດເຜີຍ ແລະ ຍັງບໍ່ໄດ້ຖືກສະເຫຼີຍ..."

"ຄວາມຕາຍໃຫ້ຖ້ວຍລາງວັນແຫ່ງຊີວິດແກ່ຜູ້ທີ່ເຊື່ອໝັ້ນທຸກຄົນ. ຄວາມຕາຍມອບຄວາມຫັນສານຳຄວາມປິຕິມາໃຫ້ ແລະ ປະທານຊີວິດນິລັນດອນໃຫ້ເປັນຂອງຂວັນ.

"ສຳລັບບັນດາຜູ້ທີ່ໄດ້ຊີມໝາກໄມ້ແຫ່ງການດຳລົງຊີວິດໃນໂລກນີ້ຂອງມະນຸດ, ກໍຄືການຍອມຮັບພຣະຜູ້ເປັນເຈົ້າທີ່ແທ້ຈິງພຣະອົງດຽວ, ຂໍຄວາມສູງສົ່ງຈົ່ງມີແດ່ຄວາມຮຸ່ງເຮືອງຂອງພຣະອົງ, ຊີວິດຂອງພວກເຂົາຖັດຈາກພົບນີ້ເຮົາບໍ່ສາມາດພັນລະນາໄດ້. ຄວາມຮູ້ກ່ຽວກັບເລື່ອງນີ້ຢູ່ກັບພຣະຜູ້ເປັນເຈົ້າແຕ່ພຽງ ພຣະອົງດຽວ, ພຣະຜູ້ຊົງເປັນນາຍແຫ່ງພົບທັງປວງ."[12]

"ໂອ ບຸດແຫ່ງຄວາມສູງສົ່ງທີ່ສຸດ! ເຮົາໄດ້ໃຫ້ຄວາມຕາຍເປັນຜູ້ນຳຂ່າວສານແຫ່ງຄວາມສຸກຫັນສາມາຍັງເຈົ້າ, ເຫດໃດເຈົ້າຈຶ່ງເສົ້າໂສກ? ເຮົາໃຫ້ແສງສະຫວ່າງສ່ອງລັດສະໝີມາຍັງເຈົ້າ, ເປັນຫຍັງເຈົ້າຈຶ່ງປິດບັງຕົວເອງຈາກແສງນັ້ນ?"[13]

1. ຂໍ້ຄວາມໃດຕໍ່ໄປນີ້ແມ່ນຖືກຕ້ອງ:
   _____ ຈິດວິນຍານຂອງມະນຸດມາຈາກພຣະຜູ້ເປັນເຈົ້າ ແລະ ຈະກັບໄປຫາພຣະອົງ.
   _____ ຄວາມຮູ້ທັງໝົດກ່ຽວກັບຊີວິດຫຼັງຄວາມຕາຍຢູ່ກັບພຣະຜູ້ເປັນເຈົ້າ.
   _____ ສຳລັບຜູ້ທີ່ເຊື່ອໝັ້ນ, ຄວາມຕາຍຄືຊີວິດ.
   _____ ຄວາມຕາຍເປັນຜູ້ນຳຂ່າວສານແຫ່ງຄວາມປິຕິຍິນດີ.
   _____ ຄວາມເລິກລັບຂອງຄວາມຕາຍເປັນທີ່ຮູ້ກັນດີສຳລັບທຸກຄົນ.
   _____ ເຮົາຄວນທະນຸຖະໜອມພຣະພອນຂອງຊີວິດ, ແຕ່ກໍບໍ່ຄວນຢ້ານຄວາມຕາຍ, ເພາະຄວາມຕາຍຄືຜູ້ນຳສານແຫ່ງຄວາມສຸກຫັນສາ.
   _____ ບໍ່ແມ່ນເລື່ອງສຳຄັນທີ່ເຮົາຈະຮູ້ກ່ຽວກັບຊີວິດຫຼັງຄວາມຕາຍ.

2. ໃນເວລານີ້, ໂດຍການຄຳນຶງເຖິງສິ່ງທີ່ເຮົາໄດ້ສຶກສາມາຈົນເຖິງຕອນນີ້, ຈົ່ງຂຽນຂໍ້ຄວາມໜຶ່ງຫຍໍ້ໜ້າສັ້ນໆກ່ຽວກັບຊີວິດ, ຄວາມຕາຍ, ຮ່າງກາຍ ແລະ ຈິດວິນຍານ.

## ຕອນທີ 9

ພຣະອັບດຸລບາຮາກ່າວວ່າ:

**"ໃນຕອນເລີ່ມຕົ້ນຊີວິດມະນຸດຢູ່ໃນໂລກຂອງແຫຼ່ງກຳເນີດໃນທ້ອງແມ່, ທີ່ນັ້ນເຂົາໄດ້ພັດທະນາຄວາມສາມາດ ແລະ ຄວາມຄູ່ຄວນທີ່ຈະກ້າວໜ້າມາສູ່ໂລກນີ້. ພະລັງຄວາມສາມາດທີ່ຈຳເປັນສຳລັບໂລກນີ້, ເຂົາໄດ້ຮັບຈາກໂລກນັ້ນ. ເຂົາຈຳເປັນຕ້ອງມີຕາໃນໂລກນີ້ ເຂົາກໍ່ໄດ້ຮັບດວງຕາຈາກຍາມທີ່ຢູ່ໃນທ້ອງແມ່. ເຂົາຈຳເປັນຕ້ອງມີຫູໃນໂລກນີ້ເຂົາກໍໄດ້ຮັບຫູຈາກແຫ່ງນັ້ນ. ພະລັງຄວາມສາມາດທີ່ຈຳເປັນສຳລັບໂລກນີ້, ເຂົາໄດ້ຮັບມາຈາກໂລກຂອງແຫຼ່ງກຳເນີດໃນທ້ອງແມ່. ໃນໂລກນັ້ນເຂົາກຽມພ້ອມສຳລັບໂລກນີ້ ແລະ ເມື່ອເຂົາກ້າວເຂົ້າສູ່ໂລກນີ້, ເຂົາເຫັນວ່າເຂົາຄອບຄອງພະລັງຄວາມສາມາດທັງໝົດທີ່ຈຳເປັນຕ້ອງມີ ແລະ ເຂົາໄດ້ຮັບແຂນຂາ ແລະ ອະໄວຍະວະທັງໝົດທີ່ຈຳເປັນສຳລັບຊີວິດນີ້ ຈາກໂລກນັ້ນ. ດັ່ງນັ້ນ, ໃນໂລກນີ້ດ້ວຍເຊັ່ນກັນທີ່ເຂົາຕ້ອງກຽມຕົວສຳລັບໂລກຖັດໄປຈາກນີ້ສິ່ງທີ່ເຂົາຈຳເປັນຕ້ອງມີໃນໂລກແຫ່ງອານາຈັກສະຫວັນ, ເຂົາຕ້ອງໄດ້ມາແລະກຽມຄວາມພ້ອມທີ່ນີ້. ດັ່ງເຊັ່ນທີ່ເຂົາໄດ້ມາຊຶ່ງພະລັງຄວາມສາມາດທີ່ຈຳເປັນສຳລັບໃນໂລກນີ້ ຈາກໂລກຂອງແຫຼ່ງກຳເນີດໃນທ້ອງແມ່, ໃນທຳນອງດຽວກັນ, ສິ່ງທີ່ເຂົາຈຳເປັນຕ້ອງມີໃນໂລກແຫ່ງອານາຈັກສະຫວັນ, ກ່າວຄືພະລັງທັງໝົດແຫ່ງພົບສະຫວັນຕ້ອງໄດ້ມາຈາກໃນໂລກແຫ່ງນີ້."**[14]

1. ຈົ່ງຕັດສິນໃຈວ່າຂໍ້ໃດຕໍ່ໄປນີ້ເປັນຄຳຕອບທີ່ຖືກຕ້ອງ:
   _____ ພະລັງທັງໝົດທີ່ຈຳເປັນສຳລັບໂລກນີ້ໄດ້ມາຈາກໂລກຂອງແຫຼ່ງກຳເນີດໃນທ້ອງແມ່.
   _____ ບໍ່ຈຳເປັນຕ້ອງກຽມຕົວໃຫ້ພ້ອມສຳລັບຊີວິດໃນໂລກໜ້າ.
   _____ ສິ່ງທີ່ເຮົາຈຳເປັນຕ້ອງມີໃນໂລກແຫ່ງອານາຈັກສະຫວັນຈະຕ້ອງໄດ້ຮັບທີ່ນັ້ນ.
   _____ ຈຸດປະສົງຂອງຊີວິດນີ້ຄືການໄດ້ຮັບພະລັງຄວາມສາມາດທີ່ຈຳເປັນສຳລັບຊີວິດໃນໂລກໜ້າ.
   _____ ຊີວິດທີ່ແທ້ຈິງເລີ່ມຕົ້ນເມື່ອເຮົາຕາຍ ແລະ ໄປຍັງອານາຈັກຂອງພຣະຜູ້ເປັນເຈົ້າ.
   _____ ຊີວິດທີ່ແທ້ຈິງເລີ່ມຕົ້ນໃນໂລກນີ້ ແລະ ດຳເນີນຕໍ່ໄປພາຍຫຼັງຈາກຄວາມຕາຍທາງກາຍ.

2. ຄວາມສາມາດອັນໃດແດ່ທີ່ມະນຸດໄດ້ຮັບໃນໂລກຂອງແຫຼ່ງກຳເນີດໃນທ້ອງແມ່?

______________________________________________

______________________________________________

3. ສິ່ງໃດແດ່ທີ່ຄວນໄດ້ຮັບການປະທານ ໃນໂລກນີ້ເພື່ອຊີວິດຫຼັງຄວາມຕາຍ?

______________________________________________

______________________________________________

## ຕອນທີ 10

ພຣະບາຮາອຸລລາຫ໌ຊົງປະກາດວ່າ:

**"ໜ້າທີ່ທັງໝົດຂອງມະນຸດໃນຍຸກນີ້ ຄືການໄດ້ຮັບສ່ວນແບ່ງແຫ່ງພຣະກະລຸນາທິຄຸນອັນລົ້ນເຫຼືອທີ່ຫຼັ່ງໄຫຼມາຈາກພຣະຜູ້ເປັນເຈົ້າ. ດັ່ງນັ້ນ, ຂໍຢ່າໃຫ້ຜູ້ໃດສົນໃຈກັບຂະໜາດໃຫຍ່ ຫຼື ນ້ອຍຂອງພາຊະນະທີ່ຮອງຮັບນັ້ນ. ສ່ວນແບ່ງຂອງບາງຄົນອາດເທົ່າກັບຝາມື, ຂອງຄົນອື່ນອາດເຕັມຈອກ, ແລະສິ່ງອື່ນໆ ຫຼື ເຕັມຕຸກໃສ່ນ້ຳມັນ."**[15]

1. ໂດຍພິຈາລະນາເຖິງພຣະທັມມະລິຂິດຂ້າງເທິງ, ຈົ່ງຕອບຄຳຖາມຕໍ່ໄປນີ້:

ກ. ໜ້າທີ່ຂອງທຸກຄົນໃນຍຸກນີ້ຄືຫຍັງ? ______________________________

______________________________________________

ຂ. ເຈົ້າໄດ້ຮັບຫຍັງຈາກພຣະຜູ້ເປັນເຈົ້າ? ______________________________

______________________________________________

______________________________________________

ຄ. ຄຳວ່າ "ພາຊະນະຮອງຮັບ" ໝາຍເຖິງຫຍັງໃນພຣະທັມມະລິຂິດຂ້າງເທິງ? ________

______________________________________________

ງ. ເຫດໃດເຮົາຈຶ່ງບໍ່ຄວນຄຳນຶງເຖິງ "ຄວາມໃຫຍ່ ຫຼື ຄວາມນ້ອຍ" ຂອງຄວາມສາມາດທີ່ເຮົາໄດ້ຮັບມາ? ______________________________

______________________________________________

______________________________________________

______________________________________________

ຈ. ມີຫຍັງແດ່ທີ່ຂັດຂວາງບໍ່ໃຫ້ເຮົາໄດ້ຮັບສ່ວນແບ່ງຂອງພຣະກະລຸນາທິຄຸນຂອງພຣະຜູ້ເປັນເຈົ້າ? ______________________________

______________________________________________

______________________________________________

______________________________________________

2. ຂໍ້ໃດຕໍ່ໄປນີ້ແມ່ນເປັນຄຳຕອບທີ່ຖືກຕ້ອງ?

____ "ຄວາມໃຫຍ່ ຫຼື ຄວາມນ້ອຍ" ຂອງຄວາມສາມາດຂອງເຮົາໝາຍເຖິງຄວາມສະຫຼາດຂອງເຮົາ.

____ ໃນການຮັບໃຊ້ພຣະຜູ້ເປັນເຈົ້າ, ເຮົາຕ້ອງລືມຈຸດອ່ອນຂອງເຮົາ ແລະ ມອບຄວາມໄວ້ວາງໃຈທັງໝົດຂອງເຮົາໄວ້ກັບພຣະອົງ.

____ ຫາກໃນໂລກນີ້ເຮົາບໍ່ພັດທະນາຄວາມສາມາດ ທີ່ພຣະຜູ້ເປັນເຈົ້າມອບໃຫ້ກັບເຮົາ ຈິດວິນຍານຂອງເຮົາຈະອ່ອນແອເມື່ອເຮົາໄປເຖິງໂລກໜ້າ.

## ຕອນທີ 11

ພຣະບາຮາອຸລລາຫ໌ຊົງດຳລັດວ່າ:

**"ເຈົ້າຖາມເຮົາກ່ຽວກັບທຳມະຊາດຂອງຈິດວິນຍານ, ຈົ່ງຮູ້ໄວ້ວ່າແທ້ຈິງແລ້ວ, ຈິດວິນຍານຄືສັນຍາລັກຂອງພຣະຜູ້ເປັນເຈົ້າ, ຄືມະນີສະຫວັນທີ່ມະນຸດຜູ້ມີພູມປັນຍາສູງສຸດກໍບໍ່ສາມາດເຂົ້າໃຈສະພາວະການດຳລົງຢູ່ທີ່ແທ້ຈິງຂອງມະນີນີ້ໄດ້ ແລະ ຄວາມເລິກລັບຂອງຈິດວິນຍານນັ້ນ, ປັນຍາທີ່ສະຫຼຽວສະຫຼາດພຽງໃດກໍບໍ່ສາມາດໄຂໄດ້. ຈິດວິນຍານຄືສິ່ງທຳອິດໃນບັນດາສັບພະສິ່ງສ້າງສັນທັງປວງທີ່ປະກາດຄວາມເປັນເລີດຂອງພຣະຜູ້ສ້າງ, ເປັນສິ່ງທຳອິດທີ່ຍອມຮັບຄວາມຮຸ່ງເຮືອງຂອງພຣະອົງ, ຍຶດໝັ້ນຢູ່ກັບສັດຈະທັມຂອງພຣະອົງ ແລະ ນ້ອມຄຳນັບດ້ວຍຄວາມເຄົາລົບບູຊາຢູ່ຕໍ່ພຣະພັກຂອງພຣະອົງ."[16]**

1. ຈົ່ງເຕີມຄຳໃນຊ່ອງຫວ່າງໃນຂໍ້ຄວາມຕໍ່ໄປນີ້:

ກ. ຈິດວິນຍານຄື ______________ຂອງພຣະຜູ້ເປັນເຈົ້າ.

ຂ. ຈິດວິນຍານຄື ______________ທີ່ມະນຸດຜູ້ມີພູມປັນຍາສູງສຸດກໍບໍ່ສາມາດເຂົ້າໃຈ ______________________ ຂອງຈິດວິນຍານໄດ້.

ຄ. ຈິດວິນຍານຄື ______________________________________ ທີ່ປະກາດ ______________________.

ງ. ຈິດວິນຍານເປັນສິ່ງທຳອິດທີ່ __________ ຄວາມຮຸ່ງເຮືອງຂອງພຣະຜູ້ເປັນເຈົ້າ.

ຈ. ຈິດວິນຍານເປັນສິ່ງທຳອິດທີ່ ____________________ ຂອງພຣະຜູ້ເປັນເຈົ້າ.

ສ. ຈິດວິນຍານເປັນສິ່ງທຳອິດທີ່ _______________ ດ້ວຍຄວາມເຄົາລົບບູຊາຢູ່ຕໍ່ພຣະພັກຂອງພຣະຜູ້ເປັນເຈົ້າ.

2. ຂໍ້ໃດຕໍ່ໄປນີ້ເປັນຄຳຕອບທີ່ຖືກຕ້ອງ:

_____ "ການໄຂ" ໝາຍເຖິງການຄິດອອກ.

_____ ໃນບັນດາສັບພະສິ່ງສ້າງສັນທັງປວງ, ສິ່ງທຳອິດທີ່ຮູ້ຈັກພຣະຜູ້ເປັນເຈົ້າຄືສະໝອງຂອງມະນຸດ.

_____ "ຄວາມສະຫຼຽວສະຫຼາດ" ໝາຍເຖິງຄວາມແຫຼມຄົມ.

_____ ຄົນທີ່ມີພູມປັນຍາເຂົ້າໃຈໃນຄວາມເລິກລັບຂອງຈິດວິນຍານ.

_____ ນັກປັດຊະຍາທີ່ຍິ່ງໃຫຍ່ເທົ່ານັ້ນທີ່ສາມາດປະກາດຄວາມດີເລີດຂອງພຣະຜູ້ເປັນເຈົ້າໄດ້.

_____ ບໍ່ຈຳເປັນຕ້ອງຄິດກ່ຽວກັບຈິດວິນຍານເພາະເຮົາບໍ່ມີທາງສາມາດເຂົ້າໃຈໄດ້.

## ຕອນທີ 12

ພຣະບາຮາອຸລລາຫ໌ຊົງປະກາດວ່າ:

**"ເຈົ້າເປັນດັ່ງນົກທີ່ບິນຂຶ້ນໄປ, ດ້ວຍພະລັງທັງໝົດຂອງປີກທີ່ຍິ່ງໃຫຍ່ດ້ວຍຄວາມເບີກບານ ແລະ ຄວາມໝັ້ນໃຈຢ່າງເຕັມທີ່, ບິນຜ່ານໄປສະຫວັນຊັ້ນຟ້າອັນກວ້າງໃຫຍ່ໄພສານ, ຈົນກະທັ່ງທົນຫິວບໍ່ໄຫວ, ຈຶ່ງຫັນໄປຫານ້ຳ ແລະ ດິນ ເທິງພິພົບທາງລຸ່ມດ້ວຍຄວາມປາດຖະໜາ ແລະ ຍ້ອນວ່າຕິດກັບຢູ່ໃນດາງແຫແຫ່ງກິເລດຂອງຕົນເອງ ຈຶ່ງພົບວ່າຕົນເອງບໍ່ສາມາດບິນກັບຄືນໄປສູ່ອານາຈັກອັນສູງສົ່ງທີ່ຕົນບິນລົງມາ. ຍ້ອນບໍ່ສາມາດປັດເປື້ອງພາລະອັນໜັກໜ່ວງອອກຈາກປີກທີ່ເປິເປື້ອນຂອງຕົນໄດ້, ນົກນັ້ນຊຶ່ງເຄີຍອາໄສຢູ່ເທິງສະຫວັນ, ດຽວນີ້ຈຳຕ້ອງສະແຫວງຫາທີ່ອາໄສຢູ່ເທິງທຸລີດິນ. ໂອ...ຄົນຮັບໃຊ້ຂອງເຮົາ, ດັ່ງນັ້ນ, ຈົ່ງຢ່າເຮັດໃຫ້ປີກຂອງເຈົ້າເປິເປື້ອນດິນແຫ່ງຄວາມດື້ດຶງ ແລະຄວາມປາດຖະໜາອັນໄຮ້ສາລະ, ແລະຢ່າຍອມໃຫ້ປີກນັ້ນເປື້ອນທຸລີແຫ່ງຄວາມອິດສາ ແລະ ຄວາມກຽດຊັງ, ເພື່ອວ່າເຈົ້າຈະບໍ່ຖືກຂັດຂວາງຈາກການເຫີນຂຶ້ນໄປສູ່ນະພາແຫ່ງພູມປັນຍາສະຫວັນຂອງເຮົາ."[17]**

1. ຈົ່ງເຕີມຄຳລົງໃນຊ່ອງຫວ່າງຂ້າງລຸ່ມນີ້:

ກ. ນົກທີ່ພຣະບາຮາອຸລລາຫ໌ຊົງດຳລັດໄວ້ໃນທັມມະລິຂິດນີ້ຄື _________ຂອງມະນຸດ.

ຂ. ນົກນີ້ຄືຜູ້ອາໄສຢູ່ໃນ _________________________________.

ຄ. ບັດນີ້ນົກນີ້ຈະຕ້ອງສະແຫວງຫາບ້ານໃນ ____________________.

2. ຈົ່ງຕອບຄຳຖາມຕໍ່ໄປນີ້:

ກ. "ປີກ" ຂອງວິນຍານປ່ຽນມາ "ເປິເປື້ອນ" ໄດ້ແນວໃດ?

_______________________________________________

_______________________________________________

ຂ. ແມ່ນຫຍັງຄືພາລະບາງຢ່າງທີ່ຖ່ວງນ້ຳໜັກເທິງປີກຂອງຈິດວິນຍານຄືກັບ "ນ້ຳ ແລະ ດິນຂອງໂລກ"? ____________________

____________________

ຄ. ມີຫຍັງແດ່ທີ່ສາມາດປ້ອງກັນບໍ່ໃຫ້ເຮົາທະຍານໄປໃນສະຫວັນແຫ່ງຄວາມຮູ້ຂອງພຣະຜູ້ເປັນເຈົ້າ? ____________________

____________________

ງ. ເຫດໃດຈິດວິນຍານຈຶ່ງແລກປ່ຽນເຮືອນເທິງສະຫວັນມາເປັນຜົງທຸລີຂອງໂລກນີ້? ____

____________________

____________________

3. ຈົ່ງສຳຫຼວດຂໍ້ຄວາມຕໍ່ໄປນີ້, ຂໍ້ໃດເປັນຄຳຕອບທີ່ຖືກຕ້ອງ?

____ ສິ່ງຜູກພັນທາງໂລກຂັດຂວາງຄວາມກ້າວໜ້າທາງຈິດວິນຍານຂອງພວກເຮົາ.

____ ຄວາມເອົາແຕ່ໃຈ ແລະ ຄວາມປາດຖະໜາທີ່ໄຮ້ສາລະຂອງພວກເຮົາຂັດຂວາງບໍ່ໃຫ້ພວກເຮົາບິນໄປໃນສະຫວັນແຫ່ງຄວາມຮູ້ອັນສັກສິດ.

____ ຄວາມອິດສາ ແລະ ຄວາມກຽດຊັງເປັນລັກສະນະຕາມທຳມະຊາດຂອງມະນຸດ ແລະ ບໍ່ໄດ້ຖ່ວງດຶງຈິດວິນຍານ.

____ ພວກເຮົາສາມາດກຳຈັດພາລະແຫ່ງອັດຕາຂອງຕົນເອງ ທີ່ຂັດຂວາງບໍ່ໃຫ້ພວກເຮົາເຫີນທະຍານຜ່ານຄວາມກວ້າງຂວາງຂອງສະຫວັນຊັ້ນຟ້າ ໂດຍການແຍກຕົນເອງອອກຈາກສິ່ງຕ່າງໆໃນໂລກນີ້.

____ ເຮືອນຂອງຈິດວິນຍານຢູ່ໃນໂລກນີ້.

## ຕອນທີ 13

ພຣະບາຮາອຸລລາຫ໌ຊົງດຳລັດວ່າ:

**"ການສ້າງໂລກ ແລະ ທຸກສັບພະສິ່ງທີ່ອາໄສ ແລະ ເຄື່ອນໄຫວຢູ່ໃນໂລກ, ດ້ວຍປະຕິບັດການໂດຍກົງຂອງພຣະປະສົງທີ່ເກີດຂຶ້ນໂດຍທັມມະຊາດ ແລະ ທີ່ຍິ່ງໃຫຍ່ທີ່ສຸດ, ພຣະອົງຊົງເລືອກທີ່ຈະປະສິດ ປະສາດມະນຸດດ້ວຍຄຸນລັກສະນະພິເສດ ແລະ ຄວາມສາມາດໃນການຮູ້ຈັກ ແລະ ຮັກພຣະອົງ - ເປັນຄວາມສາມາດທີ່ຈຳຕ້ອງພິຈາລະນາໃຫ້ເຫັນວ່າເປັນພະລັງທີ່ກໍ່ໃຫ້ເກີດແຮງຂັບເຄື່ອນ ແລະ ເຈດຕະນາທຳອິດທີ່ຢູ່ເບື້ອງຫຼັງຂອງການສ້າງສັບພະສິ່ງທັງມວນ... ເໜືອສັດຈະທັມທີ່ເລິກເຊິ່ງທີ່ສຸດຂອງແຕ່ສິ່ງ ແລະຂອງສິ່ງສ້າງສັນທັງໝົດ ພຣະອົງຊົງສ່ອງແສງແຫ່ງພຣະນາມໜຶ່ງ ຈາກພຣະນາມທັງໝົດຂອງພຣະອົງ, ແລະ ຊົງດົນບັນດານໃຫ້ສິ່ງນັ້ນເປັນ**

**ຜູ້ຮັບຄວາມຮຸ່ງເຮືອງແຫ່ງຄຸນລັກສະນະໜຶ່ງຂອງພຣະອົງ. ຢ່າງໃດກໍຕາມ, ຢູ່ເໜືອຄວາມເປັນຈິງຂອງມະນຸດ, ພຣະອົງຊົງລວມແສງລັດສະໝີແຫ່ງພຣະນາມ ແລະ ຄຸນລັກສະນະທັງມວນຂອງພຣະອົງ, ແລະ ເຮັດໃຫ້ສິ່ງນັ້ນເປັນແວ່ນແຍງ ສະທ້ອນພຣະສາຍາລັກຂອງພຣະອົງເອງ. ໃນບັນດາສັບພະສິ່ງທັງປວງມີພຽງແຕ່ມະນຸດເທົ່ານັ້ນທີ່ໄດ້ຮັບພຣະກະລຸນາອັນຍິ່ງໃຫຍ່ ແລະ ພຣະພອນອັນຍືນຍົງເປັນພິເສດ.”**[18]

1. ຈົ່ງເຕີມຂໍ້ຄວາມລົງໃນຊ່ອງຫວ່າງຂ້າງລຸ່ມນີ້:
   ກ. ພຣະຜູ້ເປັນເຈົ້າຊົງເລືອກທີ່ຈະມອບຄວາມແຕກຕ່າງ ແລະ ຄວາມສາມາດທີ່ເປັນເອກະລັກໃຫ້ກັບມະນຸດດ້ວຍ ______________________________.

   ຂ. ໃນຄວາມເປັນຈິງທັງໝົດຂອງ ________________ແລະ _____________ ການສ້າງສັບພະສິ່ງ ພຣະອົງຊົງສ່ອງແສງໃຫ້ແຕ່ລະສິ່ງດ້ວຍ __________________,ແລະ ຊົງດົນບັນດານໃຫ້ສິ່ງນັ້ນເປັນຜູ້ຮັບຄວາມຮຸ່ງເຮືອງ _____________________.

   ຄ. ໃນຄວາມເປັນຈິງຂອງມະນຸດ, ພຣະອົງຊົງລວມແສງສ່ອງມາທີ່ __________ ແລະ ເຮັດໃຫ້ມະນຸດເປັນແວ່ນແຍງສະທ້ອນ ___________________.

2. ຈົ່ງຕອບຄໍາຖາມຕໍ່ໄປນີ້:
   ກ. ເຈົ້າສາມາດກ່າວເຖິງຄຸນລັກສະນະບາງຢ່າງຂອງພຣະຜູ້ເປັນເຈົ້າມາໄດ້ບໍ່?

   ________________________________________________________________

   ________________________________________________________________

   ຂ. ແມ່ນຫຍັງຄືຄຸນລັກສະນະຂອງພຣະຜູ້ເປັນເຈົ້າທີ່ຈິດວິນຍານຂອງມະນຸດສາມາດ ສະທ້ອນໄດ້? ____________________________________________________

   ________________________________________________________________

   ຄ. ຄຸນລັກສະນະເຫຼົ່ານີ້ສາມາດສະແດງອອກໄດ້ແນວໃດ?

   ________________________________________________________________

   ________________________________________________________________

   ງ. ຍ້ອນຫຍັງມະນຸດຈຶ່ງໄດ້ຮັບການຍົກຍ້ອງເປັນພິເສດ?

   ________________________________________________________________

   ________________________________________________________________

3. ຂໍ້ໃດຕໍ່ໄປນີ້ເປັນຄໍາຕອບທີ່ຖືກຕ້ອງ?
   _____ ມະນຸດນັ້ນບໍ່ແຕກຕ່າງຈາກສິ່ງສ້າງສັນອື່ນໆ.

_____ ຄວາມສາມາດໃນການຮູ້ຈັກພຣະຜູ້ເປັນເຈົ້າ ແລະ ຮັກພຣະອົງຄືແຮງກະຕຸ້ນທີ່ສ້າງຂຶ້ນ ແລະ ແມ່ນຈຸດປະສົງຫຼັກທີ່ເປັນຮາກຖານຂອງການສ້າງສັນທັງປວງ.

_____ ຄວາມເປັນຈິງຂອງທຸກສິ່ງທີ່ຖືກສ້າງຂຶ້ນຄື ຜູ້ຮັບຄຸນລັກສະນະຢ່າງໜຶ່ງຂອງພຣະຜູ້ເປັນເຈົ້າ.

_____ ຈິດວິນຍານຂອງມະນຸດສາມາດສະທ້ອນເຖິງຄຸນລັກສະນະທັງໝົດຂອງພຣະຜູ້ເປັນເຈົ້າ.

## ຕອນທີ 14

ພຣະບາຮາອຸລລາຫ໌ຊົງດຳລັດວ່າ:

**"ຢ່າງໃດກໍຕາມ, ພະລັງງານທັງຫຼາຍທີ່ດວງຕາເວັນແຫ່ງຄວາມເມດຕາອາລີ ແລະ ບໍ່ເກີດແຫ່ງການນຳທາງສະຫວັນທີ່ປະສິດປະສາດໃຫ້ມະນຸດ ແມ່ນບົ່ມຊ້ອນຢູ່ໃນຕົວຂອງເຂົາເອງ, ຄືກັບແປວໄຟທີ່ແຝງຢູ່ໃນທຽນ ແລະ ແສງໄຟທີ່ແຝງຢູ່ໃນຕະກຽງ. ຄວາມສະຫວ່າງສະໄຫວຂອງພະລັງເຫຼົ່ານີ້ອາດຖືກບົດບັງໂດຍກິເລດ, ຄືກັບແສງອາທິດທີ່ຖືກບົດບັງດ້ວຍຝຸ່ນລະອອງເທິງແວ່ນແຍງ. ທຽນ ແລະ ຕະກຽງກໍບໍ່ສາມາດໄຕ້ໄຟໃຫ້ກັບຕົວຂອງມັນເອງໄດ້, ໂດຍບໍ່ໄດ້ຮັບການຊ່ວຍເຫຼືອ ແລະ ເປັນໄປບໍ່ໄດ້ທີ່ແວ່ນແຍງຈະກຳຈັດຝຸ່ນລະອອງອອກໄປຈາກຕົວມັນເອງ. ເປັນທີ່ເຂົ້າໃຈຈະແຈ້ງແລ້ວວ່າ, ຫາກບໍ່ມີການຈູດໄຟ ຕະກຽງກໍຈະບໍ່ຖືກໄຕ້ຂຶ້ນໄດ້ ແລະ ຫາກຝຸ່ນລະອອງບໍ່ຖືກກຳຈັດອອກຈາກແວ່ນແຍງ, ກໍຈະບໍ່ສາມາດສະແດງຮູບລັກຂອງດວງຕາເວັນ ຫຼື ສະທ້ອນແສງ ແລະ ຄວາມສະຫວ່າງສະໄຫວຂອງດວງອາທິດໄດ້."**[19]

1. ຄຳວ່າ "ແຝງ" ໝາຍຄວາມວ່າຫຍັງ?________________________________________

________________________________________________________________

2. ແມ່ນຫຍັງເປັນຄວາມສາມາດທີ່ແຝງຢູ່ໃນຈິດວິນຍານຂອງມະນຸດ?__________________

________________________________________________________________

________________________________________________________________

3. ແມ່ນຫຍັງຄືຄວາມສາມາດບົ່ມຊ້ອນທີ່ແຝງຢູ່ໃນຕະກຽງ?________________________

4. ແມ່ນຫຍັງຄືຄວາມສາມາດບົ່ມຊ້ອນທີ່ແຝງຢູ່ໃນແວ່ນແຍງ?_______________________

5. ເຈົ້າຄວນເຮັດຫຍັງກັບຕະກຽງ, ເພື່ອໃຫ້ສາມາດສ່ອງແສງໄດ້?____________________

________________________________________________________________

6. ເຈົ້າຄວນເຮັດຫຍັງກັບແວ່ນແຍງ, ເພື່ອໃຫ້ສາມາດສະທ້ອນແສງໄດ້?______________

______________________________________________________________

7. ຕະກຽງ ແລະ ແວ່ນແຍງສະແດງຄວາມສາມາດບົ່ມຊ້ອນໄດ້ດ້ວຍຕົນເອງບໍ່?

______________________________________________________________

8. ເຮົາສາມາດສົມທຽບຕົວຢ່າງທັງສອງນີ້ ກັບສະພາວະແຫ່ງຈິດວິນຍານຂອງມະນຸດ ໄດ້ແນວໃດ?______________________________________________

______________________________________________________________

______________________________________________________________

9. ຜູ້ໃດເປັນຜູ້ທີ່ສາມາດເຮັດໃຫ້ຈິດວິນຍານຂອງມະນຸດສະແດງອອກເຖິງ ຄວາມສາມາດບົ່ມຊ້ອນຂອງຕົນເອງ?__________________________________________

______________________________________________________________

## ຕອນທີ 15

ພຣະບາຮາອຸລລາຫ໌ຊົງດຳລັດວ່າ:

"ປະຕູແຫ່ງຄວາມຮູ້ຂອງພຣະຜູ້ຊົງດຳລົງຢູ່ມາແຕ່ບູຮານນະການທີ່ໄດ້ເຄີຍປະກົດ, ແລະ ຈະດຳເນີນຕໍ່ໄປຕະຫຼອດຊົ່ວນິລັນການ, ປິດຕໍ່ໜ້າມວນມະນຸດ. ຈະບໍ່ມີຄວາມເຂົ້າໃຈຂອງມະນຸດ ທີ່ເຄີຍໄດ້ຮັບລ່ວງລ້ຳເຂົ້າເຖິງຣາຊະສຳນັກອັນສັກສິດຂອງພຣະອົງ. ຢ່າງໃດກໍຕາມ, ເພື່ອເປັນດັ່ງສັນຍາລັກແຫ່ງຄວາມເມດຕາປານີ ແລະ ຂໍ້ພິສູດເຖິງຄວາມເມດຕາຮັກແພງຂອງພຣະອົງ, ພຣະອົງໄດ້ສະແດງໃຫ້ມະນຸດເຫັນດວງຕາເວັນແຫ່ງການນຳທາງ ອັນສັກສິດຂອງພຣະອົງ, ບັນດາພຣະຜູ້ເປັນສັນຍາລັກແຫ່ງເອກະພາບສະຫວັນຂອງພຣະອົງ ແລະ ຊົງບັນຍັດຄວາມຮູ້ຂອງພຣະສາສະດາທີ່ປະເສີດສຸດເຫຼົ່ານີ້ ຄືກັບການຄວາມຮູ້ຂອງພຣະອົງເອງ. ຜູ້ທີ່ຍອມຮັບພຣະສາສະດາກໍເທົ່າກັບຍອມຮັບພຣະຜູ້ເປັນເຈົ້າ. ຜູ້ທີ່ຫງ່ຽງຫູຟັງສຽງເອີ້ນຂອງພຣະສາສະດາກໍເທົ່າກັບຫງ່ຽງຫູຟັງພຣະສຸລະສຽງຂອງພຣະຜູ້ເປັນເຈົ້າ ແລະ ຜູ້ທີ່ຢັ້ງຢືນສັດຈະທັມແຫ່ງການເປີດເຜີຍພຣະທັມຂອງພຣະສາສະດາ, ກໍເທົ່າກັບຢັ້ງຢືນສັດຈະທັມຂອງພຣະຜູ້ເປັນເຈົ້າເອງ. ຜູ້ທີ່ເມີນເສີຍຕໍ່ພຣະສາສະດາ, ກໍເທົ່າກັບເມີນເສີຍຕໍ່ພຣະຜູ້ເປັນເຈົ້າ, ແລະຜູ້ທີ່ບໍ່ເຊື່ອໃນພຣະສາສະດາ, ກໍເທົ່າກັບບໍ່ເຊື່ອພຣະຜູ້ເປັນເຈົ້າ. ພຣະສາສະດາທຸກພຣະອົງ ຄືຫົນທາງຂອງພຣະຜູ້ເປັນເຈົ້າທີ່ເຊື່ອມໂຍງລະຫວ່າງໂລກກັບອານາຈັກຂ້າງເທິງ ແລະ ຄືທຸງແຫ່ງສັດຈະທັມຂອງພຣະອົງ ສຳລັບທຸກຄົນໃນອານາຈັກສະຫວັນ ແລະ ໂລກ. ພຣະອົງທັງຫຼາຍຄືພຣະຜູ້ຊົງເປັນການປະກົດຂອງພຣະຜູ້ເປັນເຈົ້າທ່າມກາງມວນມະນຸດ, ຄືຫຼັກຖານແຫ່ງສັດຈະທັມຂອງພຣະອົງ ແລະ ຄືສັນຍາລັກແຫ່ງຄວາມຮຸ່ງເຮືອງຂອງພຣະອົງ."[20]

1. ຂໍໃຫ້ຈົດຈຳພຣະວັດຈະນະຂ້າງເທິງ, ແລ້ວຕອບຄຳຖາມເຫຼົ່ານີ້:

ກ. ມະນຸດຈະຮູ້ຈັກພຣະຜູ້ເປັນເຈົ້າໂດຍກົງໄດ້ບໍ່? ______________________

ຂ. ຖ້າເປັນເຊັ່ນນັ້ນ, ເຮົາສາມາດຮູ້ຈັກພຣະຜູ້ເປັນເຈົ້າໄດ້ແນວໃດ? ____________

______________________________________________

ຄ. ຈົ່ງບອກຊື່ຂອງດວງຕາເວັນແຫ່ງການນຳທາງສະຫວັນ? ________________

______________________________________________

ງ. ຜູ້ທີ່ຫງ່ງງຫູຟັງພຣະສາສະດາ, ເທົ່າກັບຫງ່ງງຫູຟັງຜູ້ໃດ?__________________

______________________________________________

ຈ. ເມື່ອເຮົາບໍ່ສົນໃຈຟັງສຽງເອີ້ນຂອງພຣະສາສະດາ, ເທົ່າກັບເຮົາກຳລັງເມີນເສີຍຕໍ່ຜູ້ໃດ?

______________________________________________

2. ຈົ່ງຂຽນຂໍ້ຄວາມລົງໃນຊ່ອງຫວ່າງຂ້າງລຸ່ມນີ້:

ກ. ປະຕູໄປສູ່ຄວາມຮູ້ຂອງພຣະຜູ້ຊົງດຳລົງຢູ່ມາແຕ່ບູຮານນະການທີ່ໄດ້ເຄີຍມີມາແລ້ວ, ແລະ ຈະດຳເນີນຕໍ່ໄປຕະຫຼອດຊົ່ວນິລັນການ, ______________________________ ____________.

ຂ. ຄວາມເຂົ້າໃຈຂອງມະນຸດຈະບໍ່ມີວັນເຂົ້າເຖິງ ________________________ ________________.

ຄ. ພຣະຜູ້ເປັນເຈົ້າຊົງສົ່ງພຣະສາສະດາມາເພື່ອເປັນດັ່ງ __________ ແຫ່ງຄວາມເມດຕາປານີ ແລະ ຂໍ້ພິສູດເຖິງ __________ຂອງພຣະອົງ.

ງ. ການຮູ້ຈັກພຣະສາສະດາເຫຼົ່ານີ້ຂອງພຣະຜູ້ເປັນເຈົ້າ, ກໍຄືກັບ________________ ____________.

ຈ. ຜູ້ທີ່ຍອມຮັບພຣະສາສະດາເຫຼົ່ານີ້, ກໍເທົ່າກັບ________________________ ____________.

ສ. ຜູ້ທີ່ຫງ່ງງຫູຟັງສຽງເອີ້ນຂອງພຣະສາສະດາເຫຼົ່ານີ້, ກໍເທົ່າກັບ______________ ____________.

ຊ. ພຣະສາສະດາແຕ່ລະພຣະອົງຄືຫົນທາງແຫ່ງພຣະຜູ້ເປັນເຈົ້າທີ່______________

______________________________________________

______________________________________________

3. ຂ້າງລຸ່ມນີ້ຂໍ້ໃດຖືກຕ້ອງ?

___ ພວກເຮົາສາມາດປູກຝັງທາງຈິດວິນຍານໄດ້ ດ້ວຍຄວາມພະຍາຍາມຂອງເຮົາເອງໂດຍລຳພັງ.

___ ພຣະຜູ້ເປັນເຈົ້າໄດ້ປະທານຄວາມຄິດໃຫ້ແກ່ເຮົາ, ແລະເປັນສິ່ງທີ່ພຽງພໍແລ້ວສຳລັບຄວາມກ້າວໜ້າຂອງເຮົາ.

___ ເຮົາຈະກ້າວໜ້າທາງຈິດວິນຍານໂດຍການຮູ້ຈັກພຣະສາສະດາ ຂອງພຣະຜູ້ເປັນເຈົ້າ ແລະ ຈະບໍ່ຕ້ອງໃຊ້ຄວາມພະຍາຍາມເພີ່ມຂຶ້ນ.

___ ພວກເຮົາສາມາດພັດທະນາທາງຈິດວິນຍານ ໂດຍການຮູ້ຈັກພຣະສາສະດາຂອງພຣະຜູ້ເປັນເຈົ້າ ແລະ ດ້ວຍຄວາມພະຍາຍາມທີ່ຈະໃຊ້ຊີວິດຕາມຄຳສອນຂອງພຣະອົງ.

___ ພວກເຮົາສາມາດຮູ້ຈັກພຣະຜູ້ເປັນເຈົ້າໂດຍກົງໄດ້.

___ ມະນຸດສາມາດເປັນຄືກັບພຣະຜູ້ເປັນເຈົ້າໄດ້.

___ ພຣະຜູ້ເປັນເຈົ້າໄດ້ຮັບການຍົກຍ້ອງເໜືອຄວາມເຂົ້າໃຈຂອງມະນຸດ.

___ ເມື່ອເຮົາຟັງຖ້ອຍຄຳຂອງພຣະສາສະດາຂອງພຣະຜູ້ເປັນເຈົ້າ, ກໍເທົ່າກັບເຮົາກຳລັງຟັງພຣະສຸລະສຽງຂອງພຣະຜູ້ເປັນເຈົ້າ.

## ຕອນທີ 16

ພຣະບາຮາອຸລລາຫ໌ຊົງປະກາດວ່າ:

**"ບັນດາພຣະສາສະດາພະຍາກອນ ແລະ ພຣະຜູ້ຊົງສົ່ງຂ່າວສານທັງຫຼາຍຂອງພຣະຜູ້ເປັນເຈົ້າຖືກສົ່ງລົງມາເພື່ອຈຸດປະສົງດຽວ ກໍຄືການນຳທາງມະນຸດຊາດໄປສູ່ຫົນທາງກົງແຫ່ງສັດຈະທັມ. ຈຸດປະສົງທີ່ແຝງຢູ່ໃນການເປີດເຜີຍຂອງພຣະສາສະດາເຫຼົ່ານີ້ຄື ເພື່ອໃຫ້ການສຶກສາແກ່ມະນຸດທຸກຄົນ, ເພື່ອວ່າໃນຊົ່ວໂມງແຫ່ງຄວາມຕາຍ, ພວກເຂົາຈະຂຶ້ນໄປສູ່ບັນລັງຂອງພຣະຜູ້ຊົງຄວາມສູງສົ່ງດ້ວຍຄວາມບໍລິສຸດ ແລະ ສັກສິດ, ດ້ວຍການຫຼຸດພົ້ນອອກຈາກພັນທະນາການທັງປວງ."[21]**

ແລະໃນອີກຂໍ້ຄວາມໜຶ່ງ, ພຣະອົງຊົງດຳລັດວ່າ:

**"ມະນຸດຄືເຄື່ອງແຄ້ວຂອງຄົງທີ່ເລັດຢ່າທີ່ສຸດ. ຢ່າງໃດກໍຕາມ, ການບໍ່ໄດ້ຮັບການສຶກສາທີ່ເໝາະສົມແມ່ນຖືກພາກໄປຈາກສິ່ງທີ່ມີຢູ່ໃນທຳມະຊາດຂອງເຂົາໄປ. ມະນຸດກຳເນີດຂຶ້ນມາໂດຍຖ້ອຍຄຳດຽວ ທີ່ເປັ່ງຈາກພຣະໂອດຂອງພຣະຜູ້ເປັນເຈົ້າ; ໂດຍອີກຖ້ອຍຄຳດຽວ ມະນຸດໄດ້ຮັບການຊັກນຳໃຫ້ຍອມຮັບ ພຣະຜູ້ເປັນບໍ່ເກີດແຫ່ງການສຶກສາຂອງເຂົາ; ໂດຍອີກຖ້ອຍຄຳໜຶ່ງ**

ສະຖານະ ແລະ ໂຊກຊະຕາຂອງເຂົາໄດ້ຮັບການປົກປ້ອງຄຸ້ມຄອງ; ພຣະຜູ້ຊົງຄວາມຍິ່ງໃຫຍ່ຊົງດຳລັດວ່າ: ຈົ່ງພິຈາລະນາມະນຸດຄືກັບເໝືອງທີ່ອຸດົມໄປດ້ວຍມະນີທີ່ປະເມີນຄ່າບໍ່ໄດ້. ການສຶກສາເທົ່ານັ້ນທີ່ສາມາດເປີດເຜີຍສົມບັດອັນລ້ຳຄ່ານີ້ອອກມາ, ແລະຊ່ວຍໃຫ້ມະນຸດຊາດໄດ້ຮັບປະໂຫຍດຈາກສົມບັດນີ້. ຫາກມະນຸດຜູ້ໃດໄຕ່ຕອງເຖິງສິ່ງທີ່ໄດ້ຮັບການເປີດເຜີຍໃນພຣະຄຳພີທັງຫຼາຍ ທີ່ຖືກສົ່ງລົງມາຈາກສະຫວັນແຫ່ງພຣະປະສົງອັນສັກສິດຂອງພຣະຜູ້ເປັນເຈົ້າ, ມະນຸດຜູ້ນັ້ນຈະຮູ້ແຈ້ງວ່າຈຸດປະສົງຂອງພຣະຄຳພີເຫຼົ່ານີ້ ຄືການທີ່ມະນຸດທຸກຄົນຈະຖືກນັບວ່າເປັນຈິດວິນຍານດວງດຽວກັນ, ເພື່ອວ່າກາປະທັບຊຶ່ງບັນຈຸຂໍ້ຄວາມວ່າ: 'ອານາຈັກເປັນຂອງພຣະຜູ້ເປັນເຈົ້າ' ຈະຖືກປະທັບລົງໃນຫົວໃຈທຸກດວງ, ແລະ ແສງແຫ່ງຄວາມອາລີ, ຄວາມເມດຕາກະລຸນາ ແລະ ຄວາມປານີຂອງພຣະຜູ້ເປັນເຈົ້າ ຈະປົກປ້ອງຄຸ້ມຄອງມະນຸດຊາດທັງມວນ."[22]

1. ພຣະສາສະດາພະຍາກອນ ແລະ ພຣະຜູ້ຊົງສົ່ງຂ່າວສານທັງຫຼາຍຂອງພຣະຜູ້ເປັນເຈົ້າ ຖືກສົ່ງລົງມາເພື່ອຈຸດປະສົງໃດ? ______________________________

______________________________

2. ແມ່ນຫຍັງຄືຈຸດປະສົງທີ່ແຝງຢູ່ໃນການເປີດເຜີຍຂອງພຣະສາສະດາເຫຼົ່ານີ້? __________

______________________________

______________________________

3. ຄຳວ່າ "ເຄື່ອງແຄ້ວຂອງຄົງ" ໝາຍເຖິງຫຍັງ? ______________________________

______________________________

4. ການທີ່ບໍ່ໄດ້ຮັບການສຶກສາຈະເກີດຜົນຫຍັງຕໍ່ມະນຸດ?______________________________

______________________________

5. ການສຶກສາທີ່ເໝາະສົມສາມາດກໍ່ໃຫ້ເກີດຫຍັງ? ______________________________

______________________________

6. ແມ່ນຫຍັງຄືບໍ່ເກີດຂອງການສຶກສາຂອງມະນຸດ? ______________________________

______________________________

7. ໂຊກຊະຕາຂອງພວກເຮົາຄືສິ່ງໃດ? ______________________________

______________________________

8. ການສຶກສາເປີດເຜີຍອັນຍະມະນີຫຍັງອອກມາຈາກມະນຸດ? ______________________________

______________________________

9. ພວກເຮົາຮັບຮູ້ຫຍັງໄດ້ໂດຍທັນທີ, ຂະນະທີ່ພວກເຮົາໄຕ່ຕອງພຣະທັມມະລິຂິດສັກສິດ? _

______________________________

______________________________

## ຕອນທີ 17

ພຣະບາຮາອຸລລາຫ໌ຊົງດຳລັດວ່າ:

"ນອກຈາກນີ້, ເຈົ້າຍັງຖາມເຮົາອີກກ່ຽວກັບສະພາວະຂອງຈິດວິນຍານພາຍຫຼັງແຍກຈາກຮ່າງກາຍ. ຈົ່ງຮູ້ຄວາມຈິງໄວ້ວ່າ, ຫາກຈິດວິນຍານຂອງມະນຸດດຳເນີນໄປໃນວິຖີທາງ ຂອງພຣະຜູ້ເປັນເຈົ້າ, ຈິດວິນຍານນັ້ນຈະກັບໄປສູ່ຄວາມຮຸ່ງເຮືອງຂອງພຣະຜູ້ເປັນທີ່ຮັກຍິ່ງຢ່າງແນ່ນອນ. ຄວາມຊອບທັມຂອງພຣະຜູ້ເປັນເຈົ້າຈົ່ງເປັນພະຍານ! ດວງວິນຍານນັ້ນບັນລຸເຖິງສະຖານະທີ່ບໍ່ມີປາກກາກ້ານໃດສາມາດບັນຍາຍ ຫຼື ວະຈີໃດສາມາດອະທິບາຍໄດ້. ດວງວິນຍານທີ່ຊື່ສັດຕໍ່ສາສະໜາຂອງພຣະຜູ້ເປັນເຈົ້າ, ແລະ ຢືນຢູ່ຢ່າງໝັ້ນຄົງບໍ່ຫວັ່ນໄຫວໃນວິຖີຂອງພຣະອົງ, ພາຍຫຼັງທີ່ແຍກຈາກຮ່າງກາຍຈະຄອບຄອງອະນຸພາບ ໃນທຸກພິບທີ່ພຣະຜູ້ຊົງມະຫິທານຸພາບໄດ້ຊົງສ້າງໄວ້ ເພື່ອໃຫ້ສາມາດຮັບປະໂຫຍດໂດຍຜ່ານດວງວິນຍານ."[23]

1. ໃຫ້ເຕີມຄຳໃສ່ບ່ອນຫວ່າງຂອງປະໂຫຍກເຫຼົ່ານີ້:

   ກ. ຫາກຈິດວິນຍານຂອງມະນຸດດຳເນີນໃນວິຖີທາງຂອງພຣະຜູ້ເປັນເຈົ້າ, ຈິດວິນຍານນັ້ນຈະ ______________________________.

   ຂ. ດວງວິນຍານນັ້ນບັນລຸເຖິງສະຖານະ ______________________________ ______________________________.

   ຄ. ______________ ທີ່ຊື່ສັດຕໍ່ __________ຂອງ ____________, ແລະ ______ _________ ຢ່າງບໍ່ຫວັ່ນໄຫວຢູ່ໃນ ____________, ພາຍຫຼັງທີ່ແຍກຈາກ _______ ___ ຈະຄອບຄອງ ______ໃນທຸກພິບທີ່ ______________ໄດ້ສ້າງໄວ້ເພື່ອໃຫ້ສາມາດ ______________ ໂດຍຜ່ານດວງວິນຍານ.

## ຕອນທີ 18

ພຣະບາຮາອຸລລາຫ໌ຊົງມີພຣະກະແສຮັບສັ່ງພວກເຮົາວ່າ:

"ພຣະພອນຈົ່ງບັງເກີດແກ່ຈິດວິນຍານ, ທີ່ໃນຊົ່ວໂມງແຫ່ງການແຍກຈາກຮ່າງກາຍໄດ້ຮັບການຊຳລະໃຫ້ໝົດສິ້ນຈາກຈິນຕະນາການອັນໄຮ້ສາລະຂອງຜູ້ຄົນໃນໂລກ. ດວງວິນຍານດັ່ງກ່າວຈະດຳລົງຢູ່ ແລະ ເຄື່ອນໄຫວໄປຕາມພຣະປະສົງຂອງພຣະຜູ້ສ້າງຂອງຕົນ, ແລະ ເຂົ້າໄປສູ່ສະຫວັນຊັ້ນສູງສຸດ. ເຫຼົ່າເທບທິດາສະຫວັນຜູ້ອາໄສຢູ່ໃນຄະລືຫາດອັນປະເສີດ, ຈະມາຫ້ອມ

ລ້ອມດວງວິນຍານນັ້ນ, ແລ້ວພຣະສາສະດາຂອງພຣະຜູ້ເປັນເຈົ້າ ແລະ ບັນດາຜູ້ທີ່ພຣະອົງຊົງເລືອກສັນຈະເຂົ້າມາເປັນເພື່ອນດ້ວຍໄມຕີຈິດມິດຕະພາບ. ດວງວິນຍານດວງນັ້ນຈະສົນທະນາກັບບຸກຄົນເຫຼົ່ານີ້ໄດ້ຢ່າງອິດສະຫຼະ, ແລະ ຈະເລົ່າໃຫ້ພວກເຂົາຟັງກ່ຽວກັບສິ່ງທີ່ຕົນໄດ້ອົດທົນຢູ່ໃນໜົນທາງຂອງພຣະຜູ້ເປັນເຈົ້າ, ພຣະຜູ້ເປັນນາຍແຫ່ງພົບທັງປວງ."[24]

"ເຂົາຄວນໃຫ້ອະໄພຄົນບາບ, ແລະບໍ່ລັງກຽດສະຖານະພາບຂອງຜູ້ນັ້ນ, ເພາະບໍ່ມີຜູ້ໃດຮູ້ວ່າຈຸດຈົບຂອງຕົນຈະເປັນແນວໃດ. ມີຢູ່ຫຼາຍຄັ້ງທີ່ຄົນບາບໄດ້ເຂົ້າເຖິງແກ່ນແທ້ຂອງຄວາມສັດທາໃນຊົ່ວໂມງສຸດທ້າຍແຫ່ງສາລະສຳຄັນຂອງຄວາມສັດທາ, ແລ້ວເຫີນຂຶ້ນໄປຫາໝູ່ເທບເທວາຢູ່ສະຫວັນຊັ້ນຟ້າ! ແລະ ມີຢູ່ຫຼາຍຄັ້ງທີ່ສາສະນິກະຊົນຜູ້ມີສັດທາໝັ້ນ, ເມື່ອເຖິງຊົ່ວໂມງທີ່ຈິດວິນຍານຈະແຍກຈາກຮ່າງກາຍໄປ, ພັດທັນປ່ຽນຈົນຕົກລົງໄປໃນໄຟນາລົກ!"[25]

1. ຈິດວິນຍານຂອງເຮົາຄວນຢູ່ໃນສະຖານະໃດເມື່ອແຍກອອກຈາກຮ່າງກາຍ? __________

__________________________________________________

2. ຈິນຕະນາການອັນໄຮ້ສາລະມີຫຍັງແດ່? __________________________

__________________________________________________

__________________________________________________

__________________________________________________

3. ວິນຍານຈະໄດ້ຮັບການຊຳລະໃຫ້ບໍລິສຸດຈາກຈິນຕະນາການອັນໄຮ້ສາລະ, ແລ້ວດຳລົງຢູ່ ແລະ ດຳເນີນຕໍ່ໄປພາຍຫຼັງຄວາມຕາຍໃນສະພາບໃດ? ______________________

__________________________________________________

__________________________________________________

__________________________________________________

4. ໃຜຈະເປັນເພື່ອນດ້ວຍໄມຕີຈິດມິດຕະພາບຂອງວິນຍານດັ່ງກ່າວນີ້? ___________

__________________________________________________

5. ວິນຍານດັ່ງກ່າວຈະສາມາດສົນທະນາກັບ ພຣະສາສະດາຂອງພຣະຜູ້ເປັນເຈົ້າ ແລະ ບັນດາຜູ້ທີ່ພຣະອົງຊົງເລືອກສັນໄດ້ຫຼືບໍ່? ______________________________

6. ພວກເຮົາຮູ້ລ່ວງໜ້າຫຼືບໍ່ວ່າຊີວິດທາງໂລກຂອງພວກເຮົາຈະສິ້ນສຸດລົງແນວໃດ ແລະ ເມື່ອໃດ?

__________________________________________________

7. ຕອນນີ້ພວກເຮົາສາມາດເຮັດຫຍັງໄດ້ເພື່ອບັນລຸສູ່ຊີວິດນິລັນດອນທີ່ກຳນົດໄວ້ສຳລັບເຮົາ? _

__________________________________________________

__________________________________________________

## ຕອນທີ 19

ພຣະອັບດຸລບາຮາອະທິບາຍວ່າ:

"ໃນຂະນະທີ່ຈິດວິນຍານຂອງມະນຸດດຳລົງຢູ່ຕະຫຼອດໄປ ຫຼັງຈາກສະບັດອອກຈາກເຮືອນ ຮ່າງແຫ່ງທຸລີ, ຈິດວິນຍານກໍຄືກັບສິ່ງທີ່ດຳລົງຢູ່ທັງໝົດ, ມີຄວາມສາມາດໃນການຈະເລີນກ້າວໜ້າຢ່າງບໍ່ຕ້ອງສົງໄສ, ແລະດ້ວຍເຫດນີ້ພວກເຮົາຈຶ່ງສວດອ້ອນວອນໃຫ້ຈິດວິນຍານ ທີ່ຈາກໄປແລ້ວຈະເລີນກ້າວໜ້າ, ໄດ້ຮັບການອະໄພ, ຫຼືໃຫ້ເປັນຜູ້ຮັບຄວາມປານີ, ພຣະກະລຸນາ ແລະພຣະເມດຕາແຫ່ງສະຫວັນ. ນັ້ນຄືເຫດຜົນທີ່ໃນບົດອະທິຖານຂອງ ພຣະບາຮາອຸລລາຫ໌, ຈຶ່ງມີການວິງວອນຂໍການໃຫ້ອະໄພ ແລະ ການຍົກໂທດຂອງພຣະຜູ້ເປັນເຈົ້າ ສຳລັບຜູ້ທີ່ໄດ້ຂຶ້ນໄປສູ່ໂລກໜ້າ. ຍິ່ງໄປກວ່ານັ້ນ, ເຊັ່ນດຽວກັບຜູ້ທີ່ຕ້ອງການພຣະຜູ້ເປັນເຈົ້າໃນໂລກນີ້, ຜູ້ທີ່ຢູ່ໃນໂລກໜ້າກໍຕ້ອງການພຣະອົງເຊັ່ນດຽວກັນ. ສັບພະສິ່ງສ້າງສັນທັງຫຼາຍນັ້ນມີຄວາມຕ້ອງການພຣະຜູ້ເປັນເຈົ້າຕະຫຼອດໄປ, ແລະ ພຣະຜູ້ເປັນເຈົ້າຊົງເປັນອິດສະຫຼະຢ່າງສົມບູນຢູ່ສະເໝີຈາກສັບພະສິ່ງເຫຼົ່ານີ້, ບໍ່ວ່າໃນໂລກນີ້ ຫຼື ໃນໂລກໜ້າກໍຕາມ."[26]

ເປັນຫຍັງພວກເຮົາຈຶ່ງຄວນອະທິດຖານໃຫ້ແກ່ຈິດວິນຍານຂອງຜູ້ທີ່ຈາກໄປແລ້ວ? ______

______________________________________________

______________________________________________

______________________________________________

______________________________________________

______________________________________________

## ຕອນທີ 20

ພຣະອັບດຸລບາຮາອະທິບາຍວ່າ:

"ເມື່ອຈິດວິນຍານຂອງມະນຸດທະຍານອອກຈາກກາຍທຸລີຊົ່ວຄາວນີ້ ແລະ ຂຶ້ນໄປສູ່ໂລກຂອງພຣະຜູ້ເປັນເຈົ້າ, ເມື່ອນັ້ນມ່ານທີ່ປິດກັ້ນທັງຫຼາຍກໍຈະສະຫຼາຍໄປ, ແລະ ຄວາມຈິງທັງຫຼາຍຈະເປັນທີ່ປະກົດ ແລະ ທຸກສິ່ງທີ່ບໍ່ເຄີຍຮູ້ມາກ່ອນຈະເປັນທີ່ກະຈ່າງແຈ້ງ, ແລະ ສັດຈະທັມທີ່ເຊື່ອງຊ້ອນຢູ່ກໍຈະເປັນທີ່ເຂົ້າໃຈ."

"ຈົ່ງພິຈາລະນາເບິ່ງວ່າ ການມີຊີວິດໃນໂລກຂອງແຫຼ່ງກຳເນີດໃນທ້ອງແມ່ນັ້ນ ຫູໜວກ, ຕາບອດ ແລະ ລີ້ນເປັນໃບ້ ເປັນແນວໃດ; ເຂົາສູນເສຍການຮັບຮູ້ໃດໆທັງໝົດ. ແຕ່ເມື່ອອອກ

ຈາກໂລກແຫ່ງຄວາມມືດມົນ, ເຂົາໄດ້ຜ່ານເຂົ້າມາໃນໂລກແຫ່ງແສງສະຫວ່າງນີ້, ແລ້ວຕາຂອງເຂົາກໍເບິ່ງເຫັນ, ຫູຂອງເຂົາກໍໄດ້ຍິນ, ລີ້ນຂອງເຂົາກໍເວົ້າໄດ້. ໃນທຳນອງດຽວກັນ, ເມື່ອເຂົາຮີບອອກຈາກສະຖານທີ່ແຫ່ງຄວາມຕາຍນີ້ ໄປສູ່ອານາຈັກຂອງພຣະຜູ້ເປັນເຈົ້າ, ແລ້ວເຂົາກໍຈະບັງເກີດຂຶ້ນໃໝ່ທາງຈິດວິນຍານ; ຈາກນັ້ນ, ດວງຕາແຫ່ງການຮັບຮູ້ຂອງເຂົາກໍຈະເປີດຂຶ້ນ, ຫູທາງຈິດວິນຍານຂອງເຂົາກໍຈະຟັງ ແລະ ສັດຈະທັມທັງໝົດທີ່ເຂົາບໍ່ຮູ້ມາກ່ອນຈະຖືກເຮັດໃຫ້ກະຈ່າງແຈ້ງ ແລະ ຊັດເຈນ."[27]

1. ກະລຸນາເຕີມຄຳລົງໃນບ່ອນຫວ່າງຂ້າງລຸ່ມນີ້:

   ກ. ເມື່ອຈິດວິນຍານຂອງມະນຸດຈາກໂລກນີ້ໄປແລ້ວ
   - ມ່ານທີ່ປິດກັ້ນ ________________________,
   - ແລະ ສັດຈະທັມ ____________________________,
   - ແລະ ທຸກສິ່ງທີ່ບໍ່ເຄີຍຮູ້ມາກ່ອນ ______________________,
   - ແລະ ສັດຈະທັມທີ່ເຊື່ອງຊ້ອນ ________________________.

   ຂ. ໃນໂລກ __________, ພວກເຮົາຫູ _______, ຕາ _______, ແລະ ລີ້ນ _________.

   ຄ. ເມື່ອເຮົາໄດ້ເກີດຂຶ້ນໃນໂລກນີ້, ແລ້ວຕາຂອງເຮົາ __________, ຫູຂອງເຮົາ ________, ແລະ ລີ້ນຂອງເຮົາ _______.

   ງ. ໃນທຳນອງດຽວກັນ, ເມື່ອພວກເຮົາໄປສູ່ອານາຈັກຂອງພຣະຜູ້ເປັນເຈົ້າ, ພວກເຮົາກໍຈະ ___________ທາງ _______.

   ຈ. ຈາກນັ້ນດວງຕາ ______________________ຂອງພວກເຮົາຈະ _________, ຫູທາງ _______ຂອງເຮົາຈະ ________ ແລະ ______ ທັງໝົດທີ່ເຂົາບໍ່ຮູ້ມາກ່ອນຈະຖືກເຮັດໃຫ້ ______ ແລະ ______.

2. ຂໍໃຫ້ເລືອກວ່າຂໍ້ຄວາມຕໍ່ໄປນີ້ອັນໃດຖືກຕ້ອງ:

   _____ ເມື່ອພວກເຮົາຢູ່ໃນໂລກຂອງແຫຼ່ງກຳເນີດໃນທ້ອງແມ່, ພວກເຮົາກໍຮູ້ກ່ຽວກັບໂລກນີ້.

   _____ ໃນຊີວິດນີ້ຂອງພວກເຮົາ, ສະພາບຫຼັງຄວາມຕາຍຂອງພວກເຮົາແມ່ນສັດຈະທັມ ທີ່ຖືກເຊື່ອງຊ້ອນຢູ່.

   _____ ຂອບຟ້າໃໝ່ທັງໝົດຈະເປີດຕໍ່ໜ້າເຮົາຫຼັງຈາກຄວາມຕາຍ.

   _____ ເມື່ອເຮົາຕາຍແລ້ວເຮົາກໍກັບມາເກີດໃນໂລກນີ້ອີກຄັ້ງ.

## ຕອນທີ 21

ພຣະບາຮາອຸລລາຫ໌ຊົງດຳລັດວ່າ:

"ແລະມາເຖິງຕອນນີ້ ກ່ຽວກັບຄຳຖາມຂອງເຈົ້າທີ່ວ່າ ພາຍຫຼັງແຍກອອກຈາກຮ່າງກາຍ, ຈິດວິນຍານຂອງມະນຸດຍັງຄົງຮູ້ຈັກຈິດວິນຍານດວງອື່ນໆບໍ່. ເຈົ້າຈົ່ງຮູ້ໄວ້ວ່າ ຈິດວິນຍານຂອງປະຊາຊົນແຫ່ງບາຮາ, ຜູ້ທີ່ເຂົ້າມາ ແລະ ໄດ້ຮັບການສະຖາປະນາໄວ້ພາຍໃນມະຫານາວາແຫ່ງສາສະໜາ, ຈະເຊື່ອມໂຍງ ແລະ ສະໜິດສະໜົມເປັນກັນເອງກັບຄົນອື່ນ, ແລະ ຈະມີຄວາມສຳພັນຢ່າງໃກ້ຊິດໃນການດຳລົງຊີວິດຂອງພວກເຂົາ, ຄວາມປາດຖະໜາຂອງພວກເຂົາ, ຈຸດມຸ່ງໝາຍ ແລະ ການສູ້ຊົນຂອງພວກເຂົາ ຄືກັບເປັນຈິດວິນຍານດວງດຽວກັນ. ແທ້ຈິງແລ້ວ, ພວກເຂົາເປັນຄົນທີ່ຮອບຮູ້, ຜູ້ມີສາຍຕາທີ່ແຫຼມຄົມ, ແລະ ໄດ້ຮັບການປະສິດປະສາດດ້ວຍຄວາມເຂົ້າໃຈ. ດັ່ງນັ້ນ, ຈຶ່ງໄດ້ຮັບການບັນຊາຈາກ ພຣະຜູ້ເປັນເຈົ້າ, ພຣະຜູ້ຊົງຮອບຮູ້ທຸກສິ່ງ, ພຣະຜູ້ຊົງປີຊາຍານ."

"ປະຊາຊົນແຫ່ງບາຮາ, ແມ່ນເປັນຜູ້ອາໄສຢູ່ໃນມະຫານາວາຂອງພຣະຜູ້ເປັນເຈົ້າ, ທຸກຄົນລ້ວນເປັນອັນໜຶ່ງອັນດຽວກັນ, ຮັບຮູ້ເຖິງສະຖານະ ແລະ ສະພາບຂອງກັນແລະກັນເປັນຢ່າງດີ, ແລະ ຖືກໂຮມເຂົ້າກັນດ້ວຍພັນທະນາການແຫ່ງຄວາມສະໜິດສະໜົມ ແລະ ມິດຕະພາບ. ຢ່າງໃດກໍຕາມ, ສະພາບເຊັ່ນນີ້ຕ້ອງຂຶ້ນຢູ່ກັບ ຄວາມສັດທາ ແລະ ຄວາມປະພຶດຂອງພວກເຂົາ. ພວກເຂົາຜູ້ຢູ່ໃນລະດັບ ແລະ ສະຖານະດຽວກັນແມ່ນຮັບຮູ້ເຖິງ ຂີດຄວາມສາມາດ, ຄຸນລັກສະນະ, ຄວາມສຳເລັດ ແລະ ຄຸນງາມ ຄວາມດີຂອງກັນແລະ ກັນເປັນຢ່າງດີ. ຢ່າງໃດກໍຕາມ, ພວກເຂົາຜູ້ທີ່ຢູ່ໃນລະດັບຕ່ຳກວ່ານັ້ນ, ບໍ່ສາມາດເຂົ້າໃຈສະຖານະນີ້ໄດ້ຢ່າງພຽງພໍ, ຫຼື ປະເມີນຄຸນງາມຄວາມດີຂອງຜູ້ທີ່ຢູ່ໃນລະດັບທີ່ສູງກວ່າ. ພວກເຂົາແຕ່ລະຄົນຈະໄດ້ຮັບສ່ວນແບ່ງຂອງເຂົາຈາກພຣະຜູ້ເປັນນາຍຂອງເຈົ້າ. ພຣະພອນຈົ່ງມີແດ່ຜູ້ທີ່ໄດ້ຫັນໜ້າເຂົ້າຫາພຣະຜູ້ເປັນເຈົ້າ, ແລະ ກ້າວຢ່າງຢ່າງໝັ້ນຄົງໃນ ຄວາມຮັກຂອງພຣະອົງ, ຈົນກະ ທັ້ງຈິດວິນຍານຂອງເຂົາໂບກບິນໄປຫາພຣະຜູ້ເປັນເຈົ້າ, ພຣະຜູ້ຍິ່ງໃຫຍ່ທີ່ສຸດ, ພຣະຜູ້ຊົງອຳນາດສູງສຸດ, ພຣະຜູ້ຊົງອະໄພຕະຫຼອດການ, ພຣະຜູ້ຊົງເມດຕາປານີ."[28]

1. ໃນໂລກໜ້າພວກເຮົາຈະຈົດຈຳຜູ້ຄົນທີ່ພວກເຮົາຮູ້ຈັກຢູ່ໃນໂລກນີ້ໄດ້ບໍ່? ____________

2. ຄວາມສຳພັນລະຫວ່າງວິນຍານດ້ວຍກັນໃນໂລກໜ້າຈະໃກ້ຊິດກັນແນວໃດ? _________

______________________________________________

3. ຄວາມແຕກຕ່າງ ແລະ ຄວາມໂດດເດັ່ນຂອງວິນຍານໃນໂລກໜ້າແມ່ນຂຶ້ນກັບ ສິ່ງໃດ? _

______________________________________________

______________________________________________

4. ມີຜູ້ໃດບໍ່ທີ່ຖືກພາກອອກຈາກພຣະເມດຕາຂອງພຣະຜູ້ເປັນເຈົ້າ? ________________

## ຕອນທີ 22

ພຣະບາຮາອຸລລາຫ໌ຊົງຕັກເຕືອນພວກເຮົາວ່າ:

**"ໂອ ຄົນຮັບໃຊ້ຂອງເຮົາ! ຢ່າໄດ້ເສົ້າໂສກເສຍໃຈຫາກວ່າໃນວັນເຫຼົ່ານີ້ ແລະໃນໂລກແຫ່ງນີ້, ສິ່ງທີ່ເປັນໄປຕາມທີ່ພຣະຜູ້ເປັນເຈົ້າຊົງກຳນົດ ແລະ ສະແດງໃຫ້ປະກົດ ຂັດແຍ້ງກັບຄວາມປາດຖະໜາຂອງເຈົ້າ, ເພາະວັນແຫ່ງຄວາມສຸກສັນ ແລະ ຄວາມປິຕິຍິນດີແຫ່ງສະຫວັນກຳລັງລໍຖ້າເຈົ້າຢູ່ຢ່າງແນ່ນອນ. ພົບທັງຫຼາຍທີ່ສັກສິດ ແລະ ຮຸ່ງເຮືອງສູງສົ່ງຈະເປີດເຜີຍຕໍ່ສາຍຕາຂອງເຈົ້າ. ໃນພົບນີ້ ແລະ ພົບໜ້າ, ພຣະອົງຊົງກຳນົດໃຫ້ເຈົ້າໄດ້ຮັບຄຸນປະໂຫຍດ, ຄວາມມ່ວນຊື່ນ, ແລະ ໄດ້ຮັບສ່ວນແບ່ງຈາກຄຸນນະທັມທີ່ຄ້ຳຊູ, ເຈົ້າຈະບັນລຸເຖິງທຸກສິ່ງ ຢ່າງບໍ່ຕ້ອງສົງໄສ."**[29]

1. ຂໍໃຫ້ເລືອກຂໍ້ຄວາມຕໍ່ໄປນີ້ວ່າອັນໃດຖືກຕ້ອງ:
   _____ ເຮົາຄວນເສົ້າໂສກເມື່ອສິ່ງຕ່າງໆບໍ່ເປັນໄປຕາມທີ່ເຮົາຕ້ອງການ.
   _____ ທຸກສິ່ງບໍ່ວ່າຈະດີຫຼືຮ້າຍ, ຖືກກຳນົດໄວ້ໂດຍພຣະຜູ້ເປັນເຈົ້າ.
   _____ ວັນແຫ່ງຄວາມສຸກສັນກຳລັງລໍຖ້າພວກເຮົາທຸກຄົນຢູ່.
   _____ ແນ່ນອນວ່າພວກເຮົາຈະໄດ້ເຫັນພົບອື່ນໆ ທີ່ມີຄວາມສັກສິດຮຸ່ງເຮືອງ ແລະ ສູງສົ່ງທາງຈິດວິນຍານ.

2. ເປັນຫຍັງເຮົາຈຶ່ງບໍ່ຄວນເສົ້າໂສກເສຍໃຈ ເມື່ອສິ່ງຕ່າງໆທີ່ຂັດກັບຄວາມປາດຖະໜາຂອງເຮົາເກີດຂຶ້ນ? ______________________________

______________________________________________

______________________________________________

______________________________________________

3. ແມ່ນຫຍັງຄືຄຳໝັ້ນສັນຍາທີ່ພຣະບາຮາອຸລລາຫ໌ຊົງໃຫ້ໄວ້ແກ່ມະນຸດໃນພຣະທັມມະລິຂິດຕອນນີ້? ______________________________

______________________________________________

______________________________________________

______________________________________________

## ຕອນທີ 23

ໃນຫຼັກສູດນີ້ເຈົ້າໄດ້ສຶກສາ ແລະ ພິຈາລະນາກ່ຽວກັບຄວາມໝາຍທີ່ແທ້ຈິງຂອງຊີວິດມະນຸດ. ເຈົ້າໄດ້ຮຽນຮູ້ຫຼວງຫຼາຍກ່ຽວກັບທັມມະຊາດຂອງຈິດວິນຍານ, ຈຸດປະສົງຂອງຊີວິດໃນໂລກນີ້, ຄວາມຈຳເປັນທີ່ຈະຕ້ອງພັດທະນາຄຸນນະທັມ, ແລະລວມທັງຄຳໝັ້ນສັນຍາທີ່ໃຫ້ໄວ້ກັບ ພວກເຮົາກ່ຽວກັບຊີວິດນິລັນດອນ, ທີ່ເຕັມໄປດ້ວຍຄວາມຮຸ່ງເຮືອງ ແລະ ເຕັມໄປດ້ວຍຄວາມປິຕິຍິນດີ. ໃນພາກທີສອງຂອງປຶ້ມເຫຼັ້ມນີ້, ພວກເຮົາໄດ້ເວົ້າເຖິງຈຸດປະສົງທາງສິລະທັມສອງປະການ ເພື່ອເອົາໃຈໃສ່ຕໍ່ການຈະເລີນເຕີບໂຕທາງຈິດວິນຍານ ແລະ ສະຕິປັນຍາ, ແລະ ເພື່ອສະໜັບສະໜູນການປ່ຽນແປງຂອງສັງຄົມ. ນີ້ຄືໂອກາດທີ່ຈະກັບໄປສູ່ແນວຄິດນັ້ນ ແລະ ນຶກເຖິງຄວາມສຳຄັນຂອງການເຂົ້າຮ່ວມໃນຈຸດປະສົງທັງສອງດ້ານນີ້, ໂດຍພິຈາລະນາຈາກຄວາມຢັ່ງຮູ້ທີ່ເຈົ້າໄດ້ຮັບກ່ຽວກັບຄວາມຈະເລີນກ້າວໜ້າຂອງຈິດວິນຍານ. ການໄຕ່ຕອງຂອງເຈົ້າອາດໄດ້ຮັບປະໂຫຍດ ຈາກການອະພິປາຍກ່ຽວກັບຫົວຂໍ້ຂ້າງລຸ່ມນີ້ໃນກຸ່ມຂອງເຈົ້າ.

1. *ການພັດທະນາຄຸນລັກສະນະທາງຈິດວິນຍານ*
2. *ການປະຕິບັດຕາມກົດຕ່າງໆຂອງພຣະຜູ້ເປັນເຈົ້າ*
3. *ການສະໜັບສະໜູນຄວາມຜາສຸກຂອງເຜົ່າພັນມະນຸດ*
4. *ຄວາມກ້າວໜ້າໃນຫົນທາງແຫ່ງການຮັບໃຊ້*

## ໜັງສືອ້າງອີງ:


1. ຈາກຄຳກ່າວປາໄສໃນວັນທີ 10 ພະຈິກ 1911, ພິມເຜີຍແຜ່ລົງໃນປຶ້ມ *ສູນທອນພົດທີ່ນະຄອນປາຣີ: ຈາກຄຳກ່າວປາໄສໂດຍພຣະອັບດຸລບາຮາ ປີ 1911* (Wilmette: Bahá'í Publishing, ຈັດພິມປີ 2006, 2016), ເລກທີ 29.12–13, ວັກທີ 109.
2. ຈາກຈົດໝາຍລົງວັນທີ 1 ເມສາ 1946 ຂຽນໂດຍ ທ່ານ ໂຊເກ ເອັບເຟັນດີ, ພິມເຜີຍແຜ່ລົງໃນປຶ້ມ *Lights of Guidance: A Bahá' Reference File* (New Delhi: Bahá'í Publishing Trust, ຈັດພິມປີ 1988, 2010), ເລກທີ 1820, ພາສາອັງກິດໜ້າທີ 537.
3. ຈາກຈົດໝາຍລົງວັນທີ 28 ກໍລະກົດ 2016 ຂຽນໂດຍສະພາຍຸຕິທັມແຫ່ງສາກົນ.
4. ພຣະອັບດຸລບາຮາ, ໃນປຶ້ມ *Some Answered Questions* (Wilmette: Bahá'í Publishing, ຈັດພິມປີ 2014, 2016), ເລກທີ 66.3, ພາສາອັງກິດໜ້າທີ 352–53.
5. ພຣະອັບດຸລບາຮາ, ໃນປຶ້ມ *Some Answered Questions* (Wilmette: Bahá'í Publishing, ຈັດພິມປີ 2014, 2016), ເລກທີ 38.5, ພາສາອັງກິດໜ້າທີ 220.
6. ຈາກຄຳກ່າວປາໄສໂດຍພຣະອັບດຸລບາຮາ, ລົງວັນທີ 9 ພະຈິກ 1911, ພິມເຜີຍແຜ່ລົງໃນປຶ້ມ *ສູນທອນພົດທີ່ນະຄອນປາຣີ*, ເລກທີ 28.16, ພາສາອັງກິດໜ້າທີ 104.
7. ຈາກຈົດໝາຍລົງວັນທີ 31 ທັນວາ 1937 ຂຽນໂດຍ ທ່ານ ໂຊເກ ເອັບເຟັນດີ, ພິມເຜີຍແຜ່ລົງໃນປຶ້ມ *Lights of Guidance*, ເລກທີ 680, ພາສາອັງກິດໜ້າທີ 204.
8. *ປະມວນພຣະທັມຈາກພຣະທັມມະລິຂິດຂອງພຣະບາຮາອຸລລາຫ໌*, (Wilmette: Bahá'í Publishing Trust, ຈັດພິມປີ 1983, 2017), LXXXII, ວັກທີ 8, ພາສາອັງກິດໜ້າທີ 183.
9. ພຣະອັບດຸລບາຮາ, ໃນປຶ້ມ *Some Answered Questions*, ເລກທີ 61.1–2, ພາສາອັງກິດໜ້າທີ 334.
10. *ປະມວນພຣະທັມຈາກພຣະທັມມະລິຂິດຂອງພຣະບາຮາອຸລລາຫ໌*, LXXX, ວັກທີ 2, ພາສາອັງກິດໜ້າທີ 174.
11. *ປະມວນພຣະທັມຈາກພຣະທັມມະລິຂິດຂອງພຣະບາຮາອຸລລາຫ໌*, LXXXI, ວັກທີ 1, ພາສາອັງກິດໜ້າທີ 176.
12. *ປະມວນພຣະທັມຈາກພຣະທັມມະລິຂິດຂອງພຣະບາຮາອຸລລາຫ໌*, CLXV, ວັກທີ 1–3, ພາສາອັງກິດໜ້າທີ 391–92.
13. ພຣະບາຮາອຸລລາຫ໌, ໃນປຶ້ມ *ພຣະວັດຈະນະແຫ່ງຄວາມລີ້ລັບ* (Wilmette: Bahá'í Publishing Trust, ຈັດພິມປີ 2003, 2012), ພາສາອາຫຣັບ ເລກທີ 32, ພາສາອັງກິດໜ້າທີ 11.
14. ຈາກຄຳກ່າວປາໄສ ໃນວັນທີ 6 ກໍລະກົດ 1912, ພິມເຜີຍແຜ່ລົງໃນປຶ້ມ *The Promulgation of Universal Peace: ຈາກຄຳກ່າວປາໄສໂດຍ ພຣະອັບດຸລບາຮາ ໃນ*

*ຊ່ວງທີ່ທ່ານຢ້ຽມຢາມສະຫະລັດອາເມຣິກາ ແລະ ການາດາ ໃນປີ 1912* (Wilmette: Bahá'í Publishing, 2012), ພາສາອັງກິດໜ້າທີ 315–16. (authorized translation)

15. *ປະມວນພຣະທັມຈາກພຣະທັມມະລິຂິດຂອງພຣະບາຮາອຸລລາຫ໌*, V, ວັກທີ 4, ພາສາອັງກິດໜ້າທີ 8.
16. *ປະມວນພຣະທັມຈາກພຣະທັມມະລິຂິດຂອງພຣະບາຮາອຸລລາຫ໌*, LXXXII, ວັກທີ 1, ພາສາອັງກິດໜ້າທີ 179–80.
17. *ປະມວນພຣະທັມຈາກພຣະທັມມະລິຂິດຂອງພຣະບາຮາອຸລລາຫ໌*, CLIII, ວັກທີ 6, ພາສາອັງກິດໜ້າທີ 370–71.
18. *ປະມວນພຣະທັມຈາກພຣະທັມມະລິຂິດຂອງພຣະບາຮາອຸລລາຫ໌*, XXVII, ວັກທີ 2, ພາສາອັງກິດໜ້າທີ 72–73.
19. *ປະມວນພຣະທັມຈາກພຣະທັມມະລິຂິດຂອງພຣະບາຮາອຸລລາຫ໌*, XXVII, ວັກທີ 3, ພາສາອັງກິດໜ້າທີ 73.
20. *ປະມວນພຣະທັມຈາກພຣະທັມມະລິຂິດຂອງພຣະບາຮາອຸລລາຫ໌*, XXI, ວັກທີ 1, ພາສາອັງກິດໜ້າທີ 54–55.
21. *ປະມວນພຣະທັມຈາກພຣະທັມມະລິຂິດຂອງພຣະບາຮາອຸລລາຫ໌*, LXXXI, ວັກທີ 1, ພາສາອັງກິດໜ້າທີ 177.
22. *ປະມວນພຣະທັມຈາກພຣະທັມມະລິຂິດຂອງພຣະບາຮາອຸລລາຫ໌*, CXXII, ວັກທີ 1, ພາສາອັງກິດໜ້າທີ 293–94.
23. *ປະມວນພຣະທັມຈາກພຣະທັມມະລິຂິດຂອງພຣະບາຮາອຸລລາຫ໌*, LXXXII, ວັກທີ 7, ພາສາອັງກິດໜ້າທີ 182.
24. *ປະມວນພຣະທັມຈາກພຣະທັມມະລິຂິດຂອງພຣະບາຮາອຸລລາຫ໌*, LXXXI, ວັກທີ 1, ພາສາອັງກິດໜ້າທີ 176–77.
25. *ປະມວນພຣະທັມຈາກພຣະທັມມະລິຂິດຂອງພຣະບາຮາອຸລລາຫ໌*, CXXV, ວັກທີ 3, ພາສາອັງກິດໜ້າທີ 300–1.
26. ພຣະອັບດຸລບາຮາ, ໃນປຶ້ມ *Some Answered Questions*, ເລກທີ 62.3, ພາສາ ອັງກິດໜ້າທີ 340–41.
27. *ຄັດຈາກທັມມະລິຂິດຂອງພຣະອັບດຸລບາຮາ* (Wilmette: Bahá'í Publishing, ຈັດພິມປີ 2010, 2015), ເລກທີ 149.3–4, ພາສາອັງກິດໜ້າທີ 246–47.
28. *ປະມວນພຣະທັມຈາກພຣະທັມມະລິຂິດຂອງພຣະບາຮາອຸລລາຫ໌*, LXXXVI, ວັກທີ 1–2, ພາສາອັງກິດໜ້າທີ 192–93.
29. *ປະມວນພຣະທັມຈາກພຣະທັມມະລິຂິດຂອງພຣະບາຮາອຸລລາຫ໌*, CLIII, ວັກທີ 9, ພາສາອັງກິດໜ້າທີ 373.

**********************